# ຄວາມຊ່ວຍເຫລືອຫລັງໄພພິບັດ

## ຄູ່ມືແນະນຳໃຫ້ຜູ້ສະມັກ ແລະ ຄົວເຮືອນ

*FEMA 545 / ເດືອນ ມິຖຸນາ 2008*

Applicant's Guide to Individuals & Households Program – Laotian 7/08



ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (Federal Emergency Management Agency – FEMA) ພາຍໃຕ້ອຳນາດນິຕິກຳພາກສ່ວນ 408 ໂຣເບີດ ທີ ສະແຕຟຟອດ ວ່າດ້ວຍການຫລຸດຜ່ອນໄພພິບັດ ແລະ ຊ່ວຍເຫລືອໄພສຸກເສີນ (Rebert T. Stafford Disater Relief and Emergency Assistance Act), 42 U.S.C. §5174 ແລະ ຂໍ້ 44 ຂອງກົດລະບຽບລັດຖະ ບານກາງ (Code of Federal Regulations – CFR) ຈະໃຫ້ຄວາມຊ່ວຍເຫລືອທາງການເງິນ, ຖ້າຈຳເປັນ, ໂດຍກົງແກ່ ບຸກຄົນ ແລະ ຄົວເຮືອນທີ່ມີສິດ ເພາະເປັນຜູ້ທີ່ເປັນເຫຍື່ອເຄາະຮ້າຍຈາກໄພພິບັດໃຫຍ່ ເຊິ່ງສາມາດໄດ້ຮັບຄ່າໃຊ້ຈ່າຍທີ່ຈຳເປັນ ແລະສິ່ງຈຳເປັນທີ່ສຳຄັນ ເຊິ່ງພວກເຂົາບໍ່ສາມາດຈ່າຍຄ່າໃຊ້ຈ່າຍ ຫລື ໄດ້ຮັບສິ່ງຈຳເປັນໂດຍວິທີ່ອື່ນໆ

ເຖິງ ທ່ານຜູ້ມັກ:

ໂດຍເປັນສ່ວນຫນຶ່ງຂອງຄວາມພະຍາຍາມຂອງພວກເຮົາຕະຫລອດມາ, ເຮົາໄດ້ໃຫ້ປຶ້ມນ້ອຍທີ່ນີ້ ເຊິ່ງຈະເປັນການສິ່ງຂ່າວສານໃຫ້ຈະແຈ້ງຂຶ້ນຕື່ມກ່ຽວກັບ ເງື່ອນໄຂຄວາມຕ້ອງການ, ເອກະສານ ແລະ ຂັ້ນຕອນຕ່າງໆ ຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (Individual and Households Program – IHP). ສໍາຫລັບຄໍາຖາມສະເພາະກ່ຽວກັບໄພພິບັດ, ຈະເປັນສິ່ງທີ່ດີທີ່ສຸດຖ້າທ່ານເຂົ້າໄປຢ້ຽມຊົມເວັບໃຊ້ຂອງເຮົາ www.fema.gov ຫລື ຕິດຕໍ່ສາຍດ່ວນ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) (Helpline) ເບີ 1-800-621-3362 (FEMA) (TTY 1-800-462-7585 ສໍາຫລັບຜູ້ທີ່ມີຄວາມບົກຜ່ອງໃນການຮັບຟັງ).

ເພື່ອຕອບສະຫນອງກົດຫມາຍນິຕິກໍາການປະຕິຮູບການຄວບຄຸມໄພສຸກເສີນຫລັງ ພະຍຸແຄທຼີນາ (Post Katrina Emergency Management Reform Act) ປີ 2006, ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແມ່ນຂັ້ນຕອນຫນຶ່ງໃນການປັບປຸງນະໂຍບາຍ ແລະ ໂຄງການຂອງພວກເຮົາທີ່ໃຫ້ລວມມີ ພະນັກງານເຈົ້າຫນ້າທີ່ໃຫມ່ ແຕ່ງເຂົ້າເຮັດວຽກຢູ່ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໂດຍສະພາແຫ່ງຊາດ. ຫລັງຈາກນະໂຍບາຍ ແລະ ຂັ້ນຕອນໄດ້ຈັດເປັນລະບົບລະບຽບແລ້ວ, ຫນັງສືຄູ່ມືຜູ້ສະມັກສະບັບນີ້ໄດ້ຮັບການປັບປຸງ ແລະ ສາມາດມີໃຫ້ປະຊາຊົນໃນ ເວັບໃຊ້ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຢູ່ໃນສູນຫລຸດຜ່ອນໄພພິບັດ, ແລະສິ່ງຕາມຈົດຫມາຍສໍາຫລັບຜູ້ສະມັກມາທາງໂທລະສັບ ຫລື ອອນລາຍ.

ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແມ່ນອອກແບບມາເພື່ອຕອບສະຫນອງຄວາມຕ້ອງການ ແລະ ຊວ່ຍເຫລືອບຸກຄົນ ແລະ ຄົວເຮືອນຂອງເຂົາເຈົ້າ ໃນການເລີ່ມຕົ້ນບາດກ້າວທໍາອິດຕໍ່ການບັນເທົາໄພພິບັດ. ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ບໍ່ໄດ້ອອກແບບມາເພື່ອຈະເຮັດໃຫ້ ເຮືອນເຮືອນ ແລະ ຊັບສິນຂອງທ່ານກັບມາເປັນສະພາບປົກກະຕິຄືກ່ອນໄພພິບັດ.

ພວກເຮົາຫວັງວ່າຈະໄດ້ເປັນຫຸ້ນສ່ວນກັບທ່ານໃນຂັ້ນຕອນການຊ່ວຍເຫລືອທ່ານ ແລະ ຊ່ວຍສ້າງຊຸມຊົນຂອງທ່ານຄືນໃຫມ່ ຫລັງຈາກໄພພິບັດ.

ດ້ວຍຄວາມນັບຖື,

ຫ້ອງການຜູ້ອໍານວຍການການຊ່ວຍເຫລືອໄພພິບັດ

FEMA

# ສາລະບານ


ພາບລວມຂອງໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ....................................1

ປະເພດການຊ່ວຍເຫລືອ...........................................................................2

ສິດທິພົນລະເຮືອນ ແລະ ການຊ່ວຍເຫລືອໄພພິບັດ ................................................2

ຂັ້ນຕອນການຊ່ວຍເຫລືອໄພພິບັດ ....................................................................3

ສິດທີ່ຈະໄດ້ຮັບເລືອກຂອງໂຄງການ.................................................................5

ປະເພດຄ່າເສຍຫາຍທີ່ໄດ້ຮັບການຊ່ວຍເຫລືອ ........................................................6

ຂໍ້ມູນຂ່າວສານທີ່ສຳຄັນກ່ຽວກັບການຊ່ວຍເຫລືອໄພພິບັດ..........................................8

ຖ້າທ່ານໄດ້ຮັບສິດທີ່ຈະໄດ້ຮັບການຊ່ວຍເຫລືອ ......................................................8

ຂໍ້ມູນກ່ຽວກັບ ການປະກັນໄພ ແລະ ການຊ່ວຍເຫລືອໄພພິບັດ................................10

ຂ້ອຍຕ້ອງການໃຫ້ກໍລະນີຂອງຂ້ອຍໄດ້ຮັບການທົບທວນອີກເທື່ອໜຶ່ງ (ຂໍອຸທອນ) ........11

ສ້າງໃໝ່ ແລະ ສ້ອມແປງ - ມາດຕະການບັນເທົາຄວາມເສຍຫາຍ.........................13

ຂໍ້ມູນກ່ຽວກັບໂຄງການຊ່ວຍເຫລືອໄພພິບັດເພີ່ມເຕີມ..............................................13

ຄຳຖາມ ແລະ ຄຳຕອບ ທີ່ຖືກຖາມເລື້ອຍໆ .......................................................17

ອະທິບາຍເຫດຜົນທີ່ບໍ່ໄດ້ຮັບສິດ......................................................................24

ຕົວຢ່າງຂອງຟອມ ແຈ້ງປະກາດ ແລະ ຟອມປົດປ່ອຍ FEMA 90-69B..................32

ສາຍດ່ວນ FEMA .......................................................................................30

# ພາບລວມຂອງໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP)

**ຈຸດປະສົງ:** ເມື່ອມີໄພພິບັດ, **ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ** (Individual and Households Program – IHP) ຈະສະໜອງທັງເງິນ ແລະ ການບໍລິການຕ່າງໆໃຫ້ແກ່ ປະຊາຊົນໃນຂົງເຂດທີ່ມີໄພພິບັດ ເຊິ່ງຄວາມເສຍຫາຍຕ່າງໆ ທີ່ບໍ່ສາມາດ ຈ່າຍໝົດ ຈາກບ້ວງວງກປະກັນໄພ ແລະ ຊັບສິນກໍ່ໄດ້ເສຍຫາຍ ແລະ ຖືກທຳລາຍ.

ຄູ່ມືໂຄງການນີ້ສາມາດໃຫ້ຂໍ້ມູນເຊິ່ງຈະຊ່ວຍທ່ານໃຫ້ເຂົ້າໃຈກ່ຽວກັບ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ແລະ ອະທິບາຍວິທີສະມັກ. ທ່ານຕ້ອງມີເງື່ອນໄຂສະເພາະ ຈຶ່ງຈະສາມາດຮັບການຊ່ວຍເຫລືອໄດ້.

ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ແມ່ນອອກແບບມາເພື່ອຊ່ວຍເຫລືອທ່ານ ດ້ານຄ່າໃຊ້ຈ່າຍທີ່ສຳຄັນເຊິ່ງວິທີອື່ນບໍ່ສາມາດຈ່າຍໄດ້

**ຂໍ້ຈຳກັດຕ່າງໆ**: ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຈະບໍ່ຈ່າຍຕໍ່ຄ່າເສຍຫາຍທັງໝົດຕໍ່ຊັບສິນຂອງທ່ານ (ເຮືອນ, ຊັບສິນສ່ວນຕົວ, ເຄື່ອງໃຊ້ຄົວເຮືອນ) ເຊິ່ງເປັນຜົນມາຈາກໄພພິບັດ.

ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຈະບໍ່ໄດ້ປົວແປງ ເຮືອນເຮືອນ ແລະ ຊັບສິນຂອງທ່ານກັບມາເປັນສະພາບປົກກະຕິກ່ອນໄພພິບັດ. ໃນບາງກໍລະນີ, ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ອາດຈະຈ່າຍເງິນໃຫ້ພຽງພໍໃຫ້ທ່ານເພື່ອປັບປຸງຊັບສິນໃຫ້ເປັນການບໍລິການ, ເຖິງຂີດຈຳກັດຂອງໂຄງການ.

ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຈະບໍ່ຈ່າຍຄ່າເສຍຫາຍຕໍ່ທຸລະກິດທີ່ໄດ້ຮັບຜົນກະທົບຈາກໄພພິບັດ

ຕາມກົດໝາຍ, ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຈະບໍ່ຈ່າຍຄ່າເສຍຫາຍຕໍ່ຊັບສິນເຊິ່ງບໍລິສັດປະກັນໄພຂອງທ່ານເປັນຜູ້ຈ່າຍ

ເຖິງວ່າຈະມີເງິນບາງຈຳນວນຜ່ານ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP), ການຊ່ວຍເຫລືອໄພພິບັດສ່ວນຫລາຍຈາກລັດຖະບານກາງ ແມ່ນເປັນແບບການໃຫ້ຢືມ ຈາກ **ຫ້ອງການປົກຄອງທຸລະກິດຂະຫນາດນ້ອຍ** (Small Business Administration – SBA) ເຊິ່ງຕ້ອງໄດ້ຈ່າຍຄືນ. ຜູ້ສະມັກ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຕ້ອງຊອກຫາການຊ່ວຍເຫລືອຈາກ ຫ້ອງການປົກຄອງທຸລະກິດຂະຫນາດນ້ອຍ (SBA) ກ່ອນທີ່ຈະພິຈາລະນາເຖິງການຊ່ວຍເຫລືອບາງຢ່າງຈາກ ໂຄງການຊ່ວຍເຫລືອບຸກຄົນ ແລະ ຄົວເຮືອນ (IHP). ທ່ານບໍ່ຈຳເປັນສິ່ງຟອມສະມັກຢືມເງິນ ຫ້ອງການປົກຄອງທຸລະກິດຂະຫນາດນ້ອຍ (SBA) ເພື່ອຈະໄດ້ຮັບການພິຈະລະນາການຊ່ວຍເຫລືອເຊົ່າ ຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

# ປະເພດການຊ່ວຍເຫລືອ

**ລາຍການລຸ່ມນີ້ລະບຸເຖິງປະເພດການຊ່ວຍເຫລືອເຊິ່ງມີໃຫ້ຜ່ານ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ແລະ ແຕ່ລະຢ່າງສະຫນອງຫຍັງແດ່.**

**ເຮືອນພັກຊົ່ວຄາວ** (ສະຖານທີ່ອາໄສໄລຍະເວລາຈຳກັດ): ມີເງິນໃຫ້ສຳລັບການເຊົ່າສະຖານທີ່ຕ່າງໆເພື່ອຢູ່ອາໄສ, ຫລືສະຖານທີ່ອາໄສທີ່ລັດຖະບານຈັດກຽມໃຫ້ ເວລາທີ່ບໍ່ມີສະຖານທີ່ເຊົ່າ.

**ສ້ອມແປງ**: ມີເງິນໃຫ້ເຈົ້າຂອງເຮືອນສ້ອມແປງ ບ່ອນເປເພຈາກໄພພິບັດ ທີ່ບໍລິສັດປະກັນໄພບໍ່ຈ່າຍໃຫ້. ເປົ້າຫມາຍແມ່ນເຮັດໃຫ້ເຮືອນທີ່ເສຍຫາຍ ກັບມາປອດໄພ, ມີສຸຂະອານາໄມ, ແລະ ນຳໃຊ້ປະໂຫຍດໄດ້ດີຄືເກົ່າ.

**ການປ່ຽນແທນ**: ມີເງິນໃຫ້ເຈົ້າຂອງເຮືອນປ່ຽນແທນເຮືອນຢູ່ທີ່ຖືກທຳລາຍ ເຊິ່ງບໍລິສັດປະກັນໄພບໍ່ຈ່າຍໃຫ້. ເປົ້າຫມາຍແມ່ນຊ່ວຍເຫລືອເຈົ້າຂອງເຮືອນປ່ຽນແທນເຮືອນທີ່ເສຍຫາຍ.

**ການສ້າງເຮືອນຖາວອນ/ເຄິ່ງຖາກອນ**: ການຊ່ວຍເຫລືອໂດຍກົງ ຫລື ດ້ານການເງິນ ສຳລັບສ້າງເຮືອນ. ປະເພດການຊ່ວຍເຫລືອແບບນີ້ ຈະມີຢູ່ໃນເຂດເກາະ ຫລື ເຂດຫ່າງໄກ ທີ່ກຳນົດໂດຍ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ເຊິ່ງ ການຊ່ວຍເຫລືອສ້າງເຮືອນແບບອື່ນບໍ່ສາມາດເປັນໄປໄດ້.

**ຄວາມຈຳເປັນອື່ນໆ**: ມີເງິນສຳຫລັບເປັນຄ່າໃຊ້ຈ່າຍທີ່ຈຳເປັນ ແລະ ຄວາມຈຳເປັນເລັ່ງດ່ວນ ເກີດຈາກໄພພິບັດ. ນີ້ປະກອບໂດຍ ຄ່າໃຊ້ຈ່າຍທາງແພດ, ປົວແຂ້ວ, ງານສົບ, ຊັບສິນສ່ວນຕົວ, ຄ່າເດີນທາງ, ຍ້າຍເຮືອນ ແລະ ມ້ຽນຝາກເຄື່ອງ ແລະ ຄ່າໃຊ້ຈ່າຍຕ່າງໆ ເຊິ່ງໄດ້ຮັບສິດອຳນາດຈາກກົດຫມາຍ.

# ສິດທິພົນລະເຮືອນ ແລະ ການຊ່ວຍເຫລືອໄພພິບັດ

ນິຕິກຳ ໂຣເບີດ ທີ ສະແຕຟຟອດ ວ່າດ້ວຍການຫລຸດຜ່ອນໄພພິບັດ ແລະ ຊ່ວຍເຫລືອໄພ ສຸກເສີນ ຫລື ນິຕິກຳ ສະແຕຟຟອດ (Robert T. Stafford Disaster Relief and Emergency Assistance Act –

Stafford Act) ແມ່ນກົດຫມາຍທີ່ມອບອຳນາດໃຫ້ມີການຊ່ວຍເຫລືອຈາກລັດຖະບານກາງ ເວລາທີ່ ປະທານາທິບໍດີປະກາດລັດເປັນເຂດໄພພິບັດ. ພາກ 308 ຂອງນິຕິກຳ ສະແຕຟຟອດ ປົກປ້ອງບຸກຄົນ ຈາກ ການຈຳແນກເຊື້ອຊາດ, ຜິວພັນ, ສາດສະຫນາ, ສັນຊາດ, ເພດ, ອາຍຸ ຫລື ຖານະເສດຖະກິດ ໃນ ທຸກໂຄງການ ຊ່ວຍເຫລືອໄພພິບັດ. ພາກ 309 ຂອງນິຕິກຳ ສະແຕຟຟອດ ນຳໃຊ້ເນື້ອໃນການບໍ່ຈຳແນກເຂົ້າ ໃນທຸກອົງການບັນເທົາທຸກສ່ວນບຸກຄົນ ທີ່ເຂົ້າຮ່ວມໃນການຊ່ວຍເຫລືອ ແລະ ບັນເທົາທຸກ.

ນອກຈາກນັ້ນ, ຂໍ້ VI ຂອງນິຕິກຳ ສິດທິພົນລະເຮືອນ (Civil Rights Act) ປີ1964 ກໍ່ປົກປ້ອງບຸກຄົນ ຈາກ ການຈຳແນກ ເຊື້ອຊາດ, ຜິວພັນ, ຫລື ຕົ້ນກຳເນີດຊາດ ໃນບັນດາໂຄງການທີ່ຮັບການຊ່ວຍເຫລືອທາງດ້ານ ການເງິນຈາກລັດຖະບານ. ພາກ 504 ຂອງນິຕິກຳ ການຟື້ນຟູ (Rehabilitation Act) ປີ1973 ແມ່ນ ກົດຫມາຍປະເທດ ທີ່ປົກປ້ອງ ບຸກຄົນພິການ ຈາກການຈຳແນກໃນທຸກໆໂຄງການທີ່ຮັບກອງທຶນຈາກ ລັດຖະບານ ຫລື ດຳເນີນງານ ໂດຍລັດຖະບານ. ພາກ 508 ຂອງກົດຫມາຍທີ່ຫ້າມການຈຳແນກຕໍ່ຄົນພິການ ກ່ຽວຂ້ອງລະບົບເຕັກໂນໂລຊີຂອງລັດຖະບານ.

# ຂັ້ນຕອນການຊ່ວຍເຫລືອໄພພິບັດ

## ໃຊ້ກັບປະຊາຊົນທີ່ຢູ່ເຂດປະກາດໄພພິບັດຈາກ ປະທານາທິບໍດີ

1. ສະມັກຜ່ານອອນລາຍໂດຍເຂົ້າເວັບໃຊ້ *www.fema.gov* ຫລື ໂທລະສັບໂດຍໂທໄປ 1-800-621-3362 (FEMA) (ສຳຫລັບຜູ້ທີ່ບົກຜ່ອງດ້ານການຟັງ/ເວົ້າເທົ່ານັ້ນ -ໂທ 1-800-462-7585). ນອກຈາກຈະຕ້ອງ ກຽມປາກກາ ແລະ ເຈັ້ຍເພື່ອຈົດແລ້ວ, ໃຫ້ກະກຽມຂໍ້ມູນດັ່ງລຸ່ມນີ້:

- ເລກປະກັນສັງຄົມຂອງທ່ານ.
- ບົດອະທິບາຍກ່ຽວກັບຄວາມເສຍຫາຍຂອງທ່ານທີ່ເກີດຈາກໄພພິບັດ.
- ຂໍ້ມູນດ້ານການປະກັນໄພ.
- ແຜນທີ່ບອກທາງໄປບ່ອນຊັບສິນທີ່ເສຍຫາຍຂອງທ່ານ.
- ເບີໂທລະສັບຂອງທ່ານທີ່ສາມາດຕິດຕໍ່ໄດ້.

ເມື່ອທ່ານສະມັກຜ່ານທາງໂທລະສັບ, ຂໍ້ມູນທີ່ທ່ານໃຫ້ຈະໄດ້ປ້ອນເຂົ້າເຄື່ອງຄອມພິວເຕີ້ ແລະ ໂປຼແກຼມ. ເມື່ອ ເຮັດຟອມສະມັກແລ້ວ, ທ່ານຈະໄດ້ຮັບຫມາຍເລກແບບຟອມສະມັກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

ຫລັງຈາກ ທ່ານສະມັກຂໍຄວາມຊ່ວຍເຫລືອ ຖ້າທ່ານມີຄຳຖາມ ຫລື ຂໍ້ມູນທີ່ທ່ານໃຫ້ມາກ່ອນມີການປ່ຽນແປງ, ໃຫ້ໂທໄປທີ່ ສາຍດ່ວນ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) 1-800-621-3362 (FEMA) (ສຳລັບຜູ້ທີ່ບົກຜ່ອງດ້ານການຟັງ/ເວົ້າເທົ່ານັ້ນ -ໂທ 1-800-462-7585). ເວລາທີ່ທ່ານໂທ, ໃຫ້ກະກຽມເລກ

ຟອມສະມັກ. ທ່ານຈະໄດ້ຮັບເລກນີ້ເວລາທີ່ທ່ານສະມັກ ແລະ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຈະຖືກສົ່ງຈົດຫມາຍໃຫ້.

2. **ເວລາໃດທີ່ຂ້ອຍຈະໄດ້ຮັບການຕິດຕໍ່ຈາກຜູ້ກວດກາ?** ຖ້າທ່ານບໍ່ມີປະກັນໄພ ຫລື ຂາດການປະກັນໄພບາງປະເພດ, ຜູ້ກວດກາຈະໂທຫາທ່ານເພື່ອຈັດຕາຕະລາງການນັດຫມາຍເພື່ອເຂົ້າເບິ່ງຊັບສິນຂອງທ່ານ. ບາງກໍລະນີ, ທ່ານອາດຈະໄດ້ຮັບການຕິດຕໍ່ພາຍໃນມື້ທີ່ທ່ານສະມັກເລີຍ. ຢ່າງໃດກໍ່ຕາມ, ສ່ວນຫລາຍ ຜູ້ກວດກາຈະໂທຫາທ່ານຫລັງຈາກຫລາຍມື້ຜ່ານໄປ, ແຕ່ກໍ່ບໍ່ກາຍ 10 ມື້.

ຜູ້ກວດກາຈະປະເມີນຕີລາຄາຄວາມເສຍຫາຍທີ່ເກີດຈາກໄພພິບັດສໍາລັບຊັບສິນສ່ວນຕົວ ແລະ ແທ້ຈິງຂອງທ່ານ. ບໍ່ມີຄ່າໃຊ້ຈ່າຍຫຍັງສໍາຫລັບການກວດກາ. ຜູ້ກວດກາແມ່ນຜູ້ຮັບເຫມົາ, ບໍ່ແມ່ນພະນັກງານຂອງ ອົງການຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ແຕ່ຜູ້ກວດກາຂອງທ່ານຈະມີຮູບຢັ້ງຢືນ. ທ່ານຫລື ຜູ້ທີ່ມີອາຍຸ 18 ປີ ທີ່ອາໄສໃນຄົວເຮືອນກ່ອນເກີດມີໄພພິບັດ ຕ້ອງມີຫນ້າໃນມື້ນັດຫມາຍ.

ຜູ້ກວດກາຈໍາເປັນຕ້ອງກວດບັດປະຈໍາຕົວຂອງທ່ານ ແລະ ທ່ານຕ້ອງຢັ້ງຢືນເອກະສານພິສູດຄວາມເປັນເຈົ້າຂອງ (ສໍາຫລັບເຈົ້າຂອງເຮືອນ) ແລະ ການຢູ່ ໃຫ້ຜູ້ກວດກາເບິ່ງ.

ຜູ້ກວດກາຈະໃຫ້ທ່ານເຊັນຟອມໃຫ້ສິດອໍານາດ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ເພື່ອຢັ້ງຢືນພິສູດວ່າຂໍ້ມູນທີ່ທ່ານໃຫ້ແມ່ນຖືກຕ້ອງ. **ຜູ້ກວດກາຈະຂຽນລາຍງານກ່ຽວກັບທ່ານ ແຕ່ບໍ່ໄດ້ຕັດສິນສິດທີ່ທ່ານຈະໄດ້ຮັບ.**

3. **ຫລັງຈາກ 10 ມື້ທີ່ຜູ້ກວດກາເຂົ້າໄປຢ້ຽມທ່ານ**, ທ່ານຈະໄດ້ຮັບຈົດຫມາຍແຈ້ງຈາກ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ກ່ຽວກັບຄໍາຕັດສິນ ຕໍ່ກັບຄໍາຮ້ອງຂອງທ່ານ.

- **ຖ້າທ່ານໄດ້ສິດຮັບການຊ່ວຍເຫລືອ**, ຈົດຫມາຍຈະຕິດແນບມາກັບ ເຊັກເງິນສົດຈາກກະຊວງການເງິນສະຫະລັດ ຫລື ຈະໂອນເຂົ້າບັນຊີທະນາຄານຂອງທ່ານເລີຍ. ຈົດຫມາຍຈະອະທິບາຍ ວ່າເງິນນັ້ນໃຊ້ກັບຫຍັງແດ່. ທ່ານຕ້ອງໃຊ້ເງິນຕາມຄໍາອະທິບາຍຂອງຈົດຫມາຍ.

- **ຖ້າທ່ານບໍ່ໄດ້ສິດຮັບການຊ່ວຍເຫລືອ**, ຈົດຫມາຍຈະອະທິບາຍເຫດຜົນຂອງຄໍາຕັດສິນ. ໃນຈົດຫມາຍທ່ານຈະໄດ້ຮັບຮູ້ການບອກສິດວ່າທ່ານຈະສາມາດຂໍອຸທອນໄດ້ຫລືບໍ່.

- **ຖ້າທ່ານໄດ້ຮັບການແນະນໍາໄປຫາ ຫ້ອງການຄຸ້ມຄອງທຸລະກິດຂະຫນາດນ້ອຍ (SBA) ເພື່ອຂໍການຊ່ວຍເຫລືອ** ຈາກໂຄງການຊ່ວຍເຫລືອໄພພິບັດ ຫ້ອງການປົກຄອງທຸລະກິດຂະຫນາດນ້ອຍ (SBA), ທ່ານຈະໄດ້ຮັບຟອມສະມັກ ຫ້ອງການປົກຄອງທຸລະກິດຂະຫນາດນ້ອຍ (SBA).

# ສິດທີ່ຈະໄດ້ຮັບເລືອກຂອງໂຄງການ

**ເພື່ອຈະໄດ້ຮັບເງິນ ຫລື ການຊ່ວຍເຫລືອ ສຳຫລັບ ຄວາມຈຳເປັນໃນການຢູ່ອາໄສ ເຊິ່ງເປັນຜົນຈາກໄພພິບັດ, ຂໍ້ມູນທັງຫມົດນີ້ຕ້ອງເປັນຄວາມຈິງ:**

- ທ່ານໄດ້ບອກລາຍລະອຽດຜົນປະໂຫຍດໃນການປະກັນໄພ ແລະ ຄວາມເສຍຫາຍທີ່ມີຕໍ່ຊັບສິນຂອງທ່ານ ທີ່ປະກັນໄພຂອງທ່ານບໍ່ຈ່າຍໃຫ້. ທ່ານອາດຈະໄດ້ຮັບຄວາມຊ່ວຍເຫລືອ ຈາກໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ໃນການສ້ອມແປງຊັບສິນຂອງທ່ານ.
- ທ່ານ ຫລື ຜູ້ທີ່ອາໄສນຳທ່ານທີ່ເປັນພົນລະເມືອງປະເທດສະຫະຫລັດອາເມລິກາ, ຜູ້ບໍ່ແມ່ນສັນຊາດ, ຫລື ຊາວຕ່າງດ້າວທີ່ມີສິດ.
- ເຮືອນຂອງທ່ານແມ່ນຢູ່ໃນເຂດທີ່ປະກາດວ່າເປັນເຂດໄພພິບັດໂດຍປະທານາທິບໍດີ.
- ເຮືອນທີ່ຢູ່ເຂດໄພພິບັດ ເຊິ່ງແມ່ນບ່ອນທີ່ທ່ານອາໄສເປັນສ່ວນໃຫຍ່ໃນຮອບປີ
- ທ່ານບໍ່ສາມາດຢູ່ໃນເຮືອນທ່ານໃນປະຈຸບັນ, ທ່ານບໍ່ສາມາດເຂົ້າເຮືອນໄດ້ເນື່ອງຈາກໄພພິບັດ, ຫລື ເຮືອນຂອງທ່ານໄດ້ຮັບການສ້ອມແປງຍ້ອນຄວາມເສຍຫາຍຈາກໄພພິບັດ.

**ເພື່ອຈະໄດ້ຮັບເງິນສຳລັບ ຄວາມຈຳເປັນນອກຈາກການຢູ່ອາໄສ ເຊິ່ງເປັນຜົນຈາກໄພພິບັດ, ຂໍ້ມູນທັງຫມົດນີ້ຕ້ອງເປັນຄວາມຈິງ:**

- ທ່ານໄດ້ຮັບຄວາມເສຍຫາຍໃນເຂດທີ່ປະກາດວ່າເປັນເຂດໄພພິບັດຈາກປະທານາທິບໍດີ.
- ທ່ານໄດ້ບອກລາຍລະອຽດຜົນປະໂຫຍດໃນການປະກັນໄພ ແລະ ຄວາມເສຍຫາຍທີ່ມີຕໍ່ຊັບສິນຂອງທ່ານ ທີ່ປະກັນໄພຂອງທ່ານບໍ່ຈ່າຍໃຫ້. ທ່ານອາດຈະໄດ້ຮັບຄວາມຊ່ວຍເຫລືອ ຈາກໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ໃນການສ້ອມແປງຊັບສິນຂອງທ່ານ.
- ທ່ານ ຫລື ຜູ້ທີ່ອາໄສນຳທ່ານທີ່ເປັນພົນລະເມືອງປະເທດສະຫະຫລັດອາເມລິກາ, ຜູ້ບໍ່ແມ່ນສັນຊາດ, ຫລື ຊາວຕ່າງດ້າວທີ່ມີສິດ.
- ທ່ານມີຄ່າໃຊ້ຈ່າຍທີ່ຈຳເປັນ ຫລື ຄວາມຈຳເປັນທີ່ເລັ່ງດ່ວນ ຍ້ອນໄພພິບັດ.
- ທ່ານໄດ້ຮັບຄວາມຊ່ວຍເຫລືອຈາກທຸກໆແຫລ່ງເຊິ່ງທ່ານໄດ້ຮັບສິດ, ເຊັ່ນ: ເງິນຄ່າປະກັນໄພ, ຫລື ເງິນຢືມຈາກ ຫ້ອງການປົກຄອງທຸລະກິດຂະຫນາດນ້ອຍ (SBA).

**ທ່ານ*ອາດບໍ່ໄດ້ສິດ*ຮັບເງິນ ຫລື ການຊ່ວຍເຫລືອຈາກ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຖ້າ:**

- ທ່ານໄດ້ມີສະຖານທີ່ພັກອາໄສອື່ນທີ່ບໍ່ເສຍຄ່າເຊົ່າ (ຕົວຢ່າງ, ເຮືອນທີ່ໃຫ້ເຊົ່າທີ່ບໍ່ມີຄົນຢູ່).

- ເຮືອນຂອງທ່ານທີ່ໄດ້ຮັບຄວາມເສຍຫາຍ ແມ່ນເຮືອນທີ່ສອງ ຫລື ເຮືອນພັກຕາກອາກາດຂອງທ່ານ.

- ຄ່າໃຊ້ຈ່າຍເປັນຍ້ອນການອອກຈາກເຮືອນເພາະເປັນການປ້ອງກັນລ່ວງໜ້າ ແລະ ທ່ານສາມາດກັບເຮືອນໄດ້ທັນທີ່ຫລັງຈາກມີເຫດການ.

- ທ່ານປະຕິເສດທີ່ຈະຮັບເອົາຄວາມຊ່ວຍເຫລືອຈາກບໍລິສັດປະກັນໄພຂອງທ່ານ.

- ຄວາມເສຍຫາຍຂອງທ່ານເປັນພຽງແຕ່ຄວາມເສຍຫາຍທາງທຸລະກິດ (ລວມມີທຸລະກິດເຮັດສວນເຊິ່ງບໍ່ລວມເຖິງ ເຮືອນສວນ ແລະ ທຸລະກິດສ່ວນຕົວ) ຫລື ປະເພດທີ່ບໍ່ໄດ້ຮັບປະກັນຢູ່ໃນໂຄງການ

- ເຮືອນທີ່ໄດ້ຮັບຄວາມເສຍຫາຍຂອງທ່ານຢູ່ໃນເຂດສ່ຽງຕໍ່ນ້ຳຖ້ວມ ແລະ ຊຸມຊົນຂອງທ່ານບໍ່ໄດ້ເຂົ້າຮ່ວມ ໂຄງການປະກັນໄພນ້ຳຖ້ວມແຫ່ງຊາດ. ໃນກໍລະນີນີ້, ຄວາມເສຍຫາຍຂອງເຮືອນທ່ານເກີດຈາກນ້ຳຖ້ວມຈະບໍ່ໄດ້ຮັບການຈ່າຍ, ແຕ່ທ່ານອາດຈະສາມາດໄດ້ຮັບການຊ່ວຍເຫລືອດ້ານເຊົ່າເຮືອນ ຫລື ສິ່ງຕ່າງໆທີ່ບໍ່ໄດ້ຮັບປະກັນໂດຍການປະກັນໄພນ້ຳຖວມ, ເຊັ່ນຄ່າໃຊ້ຈ່າຍ ບໍ່ນ້ຳບາດານ, ລະບົບລະບາຍນ້ຳ, ການປິ່ນປົວທາງການແພດ, ປົວແຂ້ວ ຫລື ງານສົບ.

# ປະເພດຄ່າເສຍຫາຍທີ່ໄດ້ຮັບການຊ່ວຍເຫລືອ

**ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ພຽງແຕ່ຮັບຈ່າຍ ຄ່າສ້ອມແປງ ຫລື ຄ່າປ່ຽນແທນຂອງປະເພດສິ່ງຂອງທີ່ໄດ້ຮັບຄວາມເສຍຫາຍໂດຍກົງຈາກໄພພິບັດ ເຊິ່ງບໍລິສັດປະກັນໄພບໍ່ຮັບຈ່າຍ. ການສ້ອມແປງ ຫລື ສ້າງຄືນ ອາດຈະບໍ່ສາມາດປັບປຸງສະພາບເຮືອນຂອງທ່ານ ໃຫ້ດີເທົ່າເວລາກ່ອນມີໄພພິບັດໄດ້ນອກຈາກວ່າ ການປັບປຸງດັ່ງກ່າວຖືກກຳນົດຈາກກົດລະບຽບການສ້າງເຮືອນປະຈຸບັນ.**

**ຄວາມຈຳເປັນດ້ານການຢູ່ອາໄສ:** ເງິນທີ່ຈະສ້ອງແປງເຮືອນທ່ານ ມີຈຳກັດ ຈົນບໍ່ສາມາດເຮັດໃຫ້ເຮືອນຂອງທ່ານປອດໄພ ແລະ ສະອາດພໍທີ່ທ່ານຈະສາມາດຢູ່ໄດ້. ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຈະບໍ່ຈ່າຍເງິນໃຫ້ສ້າງເຮືອນທ່ານກັບມາຄືເກົ່າກັບຕອນກ່ອນເກີດໄພພິບັດ. ທ່ານອາດຈະນຳໃຊ້ເງິນທີ່ໄດ້ຮັບມາສຳລັບການສ້ອມແປງ:

- ໂຄງຮ່າງເຮືອນທ່ານ (ຖານເຮືອນ, ຝາດ້ານນອກ, ແລະ ຫລັງຄາ).

- ປ່ອງຢ້ຽມ, ປະຕູ, ພື້ນ, ຝາ, ເພດານ, ຕູ້ເຮືອນຄົວ.

- ລະບົບລະບາຍ ແລະ ຂ້າເຊື້ອໃນນ້ຳ.

- ນ້ຳສ້າງ ແລະ ລະບົບນ້ຳອື່ນໆ.

- ລະບົບຄວາມຮ້ອນ, ດູດອາກາດ ແລະ ປັບອາກາດ.
- ສິ່ງອຳນວຍຄວາມສະດວກຕ່າງໆ (ໄຟຟ້າ, ທໍ່ນ້ຳ, ແລະ ລະບົບແກດສ໌)
- ທາງເຂົ້າ ແລະ ອອກເຮືອນຂອງທ່ານ, ລວມມີ ທາງເຂົ້າສ່ວນບຸກຄົນ.
- ຝາກັ້ນ, ການປັບພື້ນ ແລະ ແນວຍຶດ ຂອງເຮືອນເຄື່ອນທີ່ ແລະ ການຕໍ່ສາຍໃຫມ່ ຫລື ປັບລະບົບລະບາຍນ້ຳໃຫມ່, ລະບົບນ້ຳ, ໄຟຟ້າ ແລະທໍ່ພະລັງງານ ແລະ ອ່າງເກັບນ້ຳ.

**ນອກເຫນືອຈາກຄວາມຈຳເປັນດ້ານທີ່ຢູ່ອາໄສ**: ເງິນທີ່ຈະຈ່າຍສ້ອມແປງຊັບສິນທີ່ເສຍຫາຍ ຫລື ຈ່າຍຄ່າໃຊ້ຈ່າຍທີ່ຈຳເປັນ ແລະສິ່ງຈຳເປັນຮຸນແຮງກ່ຽວກັບໄພພິບັດ ມີຈຳກັດຕໍ່ ສິ່ງຂອງ ຫລື ປະເພດການບໍລິການ ເຊິ່ງຈະຊ່ວຍປ້ອງກັນ ຫລື ຜ່ານຜ່າຄວາມລຳບາກຈາກໄພພິບັດ, ອາການບາດເຈັບ ແລະ ສິ່ງອັນຕະລາຍຕ່າງໆ. ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຈະບໍ່ຈ່າຍເພື່ອສ້າງຄືນ ຫລື ປ່ຽນແທນຊັບສິນສ່ວນຕົວຂອງທ່ານໃຫ້ກັບມາມີສະພາບຄືເກົ່າກ່ອນເກີດໄພພິບັດ. ທ່ານອາດຈະນຳໃຊ້ເງິນທີ່ໄດ້ຮັບມາສຳຫລັບການສ້ອມແປງ ຫລື ຈ່າຍ:

- ຄ່າຮັກສາປິ່ນປົວ ແລະ ປົວແຂ້ວ.
- ງານສົບ ແລະ ງານຊາປະນາກິດທີ່ເກີດມາຈາກໄພພິບັດ.
- ເຄື່ອງນຸ່ງຮົ່ມ; ສິ່ງຂອງໃນຄົວເຮືອນ (ເຟີນິເຈີ້, ເຄື່ອງໃຊ້); ເຄື່ອງມື (ເຄື່ອງນຸ່ງພິເສດ ຫລື ເພື່ອປ້ອງກັນ ແລະ ອຸປະກອນ) ທີ່ຈຳເປັນສຳລັບວຽກທ່ານ; ອຸປະກອນການສຶກສາທີ່ສຳຄັນ (ຄອມພິວເຕີ້, ປື້ມຮຽນ, ແລະເຄື່ອງສະຫນອງຕ່າງໆ).
- ພະລັງງານສຳຫລັບແຫລ່ງຄວາມຮ້ອນພື້ນຖານ (ນ້ຳມັນທີ່ໃຊ້ເພື່ອສ້າງຄວາມຮ້ອນ, ແກສ໌, ຟືນ).
- ສິ່ງຂອງທີ່ໃຊ້ອະນາໄມໃນເວລາມີໄພພິບັດ (ເຄື່ອງດູດຝຸ່ນປຽກ/ແຫ້ງ, ເຄື່ອງຕອງອາກາດ, ແລະ ເຄື່ອງຫລຸດຄວາມຊຸ່ມ).
- ພາຫະນະທີ່ເສຍຫາຍຍ້ອນໄພພິບັດ.
- ຄ່າຍ້າຍເຮືອນ ແລະ ເກັບເຄື່ອງ ທີ່ພົວພັນກັບໄພພິບັດ (ຍ້າຍ ຫລື ເກັບຊັບສິນເພື່ອຫລີກເວັ້ນບໍ່ໃຫ້ມີຄວາມເສຍຫາຍເພີ່ມໃນເວລາສ້ອມແປງເຮືອນທີ່ເສຍຫາຍຈາກໄພພິບັດ).
- ຄ່າໃຊ້ຈ່າຍຈຳເປັນຕ່າງໆ ຫລື ຄວາມຕ້ອງຮີບດ່ວນ ທີ່ກຳນົດໂດຍ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

# ຂໍ້ມູນຂ່າວສານທີ່ສຳຄັນກ່ຽວກັບການຊ່ວຍເຫລືອໄພພິບັດ

ເງິນທີ່ໄດ້ຮັບມາຈາກ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ສຳຫລັບທີ່ພັກອາໄສ ແລະ ນອກຈາກຄວາມຈຳເປັນດ້ານທີ່ຢູ່ອາໄສ ແມ່ນຕ້ອງໃຊ້ຕາມຄ່າໃຊ້ຈ່າຍທີ່ໄດ້ຮັບອານຸຍາດເທົ່ານັ້ນ, ຕາມທີ່ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ລະບຸໄວ້:

- **ຖ້າທ່ານບໍ່ໃຊ້ເງິນຕາມທີ່ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໄດ້ ອະທິບາຍ, ທ່ານອາດຈະບໍ່ໄດ້ຮັບຄວາມຊ່ວຍເຫລືອເພີ່ມເຕີມ ແລະ ອາດຕ້ອງຈ່າຍເງິນຄືນ.**
- ໂດຍທົ່ວໄປແມ່ນກຳນົດຮອດ 18 ເດືອນ ຫລັງຈາກປະທານາທິບໍດີ ປະກາດໄພພິບັດ.
- ບໍ່ຈຳເປັນຕ້ອງຈ່າຍຄືນ
- ປອດພາສີ
- ບໍ່ຄິດໄລ່ເປັນລາຍຮັບ ຫລື ແຫລ່ງທີ່ກຳນົດວ່າສາມາດຮັບສະຫວັດດີການສັງຄົມ, ການຊ່ວຍ ເຫລືອດ້ານລາຍຮັບ, ຫລື ໂຄງການກວດສອບຜົນປະໂຫຍດຈາກລາຍໄດ້ ໃຫ້ທຶນໂດຍ ລັດຖະ ບານກາງ.
- ສ່ວນທີ່ໄດ້ຈາກການທວງໜີ້, ຍຶດຊັບສິນ, ຍຶດເຮືອນ, ຄ່າເສຍພາສີອາກອນ, ນຳໃຊ້ກົດໝາຍ, ຄ່າຈຳຊັບສິນ, ຍຶດຊັບສິນ ຫລື ຄືນ, ປ່ອຍຈາກການກັກຂັງ, ຫລື ເອີ້ນສິດຄືນ.
- ບໍ່ສາມາດມອບ ຫລື ໂອນໃຫ້ຄົນອື່ນໄດ້.
- *ທ່ານຕ້ອງເກັບໃບຮັບ*ເງິນ *ຫລື* ໃບບິນ ເປັນ*ເວລາ 3 ປີ ເພື່ອເປັນສິ່ງຢັ້ງຢືນວ່າ*ເງິນ*ທັງໝົດ ໃຊ້ ໄປໃນການຕອບສະໜອງບັນຫາແກ້ໄຂໄພພິບັດ.*

ກ່ອນທ່ານຈະເລີ່ມການສ້ອມແປງໃດໆ, ທ່ານຄວນເຂົ້າໄປຫາພະແນກກໍ່ສ້າງທ້ອງຖິ່ນ ເພື່ອຊອກຮູ້ວ່າມີໃບອະນຸຍາດ ຫລື ກວດສອບລະດັບທ້ອງຖິ່ນທີ່ຈຳເປັນ

# ຖ້າທ່ານໄດ້ຮັບສິດທີ່ຈະໄດ້ຮັບການຊ່ວຍເຫລືອ

ຖ້າຟອມຂໍຄວາມຊ່ວຍເຫລືອຂອງທ່ານພາຍໃຕ້ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຄົບ ຕາມເງື່ອນໄຂທີ່ວາງໄວ້ ແລະ ໄດ້ຮັບການຢັ້ງຢືນ, ເງິນ ຫລື ການຊ່ວຍເຫລືອ ທີ່ທ່ານໄດ້ຮັບຕ້ອງໃຊ້ຕາມສິ່ງທີ່

ລະບຸດັ່ງລຸ່ມນີ້. ເງິນຈາກໂຄງການນີ້ ອາດຈະບໍ່ໄດ້ໃຊ້ໃນການຈ່າຍເພື່ອອາໄສຢູ່ກັບຄອບຄົວ ຫລື ຫມູ່ເພື່ອນ. ລຸ່ມນີ້ແມ່ນຂໍ້ອະທິບາຍຂອງສິດຕ່າງໆ.

**ປົວແຂ້ວ**: ເງິນທີ່ຈະກໍານົດຄ່າໃຊ້ຈ່າຍການຮັກສາແຂ້ວ ເນື່ອງຈາກໄພພິບັດ

**ງານສົບ**: ເງິນທີ່ກໍານົດໃນຄ່າໃຊ້ຈ່າຍງານສົບ, ຝັງ ຫລື ເຜົາ ຫລື ຄ່າໃຊ້ຈ່າຍງານສົບຕ່າງໆກ່ຽວຂ້ອງຕໍ່ການເສຍຊີວິດເນື່ອງຈາກໄພພິບັດ.

**ສ້ອມແປງເຮືອນ**: ເງິນທີ່ມີໄວ້ໃຫ້ເຈົ້າຂອງເຮືອນກໍານົດໃຊ້ໃນຄ່າແຮງ ແລະ ວັດຖຸໃນການສ້ອມແປງເຮືອນຂອງທ່ານໃຫ້ປອດໄພ, ສະອາດ ແລະ/ຫລື ໃຊ້ປະໂຫຍດໄດ້ດີ.

**ຊ່ວຍເຫລືອດ້ານທີ່ຢູ່ອາໄສ:** ຊ່ວຍຄ່າໃຊ້ຈ່າຍຕໍ່ສິ່ງຈໍາເປັນດ້ານຢູ່ອາໄສທີ່ກ່ຽວຂ້ອງກັບໄພພິບັດ.

**ຮັກສາທາງແພດ**: ເງິນທີ່ກໍານົດໃຊ້ໃນຄ່າຮັກສາແພດ ຫລື ຊື້ອຸປະກອນການແພດທີ່ຈໍາເປັນຕໍ່ການຮັກສາການບາດເຈັບຮ່າງກາຍເຊິ່ງເປັນຜົນຈາກໄພພິບັດ.

**ຍ້າຍ ແລະ ເກັບເຄື່ອງ:** ເງິນທີ່ກໍານົດໃຊ້ໃນການຍ້າຍ ແລະ ເກັບຊັບສິນສ່ວນຕົວຈາກເຮືອນທີ່ໄດ້ຮັບຄວາມເສຍຫາຍເພື່ອຫລີກເວັ້ນຄວາມເສຍຫາຍເພີ່ມເຕີມທີ່ກ່ຽວຂ້ອງຈາກໄພພິບັດ.

**ອື່ນໆ**: ເງິນທີ່ກໍານົດຄ່າໃຊ້ຈ່າຍຂອງສິ່ງຂອງຈໍາເປັນສະເພາະສໍາຫລັບໄພພິບັດ.

**ທີ່ພັກອາໄສຖາວອນ/ເຄິ່ງຖາວອນ:** ຍ້ອນຂາດເຂີນທີ່ພັກອາໄສ, ສ້ອມແປງບໍ່ໄດ້ ແລະ ຊ່ວຍປ່ຽນເຮືອນບໍ່ໄດ້ ແລະ ບໍ່ມີຜູ້ຮັບເຫມົາສ້າງເຮືອນໃນເຂດຂອງທ່ານ, ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຈະສ້າງເຮືອນໃຫ້ທ່ານໃໝ່.

ຊັບສິນ**ສ່ວນຕົວ:** ເງິນທີ່ກໍານົດໃຊ້ໃນຄ່າສ້ອມແປງ ແລະ/ຫລື ປ່ຽນສິ່ງຂອງທີ່ເສຍຫາຍຈາກໄພພິບັດ, ເຊັ່ນ ເຟີນິເຈີ້, ຕຽງນອນ, ເຄື່ອງໃຊ້ ແລະ ເຄື່ອງນຸ່ງຫົ່ມ.

**ຊ່ວຍເຊົ່າເຮືອນ:** ເງິນສໍາຫລັບຄ່າເຊົ່າບ່ອນອື່ນເພື່ອພັກອາໄສ. ສໍາຫລັບເຈົ້າຂອງເຮືອນ, ເງິນຈໍານວນນີ້ອາດຈະຈ່າຍເພີ່ມເພື່ອສ້ອມແປງເຮືອນ, ຖ້າຈໍາເປັນ.

**ປ່ຽນ**ເຮືອນ: ເງິນທີ່ຈະຊ່ວຍຄ່າໃຊ້ຈ່າຍໃນການປ່ຽນເຮືອນ, ໃນຂີດທີ່ກົດຫມາຍກໍານົດໄວ້, ຍ້ອນວ່າເຮືອນບໍ່ປອດໄພ, ສະອາດ ແລະ/ຫລື ໃຊ້ປະໂຫຍດໄດ້ດີ.

**ບ່ອນອາໄສຊົ່ວຄາວ**: ເງິນທີ່ໃຊ້ເປັນຄ່າທີ່ຢູ່ບ່ອນພັກຊົ່ວຄາວ (ໂຮງແຮມ ຫລື ເຮືອນພັກ) ກ່ຽວຂ້ອງກັບໄພພິບັດ.

**ຄ່າເດີນທາງ:** ເງິນທີ່ຈະກໍານົດໃຊ້ໃນການສ້ອມແປງ ແລະ/ຫລື ປ່ຽນແທນພາຫະນະຂອງທ່ານເຊິ່ງບໍ່ສາມາດນໍາໃຊ້ໄດ້ຍ້ອນຄວາມເສຍຫາຍທີ່ເກີດຈາກໄພພິບັດ.

# ຂໍ້ມູນກ່ຽວກັບ ການປະກັນໄພ ແລະ ການຊ່ວຍເຫລືອໄພພິບັດ

**ຖ້າທ່ານຍັງບໍ່ໄດ້ຕິດຕໍ່ຕົວແທນປະກັນໄພຂອງທ່ານເພື່ອຮຽກຮ້ອງສິດຄ່າເສຍຫາຍ, ກະລຸນາຕິດຕໍ່ໃຫ້ໄວທີ່ສຸດເທົ່າທີ່ຈະເປັນໄປໄດ້.** ການທີ່ບໍ່ສາມາດຮຽກຮ້ອງສິດຄ່າເສຍຫາຍກັບບໍລິສັດປະກັນໄພຂອງທ່ານອາດສົ່ງຜົນສະທ້ອນເຖິງສິດທີ່ຈະໄດ້ຮັບການຊ່ວຍເຫລືອຂອງ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP). ຫລັງຈາກຊຽນຟອມຮ້ຽກຮ້ອງຄ່າເສຍຫາຍແລ້ວ, ຖ້າເຫດການໃດໆລຸ່ມນີ້ເກີດຂື້ນ, ໃຫ້ໂທໄປ ສາຍດ່ວນຊ່ວຍໄພພິບັດ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) 1-800-621-3362 (FEMA) ສໍາລັບຂໍ້ມູນເພີ່ມເຕີມ.

- **ເງິນຄ່າປະກັນໄພຂອງທ່ານຕ້ອງເລື່ອນ**, ຖ້າຄໍາຕັດສິນໃຫ້ເງິນຄ່າປະກັນໄພຂອງທ່ານເລື່ອນເກີນ 30 ມື້ **ຫລັງຈາກມື້ທີ່ຂຽນຄໍາຮ້ອງ**, ທ່ານຕ້ອງຂຽນຈົດຫມາຍເຖິງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ອະທິບາຍເຫດການ. ທ່ານຄວນມີເອກະສານຈາກບໍລິສັດປະກັນໄພຂອງທ່ານພິສູດວ່າທ່ານໄດ້ຂຽນຄໍາຮ້ອງ. ຖ້າທ່ານຂຽນຄໍາຮ້ອງຜ່ານໂທລະສັບ, ທ່ານຄວນມີເລກຟອມຄໍາຮ້ອງ, ວັນທີທີ່ສະມັກ, ໄລຍະເວລາທີ່ຄາດຈະຮັບເງິນປະກັນໄພຂອງທ່ານ. ການຊ່ວຍເຫລືອໃດທີ່ທ່ານຈະໄດ້ຮັບຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແມ່ນຈະຖືກພິຈາລະນາກ່ອນ ແລະ ຕ້ອງຈ່າຍຄືນໃຫ້ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ເວລາທີ່ທ່ານໄດ້ຮັບເງິນປະກັນໄພ.

- ເງິນ**ປະກັນໄພຂອງທ່ານບໍ່ພຽງພໍກັບຄວາມຈໍາເປັນທີ່ກ່ຽວຂ້ອງກັບໄພພິບັດ.** ຖ້າທ່ານໄດ້ຮັບເງິນປະກັນໄພເປັນຈໍານວນສູງສຸດ ແລະ ຍັງບໍ່ພໍໃຊ້ຕໍ່ຄວາມຕ້ອງການທີ່ກ່ຽວຂ້ອງກັບໄພພິບັດ, ທ່ານຕ້ອງຂຽນຈົດຫມາຍເຖິງ (FEMA) ຊີ້ບອກເຖິງຄວາມຕ້ອງການດ້ານໄພພິບັດທີ່ຍັງບໍ່ໄດ້ຮັບສະຫນອງ. ທ່ານກໍ່ຄວນສົ່ງເອກະສານຈາກບໍລິສັດປະກັນໄພເພື່ອໃຫ້ມີການທົບທວນ.

- **ທ່ານໃຊ້ຄ່າໃຊ້ຈ່າຍດໍາລົງຊີວິດເພີ່ມເຕີມ (Additional Living Expenses – ALE) ຈາກບໍລິສັດປະກັນຊີວິດຫມົດ.** ຖ້າທ່ານໄດ້ຮັບເງິນປະກັນໄພເປັນຈໍານວນສູງສຸດ ສໍາລັບ ຄ່າໃຊ້ຈ່າຍດໍາລົງຊີວິດເພີ່ມເຕີມ (ເສຍການນໍາໃຊ້) (Additional Living Expenses – Loss of Use) ແລະ ຍັງຕ້ອງການຄວາມຊ່ວຍເຫລືອສໍາລັບຄວາມຕ້ອງການດ້ານທີ່ພັກອາໄສຊົ່ວຄາວເນື່ອງຈາກມີໄພພິບັດ, ໃຫ້ຂຽນຫາ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ແຈ້ງບອກສາເຫດທີ່ທ່ານຈໍາເປັນຕ້ອງມີທີ່ພັກອາໄສຊົ່ວຄາວ. ທ່ານຈໍາເປັນຕ້ອງສະແດງເອກະສານເພື່ອພິສູດວ່າ ມີການໃຊ້ຈໍານວນເງິນຄ່າທີ່ພັກອາໄສ ຂອງ ຄ່າໃຊ້ຈ່າຍດໍາລົງຊີວິດເພີ່ມເຕີມ (ALE) ຈາກບໍລິສັດປະກັນໄພທ່ານ ແລະ ການບໍລິການທີ່ຢູ່ຖາວອນຫມົດ.

- **ທ່ານບໍ່ສາມາດບອກທີ່ຢູ່ຂອງແຫລ່ງເຮືອນເຊົ່າໃນເຂດທ່ານ.** ສາຍດ່ວນ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ມີບັນຊີລາຍຊື່ ຂອງເຮືອນເຊົ່າຢູ່ໃນເຂດທີ່ເກີດໄພພິບັດ. ຖ້າບໍ່ມີຢູ່ເມືອງຂອງທ່ານ, ຕົວແທນສາຍດ່ວນສາມາດບອກທ່ານບ່ອນທີ່ຢູ່ເມືອງໃກ້ຄຽງ.

---

ທ່ານມີເວລາເຖິງ 12 ເດືອນ ຈາກມື້ທີ່ທ່ານລົງທະບຽນກັບ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ເພື່ອໃຫ້ຂໍ້ມູນການປະກັນໄພຂອງທ່ານ ສໍາລັບການທົບທວນ. ຕາມກົດຫມາຍ, ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ບໍ່ສາມາດໃຫ້ເງິນ ໃຫ້ບຸກຄົນ ຫລື ຄົວເຮືອນ ສໍາລັບຄ່າເສຍຫາຍທີ່ຄວບຄຸມ ໂດຍ ບໍລິສັດປະກັນໄພ.

# ຂ້ອຍຕ້ອງການໃຫ້ກໍລະນີຂອງຂ້ອຍໄດ້ຮັບການທົບທວນອີກເທື່ອຫນຶ່ງ (ຂໍອຸທອນ)

**ທ່ານອາດຈະຂໍອະທອນຕໍ່ທຸກຄໍາຕັດສິນ.** ການຂໍອຸທອນອາດຈະກ່ຽວຂ້ອງເຖິງການທີ່ຈະໄດ້ຮັບສິດຂອງທ່ານ, ຈໍານວນ ຫລື ປະເພດຂອງການຊ່ວຍເຫລືອທີ່ຈະໃຫ້ທ່ານ, ການສະມັກຫລ້າຊ້າ, ການຮ້ອງຂໍເງິນຄືນ, ຫລື ຄໍາຖາມຕ່າງໆທີ່ກ່ຽວຂ້ອງກັບການສືບຕໍ່ການຊ່ວຍເຫລືອ. ເວລາທ່ານອຸທອນຕໍ່ຄໍາຕັດສິນ, ທ່ານຂໍໃຫ້ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ທົບທວນກໍລະນີຂອງທ່ານອີກຄັ້ງຫນຶ່ງ. ກ່ອນທ່ານອຸທອນຄໍາຕັດສິນ, ກະລຸນາອ້າງອີງຂໍ້ມູນສະເພາະໃນຄູ່ມືສະບັບນີ້ ກ່ຽວກັບຄຸນວຸດທິທີ່ຈະໄດ້ຮັບການຊ່ວຍເຫລືອ ຫລື ອ້າງອີງໃນຈົດຫມາຍທີ່ສົ່ງໃຫ້ທ່ານກ່ຽວກັບສິດທີ່ຈະໄດ້ຮັບການຊ່ວຍເຫລືອ. ຄູ່ມືສະບັບນີ້ ຕ້ອງຕອບເກືອບທຸກໆຄໍາຖາມຂອງທ່ານກ່ຽວກັບຄ່າໃຊ້ຈ່າຍທີ່ໂຄງການນີ້ຮັບຈ່າຍ.

ຖ້າ, ພາຍຫລັງເບິ່ງຄູ່ມືສະບັບນີ້ແລ້ວ, ທ່ານຍັງບໍ່ທັນເຫັນດີກັບຄໍາຕັດສິນກ່ຽວກັບຟອມສະມັກຂອງທ່ານ ຫລື ຄວາມຊ່ວຍເຫລືອທີ່ໄດ້ຮັບ, **ໃຫ້ທ່ານເຮັດຕາມຂັ້ນຕອນລຸ່ມນີ້ເພື່ອອຸທອນຕໍ່ຄໍາຕັດສິນ:**

**ຂັ້ນຕອນການຂຽນອຸທອນ** :

1. ຂຽນອະທິບາຍຍ້ອນຫຍັງທ່ານຄິດວ່າຄໍາຕັດສິນກ່ຽວກັບ ຈໍານວນ ຫລື ປະເພດການຊ່ວຍເຫລືອທີ່ທ່ານໄດ້ຮັບ ຍັງບໍ່ຖືກຕ້ອງ.

- **ເວລາທີ່ສົ່ງຈົດຫມາຍຂອງທ່ານ,** ກະລຸນາບອກຊື່ເຕັມ, ວັນທີ ແລະ ສະຖານທີ່ເກີດ, ແລະທີ່ຢູ່. ນອກຈາກນັ້ນ, ຈົດຫມາຍຂອງທ່ານຕ້ອງມີສໍາເນົາກາສານ, ປະກອບດ້ວຍ ສໍາເນົາບັດປະຈໍາຕົວທີ່ລັດຖະບານອອກໃຫ້, ຫລື ປະກອບມີຄໍາປະຕິຍານລຸ່ມນີ້, "ຂ້າພະເຈົ້າຂໍປະຕິຍານພາຍໃຕ້ກົດຫມາຍວ່າດ້ວຍການໃຫ້ຄໍາເຫັດ ວ່າຂໍ້ມູນລຸ່ມນີ້ແມ່ນຄວາມຈິງ ແລະ ຖືກຕ້ອງ." ທ່ານຕ້ອງເຊັນຈົດຫມາຍຂອງທ່ານ.

2. **ຖ້າຜູ້ໃດທີ່ບໍ່ແມ່ນຕົວທ່ານ ຫລື ຜູ້ສະມັກຮ່ວມ ຂຽນຈົດຫມາຍນີ້,** ຕ້ອງມີຄໍາປະຕິຍານທີ່ເວົ້າວ່າຜູ້ດັ່ງກ່າວສາມາດຕາງຫນ້າທ່ານໄດ້.

3. ສົ່ງຈົດຫມາຍເຖິງ:

FEMA

National Processing Service Center
P.O. Box 10055
Hyattsville, MD 20782-7055

4. ທ່ານສາມາດແຟັກສ໌ຈົດຫມາຍໄປທີ່

(800) 827-8112
Attention: FEMA

**ສຳຄັນ:** ເພື່ອໄດ້ຮັບການພິຈາລະນາໂດຍ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP), ຈົດຫມາຍຂໍອຸທອນຂອງທ່ານຕ້ອງມີກາຂອງໄປສະນີພາຍໃນ 60 ວັນຂອງມື້ທີ່ຈົດຫມາຍຕັດສິນຂອງ ບຸກຄົນ ຫລື ຄົວເຮືອນອອກ. ຢ່າລືມຂຽນວັນທີ່ລົງຈົດຫມາຍທ່ານ.

**ຄຳຮ້ອງຂໍເອກະສານ:**

ທ່ານອາດຕ້ອງການຂໍ້ມູນກ່ຽວກັບກໍລະນີຂອງທ່ານ, ທ່ານ ແລະ ຜູ້ສະມັກຮ່ວມຂອງທ່ານ ອາດຂຽນຄຳຮ້ອງຂໍສຳເນົາຂອງເອກະສານໂດຍຂຽນເຖິງ:

**FEMA – Records Management**
**National Processing Service Center**
**P.O. Box 10055**
**Hyattsville, MD 20782-7055**

ເພື່ອຊ່ວຍໃຫ້ທ່ານປົກປ້ອງຄວາມເປັນສ່ວນຕົວຂອງຂໍ້ມູນສ່ວນຕົວຂອງທ່ານ, ເວລາໃດທີ່ທ່ານຂຽນຈົດຫມາຍອຸທອນ ຫລື ຄຳຮ້ອງ ເຖິງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ທ່ານຕ້ອງຂຽນຊື່ເຕັມ, ມື້ ແລະ ສະຖານທີ່ເກີດ, ທີ່ຢູ່ຂອງເຮືອນທີ່ເສຍຫາຍ, ເລກຟອມ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ແລະ ເລກໄພພິບັດ. ນອກຈາກນັ້ນ, ຈົດຫມາຍທ່ານຕ້ອງມີການຢັ້ງຢືນວ່າເປັນສຳເນົາສະບັບແທ້, ປະກອບດ້ວຍ ສຳເນົາບັດປະຈຳຕົວທີ່ລັດຖະບານອອກໃຫ້, ຫລື ປະກອບມີຄຳປະຕິຍານລຸ່ມນີ້, "ຂ້າພະເຈົ້າຂໍປະຕິຍານພາຍໃຕ້ກົດຫມາຍວ່າດ້ວຍການໃຫ້ຄຳເທັດ ວ່າຂໍ້ມູນລຸ່ມນີ້ແມ່ນຄວາມຈິງ ແລະ ຖືກຕ້ອງ." ທ່ານຕ້ອງເຊັນຈົດຫມາຍຂອງທ່ານ.

ຖ້າມີຜູ້ໃດນອກຈາກທ່ານ ຫລື ຜູ້ສະມັກຮ່ວມຂອງທ່ານສົ່ງຈົດຫມາຍອຸທອນ ຫລື ຂຽນຄຳຮ້ອງຂໍສຳເນົາເອກະສານທ່ານ, ຄຳຮ້ອງດັ່ງກ່າວຕ້ອງມີການຂຽນຢັ້ງຢືນວ່າຜູ້ນັ້ນໄດ້ຮັບມອບອຳນາດຈາກທ່ານໃຫ້ມາເອົາຂໍ້ມູນນີ້.

# ສ້າງໃໝ່ ແລະ ສ້ອມແປງ - ມາດຕະການບັນເທົາຄວາມເສຍຫາຍ

*ມາດຕະການບັນເທົາຄວາມເສຍຫາຍ* ແມ່ນການປັບປຸງແບບການກໍ່ສ້າງທີ່ຈະຊ່ວຍຫລຸດຜ່ອນຄວາມສ່ຽງຂອງຄວາມເສຍຫາຍທີ່ອາດຈະເກີດຂຶ້ນໃນອານາຄົດ. ພາຍຫລັງເກີດໄພພິບັດໃຫຍ່, ທ່ານຈະມີການຕັດສິນໃຈຫລາຍຢ່າງທີ່ຈະສ້າງໃໝ່ ຫລື ປົວແປງຊັບສິນຂອງທ່ານທີ່ໄດ້ຮັບຄວາມເສຍຫາຍ, ການຕັດສິນໃຈບາງຢ່າງອາດຊ່ວຍປ້ອງກັນບໍ່ໃຫ້ມີຄວາມເສຍຫາຍຖ້າມີໄພພິບັດເກີດຂຶ້ນອີກ. ຍົກຕົວຢ່າງ, ຖ້າເຄື່ອງໃຊ້ ຫລື ສິ່ງອຳນວຍຄວາມສະດວກໃຫຍ່ ຫລຸດອອກມາຈາກພື້ນດິນ, ຄວາມເປັນໄປໄດ້ທີ່ຄວາມເສຍຫາຍຈາກນ້ຳຖ້ວມຈະຫລຸດລົງ.

ທີ່ປຶກສາດ້ານການບັນເທົາທຸກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຢູ່ສູນຟື້ນຟູໄພພິບັດທ້ອງຖິ່ນ ສາມາດໃຫ້ຂໍ້ມູນທ່ານເພີ່ມເຕີມກ່ຽວກັບການຫລຸດຜ່ອນຄວາມເສຍຫາຍທີ່ອາດຈະເກີດຂຶ້ນໃນອານາຄົດໂດຍຜ່ານການປຶກສາບັນເທົາທຸກ. ລາຍການລຸ່ມນີ້ ແມ່ນບາງຕົວຢ່າງຂອງມາດຕະການບັນເທົາທຸກ.

- ຍົກລະດັບ ຫລື ຍ້າຍແຜງໄຟຟ້າ.
- ຍົກລະດັບ ຫລື ຍ້າຍເຄື່ອງຊັກ ຫລື ອົບຜ້າ.
- ຈັບຖັງເກັບພະລັງງານໃຫ້ແໜ້ນ
- ປັບລະດັບ ແລະ ຈັບແບບເຮືອນເຄື່ອນທີ່ໃຫ້ແໜ້ນ
- ຍົກລະດັບ, ຍ້າຍ ຫລື ມັດເຄື່ອງທຳຄວາມຮ້ອນໃຫ້ແໜ້ນ
- ຍ້າຍໜ່ວຍເຮັດຄວາມຮ້ອນ



*ຍົກລະດັບຫມໍ້ຕົ້ມນ້ຳຮ້ອນ, ເຄື່ອງຫລອມ, ເຄື່ອງຊັກ ແລະ ເຄື່ອງອົບ*

ສຳຫລັບຂໍ້ມູນເພີ່ມເຕີມກ່ຽວກັບໂຄງການຜ່ອນຫນັກໃຫ້ເປັນເບົາເຊັ່ນ ຕົວຢ່າງທີ່ສະແດງຢູ່ຫນ້ານີ້, ໃຫ້ໂທ ຫລື ເຂົ້າໄປຫາເຈົ້າຫນ້າທີ່ວາງແຜນຄວບຄຸມໄພສຸກເສີນທ້ອງຖິ່ນ, ພະນັກງານຫລຸດຜ່ອນໄພອັນຕະລາຍແຫ່ງຊາດ, ຫລື ພະນັກງານ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຢູ່ ສູນແກ້ໄຂໄພພິບັດ. ຂໍ້ມູນ ຫລື ການປຶກສາຜ່ອນຫນັກໃຫ້ເປັນເບົາມີຢູ່ໃນ: www.fema.gov.

ເພື່ອສັ່ງ ຫນັງສືກ່ຽວກັບໂຄງການຜ່ອນຫນັກໃຫ້ເປັນເບົາ, ໂທຫາ ໂຮງຈັດພິມ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ທີ່ເບີ 1-800-480-2520.

# ຂໍ້ມູນກ່ຽວກັບໂຄງການຊ່ວຍເຫລືອໄພພິບັດເພີ່ມເຕີມ

ພາກນີ້ຂຽນບອກລາຍຊື່ຂອງປະເພດການຊ່ວຍໄພພິບັດທີ່ມີເວລາທີ່ປະທານາທິບໍດີປະກາດແຈ້ງການໄພພິບັດໃຫຍ່. ໃນຊ່ວງທີ່ມີໄພພິບັດໃຫຍ່ ຖ້າທ່ານຄິດວ່າມີຄວາມຕ້ອງການທີ່ກ່ຽວຂ້ອງເຊິ່ງສາມາດຮັບຮູ້ໂດຍຕົວແທນ ຫລື ຝ່າຍບໍລິການທີ່ມີຢູ່ໃນລາຍການນີ້, ທ່ານຄວນຕິດຕໍ່ສາຍດ່ວນຊ່ວຍເຫລືອໄພພິບັດ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) 1-800-621-3362 (FEMA) (ສຳຫລັບຜູ້ທີ່ມີປັນຫາການຟັງ/ເວົ້າ ເທົ່ານັ້ນ - ໂທ 1-800-462-7585) ສຳຫລັບຂໍ້ມູນອ້າງອີງ.

**ຫນ່ວຍບໍລິການຜູ້ທີ່ມີອາຍຸ:** ແມ່ນການບໍລິການທີ່ມີເພື່ອຕອບສະຫນອງຄວາມຕ້ອງການຂອງຜູ້ເຖົ້າແກ່ທີ່ໄດ້ຮັບຜົນກະທົບຈາກໄພພິບັດທີ່ໄດ້ຖືກແຈ້ງປະກາດ (ຕົວຢ່າງ: ການຂົນສົ່ງ, ອາຫານ, ທີ່ພັກເຊົ່າ, ອື່ນໆ

**ການຊ່ວຍເຫລືອດ້ານກະສິກຳ:** ໂຄງການພັດທະນາຊົນນະບົດ USDA (USDA Rural Development) ອາດໃຫ້ເງິນກູ້ສຸກເສີນ ແກ່ ຊາວໄຮ່ຊາວນາ ແລະ ຊາວສວນ (ເຈົ້າຂອງ ຫລື ຜູ້ເຊົ່າ) ຜູ້ທີ່ກຳລັງດຳເນີນງານ ຫລື ຄວບຄຸມໄຮ່ສວນໃນເວລາທີ່ ເກີດໄພພິບັດ. ເງິນກູ້ຈຳນວນນີ້ຈຳກັດພຽງແຕ່ຈຳນວນຈຳເປັນໃຫ້ແກ່ການໃຊ້ທົດແທນຄວາມເສຍຫາຍທີ່ແທ້ຈິງ ຕໍ່ຊັບສິນຫລັກແລະ/ຫລື ກຳລັງການຜະລິດ. ຊາວນາ ແລະ ຊາວສວນອາດຈະສະມັກຂໍ ໂຄງການເງິນຊ່ວຍເຫລືອແບ່ງປັນສຳລັບ ແກ້ໄຂເຫດການສຸກເສີນເຊັ່ນ ການມ້າງຮື້ສິ່ງປະລັກຮັກພັງ ຈາກດິນປູກຝັງ/ທາງຍ່າງ, ສ້ອມແປງໂຄງສ້າງດິນ/ນ້ຳ, ແລະ ສ້າງຮົ້ວຖາວອນ. ຂໍ້ມູນເພີ່ມເຕີມມີໃຫ້ຢູ່ຫ້ອງການຕົວແທນບໍລິການໄຮ່ສວນ (USDA Farm Service Agency – FSA).

**ການຊ່ວຍເຫລືອຈາກສະຖາບັນການເງິນ:** ບັນດາທະນາຄານທີ່ເປັນສະມາຊິກຂອງ ກຸ່ມບໍລິສັດຝາກປະກັນໄພລັດຖະບານກາງ (Federal Deposit Insurance Corporation - FDIC), ລະບົບເງິນສຳຮອງລັດຖະບານກາງ(Federal Reserve System - FRS), ຫລື ຄະນະກຳມາການທະນາຄານປ່ອຍເງິນກູ້ໃຫ້ເຮືອນ(Federal Home Loan Bank Board - FHLBB), ອາດຈະອະນຸຍາດໃຫ້ມີຖອນໃນເວລາທີ່ຝາກໂດຍບໍ່ໃສ່ໂທດ. ໃຫ້ຕິດຕໍ່ສະຖາບັນການເງິນຂອງທ່ານເພື່ອຊອກຮູ້ວ່າທ່ານໄດ້ຮັບສິດຈາກກົມລະບຽບວິໄນ.

**ໂຄງການປ່ອຍເງິນກູ້ໃຫ້ທຸລະກິດ:** ເງິນກູ້ໄພພິບັດ ຜ່ານຫ້ອງຄຸ້ມຄອງທຸລະກິດຂະຫນາດນ້ອຍ (Small Business Administration, SBA) ມີໃຫ້ບັນດາທຸລະກິດຕ່າງໆ ເພື່ອສ້ອມແປງ ຫລື ປ່ຽນແທນ ສິ່ງກໍ່ສ້າງ, ສິ່ງປະດິດ, ເຄື່ອງຈັກ, ຫລື ເຄື່ອງມື, ທີ່ໃຊ້ໃນທຸລະກິດທີ່ໄດ້ຮັບຄວາມເສຍຫາຍ. ຈຳນວນເງິນໃຫ້ກູ້ຢືມສູງສຸດ

---

ສາຍດ່ວນບັນເທົາທຸກດ້ານໄພທຳມະຊາດຂອງອົງການ ຄວບຄຸມໄພສຸກເສີນລັດຖະບານກາງ: 1-800-621-3362 (FEMA) ແຈ້ງຄວາມເສຍຫາຍ ໂທ-1-800-462-7585

ແມ່ນ $1,500,000.00 ໂດລາ. ຖ້າທ່ານໄດ້ຮັບການສະເໜີຊື່ເຂົ້າມາໃນໂຄງການນີ້ ທ່ານຈະໄດ້ຮັບຊຸດເອກະສານສະມັກທາງໄປສະນີ. ສຳລັບຂໍ້ມູນເພີ່ມເຕີມ ຫລື ການຊ່ວຍເຫລືອໃນການຂຽນຟອມສະບັບນີ້, ໃຫ້ເບິ່ງຢູ່ຊຸດເອກະສານ ຫລື ເວັບໃຊ້ ຫ້ອງຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) www.sba.gov.

**ໜ່ວຍບໍລິການຜູ້ບໍລິໂພກ:** ມີຄຳປຶກສາກ່ຽວກັບປັນຫາຜູ້ບໍລິໂພກເຊັ່ນ ສິນຄ້າ ຫລື ການບໍລິການບໍ່ມີຈຳໜ່າຍເຊິ່ງຈຳເປັນຕໍ່ການກໍ່ສ້າງຄືນ, ລາຄາບໍ່ສະໝ່ຳສະໝີ, ຄວາມກັງວົນ ແລະ ການປະຕິບັດດ້ານທຸລະກິດ ທີ່ບໍ່ໜ້າເຊື່ອໃຈ, ອື່ນໆ.

**ປຶກສາດ້ານວິກິດ**ການ: ມີການແນະນຳ ແລະ ໃຫ້ຄຳປຶກສາຊ່ວຍເຫລືອໄລຍະສັ້ນ ສຳລັບ ບັນຫາສຸຂະພາບທາງຈິດທີ່ເກີດຈາກ ຫລື ເພີ່ມຂຶ້ນຈາກໄພພິບັດ.

**ຊ່ວຍເຫລືອແກ້ໄຂໃນການຫວ່າງວຽກຍ້ອນໄພພິບັດ:** ການຊ່ວຍເຫລືອນີ້ຈ່າຍເປັນແຕ່ອະທິດໃຫ້ແກ່ຜູ້ທີ່ຫວ່າງວຽກເນື່ອງຈາກມີໄພພິບັດ, ປະກອບມີ ຜູ້ທີ່ເປັນເຈົ້າຂອງຮ້ານໂດຍຈ້າງຕົນເອງ, ເຈົ້າຂອງໄຮ່ສວນ, ແລະ ຜູ້ທີ່ບໍ່ໄດ້ຮັບການຄຸ້ມຄອງຈາກປະກັນໄພຊ່ວຍຄືນຕົກວຽກແບບສາມັນ.

**ການຊ່ວຍເຫລືອສຸກເສີນ:** ອາຫານ, ເຄື່ອງນຸ່ງຮົ່ມ, ທີ່ພັກ, ແລະ ການຊ່ວຍເຫລືອດ້ານການຮັກສາ ໃນຍາມສຸກເສີນ ຈະໄດ້ສະໜອງໃຫ້ ບຸກຄົນ ແລະ ຄົວເຮືອນ ທີ່ມີຄວາມຕ້ອງການດັ່ງກ່າວ ເຊິ່ງເປັນຜົນຈາກໄພພິບັດ. ອົງການກາແດງອາເມຣິກາ (American Red Cross - ARC), ກອງທັບເສຍສະຫລະ (Salvation Army), ກຸ່ມໂບດ, ແລະ ອົງການອາສາສະມັກອື່ນໆທີ່ສາມາດໃຫ້ຄວາມຊ່ວຍເຫລືອ.

**ປຶກສາດ້ານການ**ເງິນ: ໃຫ້ແນວທາງ ແລະ ການຊ່ວຍເຫລືອ ດ້ານການເງິນ ແລະ ເສດຖະກິດ ໃຫ້ແກ່ ບຸກຄົນ ແລະ ບັນດາທຸລະກິດຂະໜາດນ້ອຍ ທີ່ໄດ້ຮັບຜົນກະທົບຈາກ ໄພພິບັດ. **ພັນທະມິດຄວາມຫວັງອາເມຣິກາ** (Hope Coalition America) ໃຫ້ຄຳປຶກສາດ້ານການເງິນໂດຍບໍ່ເກັບເງິນ ແລະ ເອກະສານທີ່ໃຫ້ປະໂຫຍດ ເຊັ່ນ "ຄູ່ມືຊ່ວຍການເງິນສຸກເສີນ" (Emergency Financial First Aid Kit) ແລະ "ຄູ່ມືການກະກຽມດ້ານໄພພິບັດສ່ວນຕົວ." (Personal Disaster Preparedness Guide) ເອກະສານເຫລົ່ານີ້ ມີໄວ້ໃຫ້ ແລະ ສາມາດດາວໂລດໂດຍບໍ່ເສຍເງິນ ຈາກເວັບໄຊດ໌ www.operationhope.org. ສຳຫລັບຂໍ້ມູນເພີ່ມເຕີມໃຫ້ທ່ານໂທໄປ: 1-888-388-4673 (HOPE).

**ການຫລຸດຜ່ອນຄວາມອັນຕະລາຍ:** ທ່ານອາດຈະໄດ້ຮັບທຶນເພື່ອປ້ອງກັນຄວາມເສຍຫາຍທີ່ອາດຈະເກີດໃນອານະຄົດໃນສິ່ງອຳນວຍຄວາມສະດວກໃຫຍ່ຂອງທ່ານ (ຕົວຢ່າງ: ເຄື່ອງຫລອມ, ໝໍ້ຕົ້ມນ້ຳ, ແລະ ການບໍລິການໄຟຟ້າ) ໂດຍການຍົກສູງ ຫລື ຍ້າຍ ສິ່ງອຳນວຍຄວາມສະດວກໃນເຮືອນທ່ານ.

**ໂຄງການໃຫ້ກູ້**ຢືມເງິນ**ສຳຫລັບເຮືອນຢູ່ ຫລື** ຊັບສິນ**ສ່ວນຕົວ:** ການກູ້ຢືມເງິນແກ້ໄຂໄພພິບັດນີ້ໂດຍຜ່ານຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ ແມ່ນມີໃຫ້ ສຳຫລັບ ເຈົ້າຂອງເຮືອນ ຫລື ຜູ້ທີ່ເຊົ່າ ສຳຫລັບ ສ້ອມແປງ ຫລື ປ່ຽນແທນ ຊັບສິນສ່ວນຕົວ ຫລື ອະສັງຫາລິມະຊັບ ທີ່ເກີດຄວາມເສຍຫາຍຈາກໄພພິບັດ. ຈຳນວນເງິນສູງສຸດສຳຫລັບອະສັງຫາລິມະຊັບແມ່ນ $200,000.00 ໂດລາ ແລະ ສຳລັບ ຊັບສິນສ່ວນຕົວແມ່ນ $40,000.00 ໂດລາ. ຈຳນວນເງິນກູ້ນີ້ແມ່ນຈຳກັດຕໍ່ ຄວາມເສຍຫາຍທີ່ຢັ້ງຢືນແລ້ວຂອງ ຫ້ອງຄຸ້ມຄອງທຸລະ

ກິດຂະໜາດນ້ອຍ (SBA) ທີ່ບໍ່ໄດ້ຮັບການປະກັນ. ຖ້າທ່ານໄດ້ຮັບການແນະນຳມາສູ່ໂຄງການນີ້ ທ່ານສາມາດຊອກຂໍ້ມູນເພີ່ມໄດ້ທີ່ "ສະຫລຸບແບບຟອມສະມັກ" ຢູ່ດ້ານຫລັງຟອມສະມັກຂໍຄວາມຊ່ວຍເຫລືອໄພພິບັດ.

**ຂໍ້ມູນດ້ານປະກັນໄພ:** ການຊ່ວຍເຫລືອ ແລະ/ຫລື ໃຫ້ຄຳປຶກສາ ແມ່ນມີໃຫ້ ກ່ຽວກັບ ບັນຫາ ແລະ ຄຳຖາມດ້ານການປະກັນໄພ, ເຊິ່ງອາດຈະລວມເຖິງ ສຳເນົາຂອງໃບນະໂຍບາຍທີ່ເສຍຫາຍ, ການຮ່າງໃບຄຳຮ້ອງ, ການເລັ່ງລັດຈ່າຍເງິນ, ອື່ນໆ. ຖ້າທ່ານຍັງບໍ່ສາມາດແກ້ໄຂບັນຫາຂອງທ່ານ ກັບ ບໍລິສັດປະກັນໄພຂອງທ່ານ ທ່ານຄວນຕິດຕໍ່ຫາ ຄະນະກຳມະການປະກັນໄພແຫ່ງລັດ. ສຳລັບການສອບຖາມຂໍ້ມູນກ່ຽວກັບປະກັນໄພນ້ຳຖ້ວມ, ຕິດຕໍ່ ໂຄງການປະກັນໄພນ້ຳຖ້ວມແຫ່ງຊາດ(National Flood Insurance Program - NFIP).

**ການບໍລິການດ້ານກົດໝາຍ:** ການຊ່ວຍເຫລືອລ້າດ້ານກົດໝາຍ ຫລື ຫລຸດລາຄາ, ປະກອບມີ ຄຳແນະນຳທາງກົດໝາຍ, ປຶກສາ, ແລະ ກໍ່ເປັນຕົວແທນທາງກົດໝາຍກໍ່ມີໃຫ້ຜູ້ທີ່ປະສົບໄພພິບັດທີ່ມີລາຍໄດ້ຕ່ຳ.

**ປະກັນສັງຄົມ:** ການຊ່ວຍເຫລືອມີໃຫ້ໂດຍ ຫ້ອງການຄຸ້ມຄອງປະກັນສັງຄົມ (Social Security Administration - SSA) ໃນການເລັ່ງນຳສົ່ງເຊັກເງິນສົດ ທີ່ຫລ້າຊ້າຍ້ອນ ໄພພິບັດ ແລະ ສຳຫລັບການຊ່ວຍເຫລືອໃນການຂຽນໃບສະມັກເພື່ອປະໂຫຍດປະກັນສັງຄົມ ເພື່ອຄົນພິການ ແລະ ລອດຊີວິດ

**ການຊ່ວຍເຫລືອດ້ານພາສີຈາກລັດຖະບານ**: ກົດໝາຍແຫ່ງຊາດອະນຸຍາດໃຫ້ ຫ້ອງການລາຍຮັບພາຍໃນ (Internal Revenue Service - IRS) ໃຫ້ເງິນບັນເທົາທຸກແກ່ ຜູ້ທີ່ຈ່າຍພາສີ ທີ່ເປັນຜູ້ເຄາະຮ້າຍຈາກໄພພິບັດໃນເຂດທີ່ປະທານາທິບໍດີແຈ້ງການ. ການບັນເທົາທຸກນີ້ປະກອບມີ ການເລື່ອນມື້ຈ່າຍພາສີ ເປັນການໃຫ້ເວລາພິເສດເພື່ອໃຫ້ທ່ານ ຮ່າງເອກະສານ ແລະ ຈ່າຍເງິນກ່ອນມີການປະເມີນຮັບໂທດ, ຈຳນວນເພີ່ມເຕີມ, ຫລື ນອກຈາກພາສີແລ້ວ, ຫລື ຫລຸດຜ່ອນດອກເບ້ຍ ໃນເວລາໄດ້ການຕໍ່ເວລາເພື່ອ ຮ່າງເອກະສານ ຈ່າຍພາສີຍ້ອນກັບ ແລະ ຈ່າຍພາສີ ເພາະວ່າ ທ່ານຢູ່ໃນເຂດໄພພິບັດແຈ້ງປະກາດໂດຍປະທານາທິບໍດີ.

ໂດຍທົ່ວໄປ, ການຈ່າຍບັນເທົາທຸກໄພພິບັດທີ່ຜ່ານການກວດກາ ບໍ່ຈຳເປັນຕ້ອງລາຍງານເປັນລາຍຮັບລວມ. ຈຳນວນເງິນນີ້ປະກອບມີ ເງິນທີ່ໄດ້ມາຈາກແຫລ່ງໃດກໍ່ຕາມ ເພື່ອເປັນຄ່າໃຊ້ຈ່າຍສ່ວນຕົວ,ຄອບຄົວ, ດຳລົງຊີວິດ, ຫລື ຄ່າຈັດງານສົບ ເຊິ່ງເປັນຜົນມາຈາກໄພພິບັດທີ່ແຈ້ງປະກາດໂດຍປະທານາທິບໍດີ. ຫ້ອງການລາຍຮັບພາຍໃນ (IRS) ອາດອານຸຍາດໃຫ້ ການສູນເສຍທາງຊີວິດທີ່ເກີດຈາກ ເຮືອນ, ຊັບສິນສ່ວນຕົວ ແລະ ເຄື່ອງໃຊ້ໃນຄົວເຮືອນ ອາດຈະໄດ້ສ່ວນຫລຸດຈາກ ພາສີລາຍໄດ້ຄືນ ຖ້າທ່ານບໍ່ມີການຮັບຈ່າຍຈາກບໍລິສັດປະກັນໄພ. ຜູ້ຈ່າຍພາສີອາດ ຮ່າງໃບຂໍເງິນຈ່າຍຄືນພາສີກ່ອນ. ຂໍ້ມູນເພີ່ມເຕີມ, ຟອມ ແລະ ສິ່ງສິ່ງພິມມີໄວ້ໃຫ້ທ່ານຢູ່ເວັບໄຊດ໌ ຫ້ອງການລາຍຮັບພາຍໃນ (IRS)
http://www.irs.gov/newsroom/article/0,,id=108362,00.html.

**ການຊ່ວຍເຫລືອດ້ານພາສີແບບອື່ນໆ:** ນັກບັນຊີພາສີເມືອງຈະໃຫ້ຂໍ້ມູນ ແລະ ການຊ່ວຍເຫລືອ ໃນກໍລະນີຫລຸດຜ່ອນພາສີທີ່ອາດຈະເປັນໄປໄດ້.

**ປະໂຫຍດຕໍ່ທະຫານຜ່ານເສິກ:** ຫ້ອງການຄຸ້ມຄອງທະຫານຜ່ານເສິກ (Veterans Administration - VA) ສາມາດເລັ່ງລັດການນຳສົ່ງ ຂໍ້ມູນກ່ຽວກັບຜົນປະໂຫຍດ, ເບັ້ຍບຳນານ, ຈ່າຍເງິນປະກັນໄພ, ແລະ ເງິນກູ້ມັດຈຳຂອງ ຫ້ອງການຄຸ້ມຄອງທະຫານຜ່ານເສິກ (VA).

# ຄຳຖາມ ແລະ ຄຳຕອບ ທີ່ຖືກຖາມເລື່ອຍໆ

1. ເງິນ **ຫລື ລາງວັນທີ່ໄດ້ມາຍ້ອນເກີດໄພພິບັດ: ຫ້ອງການຄຸ້ມຄອງໄພສຸກເສີນແຫ່ງຊາດ** (Federal Emergency Management Agency – FEMA)

*ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແມ່ນຫຍັງ?* ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແມ່ນ ຫ້ອງການຄຸ້ມຄອງໄພສຸກເສີນແຫ່ງຊາດ, ເຊິ່ງຮັບຜິດຊອບການສະຫນອງ ແລະ ປະສານງານບໍລິການໄພສຸກເສີນ ໃນເຂດໄພພິບັດທີ່ປະທານາທິບໍ ແຈ້ງການ. ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ເຮັດວຽກເປັນຫຸ້ນສ່ວນກັບ ພາກສ່ວນອື່ນໆຂອງ*ລັດຖະບານ*ກາງ ແລະ ແລະ *ລັດຖະບານ*ລັດ ແລະ ທ້ອງຖິ່ນ ແລະ ອົງການອາສາສະມັກຕ່າງໆ.

*ປະເພດຂອງໂຄງການຊ່ວຍເຫລືອໄພພິບັດທີ່ມີໃນເວລາມີໄພພິບັດ?* ມີ ສອງປະເພດການຊ່ວຍເຫລືອຫລັກຂອງລັດຖະບານທີ່ຊ່ວຍເຫລືອໃນຍາມມີໄພພິບັດ:

- **ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ** ຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໃຫ້ເງິນ ແລະ ການບໍລິການໂດຍກົງແກ່ຜູ້ປະສົບໄພພິຍັດໃຫຍ່. ເງື່ອນໄຂຕ່າງໆຕ້ອງພຽງພໍເພື່ອໄດ້ ຮັບການຊ່ວຍເຫລືອຈາກໂຄງການນີ້.
- **ອົງການຄຸ້ມຄອງທຸລະກິດຂະຫນາດນ້ອຍສະຫະຫລັດ** ໃຫ້ເງິນກູ້ດອກເບ້ຍຕ່ຳ ສຳຫລັບຄວາມເສຍຫາຍຕໍ່ຊັບສິນ ແກ່ເຈົ້າຂອງ, ຜູ້ເຊົ່າ, ຫ້າງຮ້ານທຸລະກິດ ແລະ ອົງການສ່ວນບຸກຄົນທີ່ບໍ່ຫວັງຜົນກຳໄລ ເຊິ່ງບໍ່ຮັບການຈ່າຍຈາກການປະກັນໄພ.

*ການຊ່ວຍເຫລືອໄພພິບັດຕ້ອງໄດ້ໃຊ້ຄືນບໍ່?* ເງິນທີ່ໄດ້ມາຈາກໂຄງການ ຊ່ວຍເຫລືອບຸກຄົນ ແລະ ຄົວເຮືອນຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ບໍ່ຕ້ອງຈ່າຍຄືນ. ເງິນກູ້ຈາກຫ້ອງການຄຸ້ມຄອງທຸລະກິດຂະຫນາດນ້ອຍ ແມ່ນຕ້ອງໄດ້ຈ່າຍຄືນ.

*ຂ້ອຍສາມາດຂໍຄວາມຊ່ວຍເຫລືອຕໍ່ລົດຂອງຂ້ອຍທີ່ເສຍຫາຍໄດ້ບໍ?* ໄດ້. ທ່ານຈຳເປັນຕ້ອງໃຫ້ຫລັກຖານຄວາມເປັນເຈົ້າຂອງ ແລະ ຂໍ້ມູນການປະກັນໄພ.

*ຂ້ອຍສາມາດຂໍຄວາມຊ່ວຍເຫລືອຕໍ່ສະບຽງອາຫານທີ່ສູນເສຍຫາຍໃນເວລາໄພພິບັດໄດ້ບໍ?* ບໍ່ໄດ້. ການສູນເສຍອາຫານບໍ່ໄດ້ຮັບຈ່າຍໂດຍ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP), ຖ້າຄ່າໃຊ້ຈ່າຍເຫລົ່ານີ້ກ່ຽວຂ້ອງໂດຍກົງຈາກໄພພິບັດ, ສົ່ງບິນລາຍຈ່າຍໄປຫາ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ເພື່ອຊອກຮູ້ວ່າຈະມີການຮັບຈ່າຍບໍ່.

*ມີໂຄງການໃດບໍ່ຈ່າຍຄ່າຍ້າຍ*ເຮືອນ *ແລະ ເກັບເຄື່ອງຂອງ?* ຄ່າໃຊ້ຈ່າຍຂອງການຍ້າຍເຮືອນ ແລະ ຝາກເກັບເຄື່ອງຂອງ ອາດຈະຮັບຈ່າຍໂດຍ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP), ຖ້າຄ່າໃຊ້ຈ່າຍເຫລົ່ານີ້ກ່ຽວຂ້ອງໂດຍກົງຈາກໄພພິບັດ, ສົ່ງບິນລາຍຈ່າຍໄປຫາ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ເພື່ອຊອກຮູ້ວ່າຈະມີການຮັບຈ່າຍບໍ່.

*ຈະມີຫຍັງເກີດຂຶ້ນຫລັງຈາກຂ້ອຍຂໍຄວາມຊ່ວຍເຫລືອຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA)?* ພາຍໃນ 10 ມື້ຫລັງຈາກທ່ານສົ່ງຟອມຂໍ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຖ້າທ່ານບໍ່ໄດ້ມີການປະກັນໄພ ຫລື ຂາດແບບປະກັນໄພທີ່ຫມາະສົມ, ຈະມີຜູ້ກວດກາທີ່ມີຄຸນວຸດທິຕິດຕໍ່ຫາທ່ານເພື່ອນັດເວລາໄປເບິ່ງຄວາມເສຍຫາຍຊັບສິນຂອງທ່ານທີ່ເກີດຈາກໄພພິບັດ. ຄວາມເສຍຫາຍຂອງທ່ານຈະໄດ້ຖືກບັນທຶກ ແລະ ສົ່ງໄປ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP). ພາຍໃນ ສິບກ່ວາມື້, ທ່ານຈະໄດ້ຮັບຄຳຕັດສິນຈາກ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ວ່າທ່ານຈະໄດ້ຊ່ວຍເຫລືອຈາກ ໂຄງການຊ່ວຍເຫລືອ ບຸກຄົນ ແລະ ຄົວເຮືອນ (IHP) ຫລືບໍ່. ຖ້າທ່ານໄດ້ຮັບການແນະນຳມາຈາກຫ້ອງການຄຸ້ມຄອງທຸລະກິດຂະຫນາດນ້ອຍ (SBA). ຫ້ອງການຄຸ້ມຄອງທຸລະກິດຂະຫນາດນ້ອຍ (SBA) ເອງກໍ່ຈະຕິດຕໍ່ທ່ານ ແລະ ນັດຫມາຍເພື່ອຄວາມເສຍຫາຍຂອງທ່ານທີ່ເກີດຈາກໄພພິບັດ.

*ດົນບໍ່ທີ່ຂ້ອຍຈະໄດ້ຮັບຄວາມຊ່ວຍເຫລືອຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA)/ລັດ?* ຖ້າທ່ານມີຄຸນວຸດທິຄົບທີ່ຈະໄດ້ຮັບການຊ່ວຍເຫລືອ, ທ່ານຈະໄດ້ຮັບເຊັກເງິນສົດ ຂອງກະຊວງການເງິນສະຫະລັດ/ລັດ ຫລື ການແຈ້ງເຕືອນບອກວ່າມີການໂອນເຂົ້າບັນຊີທະນາຄານຂອງທ່ານ ພາຍໃນ ສິບມື້ຫລັງຈາກການມາຂອງຜູ້ກວດກາ, ປະເພດອື່ນໆຂອງການຊ່ວຍເຫລືອ ອາດຈະມີໃຫ້ຕາມຫລັງ, ຂຶ້ນກັບຄຸນນະວຸດພິເສດ ແລະ ຄວາມຈຳເປັນ.

*ຖ້າຂ້ອຍມີຄຳຖາມກ່ຽວກັບແບບຟອມຂອງຂ້ອຍ ຫລືຕ້ອງການປ່ຽນແປງບາງຂໍ້ມູນທີ່ຂ້ອຍໃຫ້ໄປກ່ອນ, ຂ້ອຍຄວນເຮັດແນວໃດ?* ໂທໄປ ສາຍດ່ວນຊ່ວຍເຫລືອໄພພິບັດ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) 1-800-621-3362 (FEMA) (ສຳຫລັບຜູ້ທີ່ມີປັນຫາການຟັງ/ເວົ້າເທົ່ານັ້ນ - ໂທ 1-800-462-7585) ຫລື ເຂົ້າເບິ່ງເວັບໃຊ້ www.fema.gov.

*ຖ້າເກີນ 12 ມື້ຫລັງຈາກທີ່ຜູ້ຢ້ຽມຢາມມາ ແລະ ຍັງບໍ່ມີການຕິດຕໍ່ຍັງມາຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຂ້ອຍຄວນເຮັດແນວໃດ?* ໂທໄປສາຍດ່ວນຊ່ວຍເຫລືອໄພພິບັດFEMA 1-800-621-3362 (FEMA) (ສຳຫລັບຜູ້ທີ່ມີບັນຫາການຟັງ/ເວົ້າເທົ່ານັ້ນ - ໂທ 1-800-462-7585) ຫລື ເຂົ້າເບິ່ງເວັບໄຊດ໌ www.fema.gov ເພື່ອກວດກາສະຖາ ນະພາບຂອງແບບຟອມສະມັກຂອງທ່ານ. ຖ້າມີສູນຊ່ວຍໄພພິບັດ (Disaster Recovery Center – DRC) ໃນເຂດທ່ານ, ທ່ານສາມາດສອບຖາມຢູ່ບ່ອນນັ້ນກ່ຽວກັບຂໍ້ມູນຂອງທ່ານ.

*ຖ້າຂ້ອຍບໍ່ເຫັນດີກັບຄຳຕັດສິນ ຫລື ຈຳນວນເງິນທີ່ໄດ້ຮັບຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຂ້ອຍຕ້ອງເຮັດແນວໃດ?* ທ່ານສາມາດອຸທອນຄຳຕັດສິນ. ຂັ້ນຕອນການອຸທອນ ແມ່ນຢູ່ໃນຄູ່ມືສະບັບນີ້ (ຫນ້າ 10), ຫລື ໂທໄປສາຍດ່ວນຊ່ວຍເຫລືອໄພພິບັດ ອົງການ ຄວບຄຸມໄພສຸກເສີນລັດຖະບານ

ກາງ (FEMA) 1-800-621-3362 (FEMA) (ສຳຫລັບຜູ້ທີ່ມີບັນຫາການຟັງ/ເວົ້າເທົ່ານັ້ນ - ໂທ 1-800-462-7585) ເພື່ອຂໍ້ມູນເພີ່ມເຕີມກ່ຽວກັບການອຸທອນ.

*ປະເພດເອກະສານຄວາມເປັນເຈົ້າຂອງແບບໃດທີ່ຂ້ອຍເອົາໃຫ້ເພື່ອສະຫນັບສະຫນູນແບບຟອບຂໍຄວາມຊ່ວຍເຫລືອຂອງຂ້ອຍ?* ລຸ່ມນີ້ ແມ່ນເອະສານບາງປະເພດທີ່ອາດຈະໃຊ້ຢັ້ງຢືນໃນການເປັນເຈົ້າຂອງ:

- ຫນັງສືສັນຍາ ຫລື ບົດບັນທຶກທາງການ ອາດຈະເປັນຫນັງສືສັນຍາທີ່ເປັນທາງການ ຫລື ຫນັງສືສິນເຊື່ອທີ່ແຈ້ງຕໍ່ລາຍຊື່ຊັບສິນທີ່ທ່ານເປັນເຈົ້າຂອງ.

- ເລກທີວບົດ ເຊິ່ງຊີ້ບອກວ່າຊື່ທ່ານຢູ່ໃນຫນັງສືສັນຍາ ຫລື ທີວບົດເອກະສານໃນການຊື່ບ່ອນຢູ່ອາໄສ

- ປື້ມບັນຊີການມັດຈຳ ຫລື ຫນັງສືການມັດຈຳອື່ນໆ (ຕົວຢ່າງ: ຫມາຍເຫດການຈ່າຍຊ້າ, ແຈ້ງເຕືອນການຍຶດຊັບສິນຄ້ຳປະກັນ) - ສາມາດໃຊ້ເພື່ອພິສູດຄວາມເປັນເຈົ້າຂອງ ຖ້າຊື່ຂອງທ່ານມີຢູ່ໃນທີ່ຢູ່ຂອງເຮືອນທີ່ເສຍຫາຍ.

- ການປະກັນອະສັງຫາລິມະຊັບ ຕ້ອງແມ່ນເຮືອນທີ່ເສຍຫາຍ ແລະ ມີຊື່ຂອງທ່ານຢູ່ໃນລາຍຊື່ຜູ້ປະກັນ.

- ໃບຈ່າຍພາສີ ຫລື ບິນພາສີຊັບສິນ ຊີ້ບອກເຮືອນທີ່ເສຍຫາຍ ແລະ ມີຊື່ທ່ານທີ່ບອກວ່າເປັນຝ່າຍຮັບຜິດຊອບຕໍ່ຄ່າພາສີ.

*ຕ້ອງມີເອກະສານແຈ້ງບອກການຢູ່ອາໄສແບບໃດທີ່ຂ້ອຍຈະເອົາໃຫ້ເພື່ອສະຫນັບສະຫນູນແບບຟອມຂ້ອຍ?* ລຸ່ມນີ້ ແມ່ນເອະສານບາງປະເພດທີ່ອາດຈະໃຊ້ຢັ້ງຢືນການຢູ່ອາໄສ:

- ບິນຮັບເງິນຂອງສິ່ງອຳນວຍຄວາມສະດວກ ຂອງເຮືອນທີ່ເສຍຫາຍພ້ອມດ້ວຍຊື່ຂອງທ່ານ (ຫລື ຊື່ຂອງຜູ້ສະມັກຮ່ວມ). ບິນຮັບເງິນດັ່ງກ່າວຕ້ອງແມ່ນກ່ຽວກັບສິ່ງອຳນວຍຄວາມສະດວກຫລັກ ເຊັ່ນ: ໄຟຟ້າ, ແກດສ໌, ຫລື ນ້ຳ.

- ຄຳຊຽນຂອງຜູ້ຂາຍເຄື່ອງ ສົ່ງເຖິງເຮືອນທີ່ເສຍຫາຍພ້ອມລົງຊື່ທ່ານ (ຫລື ຊື່ ຂອງຜູ້ສະມັກຮ່ວມ). ຄຳເວົ້າຂອງຜູ້ຂາຍເຄື່ອງປະກອບມີ: ບິນຂອງບັດເຄຣດິດ, ໃບແຈ້ງສົ່ງເຄື່ອງ, ຫລື ຈົດຫມາຍຊັ້ນຫນຶ່ງທີ່ຈ່າຫນ້າຊອງເຖິງທ່ານ ແລະ ຊີ້ບອກທີ່ຢູ່ເຮືອນທີ່ເສຍຫາຍ.

- ຈົດໝາຍຢັ້ງຢືນຂອງນາຍຈ້າງ ສົ່ງເຖິງເຮືອນທີ່ເສຍຫາຍພ້ອມລົງຊື່ທ່ານ (ຫລື ຊື່ ຂອງຜູ້ສະມັກຮ່ວມ). ຈົດໝາຍຢັ້ງຢືນຂອງນາຍຈ້າງທີ່ອ້າງເຖິງ ລາຍຈ່າຍເງິນເດືອນ ແລະ ເອກະສານຕ່າງໆທີ່ຄ້າຍຄືສົ່ງເຖິງທ່ານ ແລະ ຊີ້ບອກທີ່ຢູ່ເຮືອນທີ່ເສຍຫາຍ.

- ໃບຂັບຂີ່ ຫລື ບໍ່ຂັບຂີ່ປະຈຸບັນ ຊີ້ບອກທີ່ຢູ່ເຮືອນທີ່ເສຍຫາຍ.

*ຂ້ອຍສາມາດເອົາຂໍ້ມູນກ່ຽວກັບປະກັນໄພນ້ຳຖ້ວມຢູ່ໃສ?* ໂທຫາຕົວແທນປະກັນໄພ ຊີວິດ ແລະຊັບສິນທ້ອງຖິ່ນທີ່ມີໃບອະນຸຍາດ ຫລື ໂທຫາ ໂຄງການປະກັນໄພນ້ຳຖ້ວມແຫ່ງຊາດ ທີ່ເບີ 1-800-427-4661.

*ຂ້ອຍຄວນອານາໄມເຮືອນກ່ອນມີການກວດກາບໍ່?* ທ່ານອາດມີການອະນາໄມກ່ອນມີການກວດກາ. ຖ້າເປັນໄປໄດ້, ຖ່າຍຮູບຄວາມເສຍຫາຍກ່ອນອະນາໄມ.

*ຂ້ອຍຄວນຮັກສາໃບບິນບໍ່?* ແມ່ນ, ທ່ານຄວນເກັບໃບບິນຂອງທຸກຄ່າໃຊ້ຈ່າຍ.

**2.** ເງິນກູ້ຢືມເພື່ອໄພພິບັດ: ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍສະຫະລັດ (SBA):

*ເປັນຫຍັງຂ້ອຍໄດ້ຮັບແບບຟອມກູ້ເງິນໄພພິບັດຂອງ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ຫລັງຈາກສະໝັກຂໍໄປ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ FEMA?* ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ແມ່ນ ແຫລ່ງທຶນຫຳອິດຂອງກອງທຶນລັດຖະບານເພື່ອຄວາມຊ່ວຍເຫລືອຟື້ນຟູໄລຍະຍາວ ສຳຫລັບຜູ້ເຄາະຮ້າຍຈາກໄພພິບັດ. ສຳຫລັບຄວາມເສຍຫາຍຈາກໄພພິບັດ ຕໍ່ຊັບສິນສ່ວນບຸກຄົນ ເປັນເຈົ້າຂອງໂດຍ ເຈົ້າຂອງເຮືອນ, ຜູ້ເຊົ່າ, ແລະ ຮ້ານຄ້າທຸລະກິດທຸກຂະໜາດທີ່ບໍ່ແມ່ນໄຮ່ສວນ, ເຊິ່ງປະກັນໄພຈ່າຍບໍ່ເຕັມ, ແບບພື້ນຖານຂອງການຊ່ວຍເຫລືອຂອງລັດຖະບານ ແມ່ນ ເງິນກູ້ດອກເບ້ຍຕ່ຳຈາກ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA). ເມື່ອໃຫ້ຢືມເງິນທີ່ສາມາດຈ່າຍຄືນໄດ້. ໂຄງການກູ້ຍືມເງິນໄພພິບັດ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ສາມາດຊ່ວຍຜູ້ເຄາະຮ້າຍຈາກໄພພິບັດຈ່າຍວຽກສ້ອມແປງໃນເວລາດຽວກັນກໍ່ຮັກສາລາຍຈ່າຍຂອງຜູ້ຈ່າຍພາສີຢູ່ໃນລະດັບຢ່າງສົມເຫດສົມຜົນ.

ຂ້ອຍສາມາດຫາຄວາມຊ່ວຍເຫລືອໃນການຂຽນຟອມຂໍກູ້ເງິນໄພພິບັດ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ໄດ້ແນວໃດ? ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ມີພະນັກງານທີ່ໃຫ້ເງິນກູ້ຢູ່ຫ້ອງການບັນເທົາໄພພິບັດ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ທ້ອງຖິ່ນທີ່ຈະໃຫ້ບໍລິການແບບໜ້າຕໍ່ໜ້າກັບຜູ້ເຄາະຮ້າຍໄພພິບັດ. ທ່ານອາດຈະເຂົ້າໄປບ່ອນໃດກໍ່ໄດ້ໃນສະຖານທີ່ເຫລົ່ານີ້ໂດຍບໍ່ຕ້ອງນັດໄວ້ກ່ອນ. ຫ້ອງການຕົວແທນພ້ອມທີ່ຈະຕອບຄຳຖາມ ແລະ ຊ່ວຍຂຽນຟອມຂອງທ່ານໃຫ້ແລ້ວ. ຢາກຮູ້ວ່າທີ່ຕັ້ງຂອງຫ້ອງການຊ່ວຍເຫລືອໄພພິບັດ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ຕັ້ງຢູ່ໃສ, ໂທ SBA ທີ່ເບີ 1-800-488-5323..

**ຖ້າທ່ານໄດ້ຮັບເຊັກເງິນສົດຈາກ FEMA ແລ້ວ, ແຕຍັງບໍ່ພໍສຳລັບທຸກວຽກທີ່ຈຳເປັນໃນການສ້ອມແປງຄວາມເສຍຫາຍ, ຂ້ອຍສາມາດຫາຄວາມຊ່ວຍເຫລືອເພີ່ມເຕີມໄດ້ບໍ?** ໄດ້, ເງິນກູ້ຢືມໄພພິບັດຂອງ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ມີໄວ້ເພື່ອ ຈ່າຍຄ່າສ້ອມແປງທີ່ຍັງບໍ່ທັນໄດ້ໄດ້ຈ່າຍທົດແທນເຕັມ. ຟອມສະໝັກຂໍຕ້ອງຂຽນເຖິງ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ເພື່ອຈຳນວນເງິນ ເພີ່ມເຕີມທີ່ຕ້ອງການສຳລັບການຟື້ນຟູຢ່າງສົມບູນ.

*ຂ້ອຍຄິດວ່າຂ້ອຍສາມາດຈ່າຍຄ່າສ້ອມແປງດ້ວຍຕົນເອງ, ຕ້ອງຄວນສະໝັກຂໍເງິນກູ້ຢືມໄພພິບັດບໍ?* ທ່ານອາດຈະພົບພໍ້ວ່າຄ່າສ້ອມແປງທັງໝົດດ້ວຍຕົນເອງແມ່ນຫລາຍກວ່າທີ່ທ່ານວາງແຜນໄວ້. ດ້ວຍເງິນກູ້ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ທີ່ໄດ້ຮັບການອະນຸມັດ, ທ່ານຈະຮູ້ວ່າທຶນທີ່ສາມາດສ້ອມແປງທັງໝົດ

ສາຍດ່ວນບັນເທົາທຸກດ້ານໄພທຳມະຊາດຂອງອົງການ ຄວບຄຸມໄພສຸກເສີນລັດຖະບານກາງ: 1-800-621-3362 (FEMA) ແຈ້ງຄວາມເສຍຫາຍ ໂທ-1-800-462-7585

ແມ່ນມີໃຫ້. ເຖິງວ່າບໍ່ມີໃຜຢາກເປັນໜີ້, ແຕ່ເງິນກູ້ຢືມດອກເບ້ຍຕໍ່າ ພ້ອມດ້ວຍອັດຕາຈ່າຍທີ່ບໍ່ແພງຫລາຍ ມັນແມ່ນທາງເລືອກທີ່ດີກ່ວາ ຈະບໍ່ເຮັດການສ້ອມແປງທີ່ສົມບູນ.

***ຈະເປັນແນວໃດຖ້າຂ້ອຍບໍ່ສາມາດກູ້ຢືມເງິນເພື່ອສ້ອມແປງຊັບສິນ?*** ຖ້າ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ກໍານົດວ່າທ່ານບໍ່ສາມາດຂໍເງິນກູ້ໄດ້, ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ຈະແນະນໍາທ່ານກັບຄືນສູ່ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ເພື່ອຄວາມຊ່ວຍເຫລືອເພີ່ມໂດຍອັດຕະໂນມັດ. ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ອາດຈະໃຫ້ເງິນນອກເໜືອນອກຈາກຄວາມຕ້ອງການທາງທີ່ຢູ່ອາໄສ; ຢ່າງໃດກໍ່ຕາມ, ການຊ່ວຍເຫລືອເພີ່ມເຕີມນີ້ບໍ່ມີໃຫ້ບັນດາຮ້ານຄ້າທຸລະກິດ. ຄວາມຊ່ວຍເຫລືອເພີ່ມເຕີມຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແມ່ນແນ່ໃສ່ຕອບສະໜອງຄ່າໃຊ້ຈ່າຍທີ່ຈໍາເປັນ ແລະ ຄວາມຕ້ອງການທີ່ຮ້າຍແຮງເຊິ່ງຄວາມຊ່ວຍເຫລືອປະເພດອື່ນຊ່ວຍບໍ່ໄດ້, ປະກອບມີ ການປະກັນໄພ ແລະ ເງິນກູ້ຢືມໄພພິບັດ ຂອງ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA). **ສິ່ງທີ່ຄວນຈື່,** ຖ້າທ່ານໄດ້ຮັບຟອມເງິນກູ້ໄພພິບັດ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) , ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ຈະບໍ່ແນະນໍາທ່ານກັບຄືນມາອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຈົນກ່ວາຟອມຂໍກູ້ເງິນທີ່ຂຽນສົມບູນຈະສົ່ງໄປຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ແລະ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ຢັ້ງຢືນວ່າທ່ານບໍ່ສາມາດກູ້ຢືມເງິນໄດ້. ທ່ານບໍ່ຈໍາເປັນຕ້ອງຂຽນຟອມກູ້ຢືມເງິນ ຫ້ອງການຄຸ້ມຄອງທຸລະກິດຂະໜາດນ້ອຍ (SBA) ເພື່ອໃຫ້ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ພິຈາລະນາ ຊ່ວຍເຫລືອເຮືອນເຊົ່າ.

## 3. ສິດພົນລະເຮືອນຂອງທ່ານ ແລະ ຄວາມຊ່ວຍເຫລືອໄພພິບັດ

***ຮູບການຈໍາແນກແບບໃດທີ່ກົດໝາຍວ່າດ້ວຍສິດພົນລະເຮືອນຫ້າມ?*** ມີຫລາຍປະເພດການຈໍາແນກທີ່ຜິດກົດໝາຍເຊິ່ງຈໍາກັດໂອກາດຄົນບໍ່ໃຫ້ມີການນໍາໃຊ້ເທົ່າທຽມ ການບໍລິການ ແລະ ໂຄງການຕ່າງໆ. ເໜືອສິ່ງອື່ນໃດທັງໝົດ, ໃນການດໍາເນີນການໂຄງການຊ່ວຍເຫລືອໂດຍ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຜູ້ໄດ້ຮັບ (ຫ້ອງການທ້ອງຖິ່ນ ແລະ ແຫ່ງລັດ ທີ່ໄດ້ຮັບທຶນຊ່ວຍເຫລືອໄພພິບັດ ຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA)) ບໍ່ສາມາດ, ບົນພື້ນຖານເຊື້ອຊາດ, ສີຜິວ, ສາດສະໜາ, ສັນຊາດ, ເພດ, ອາຍຸ ຫລື ຖານະທາງເສດຖະກິດ, ຫລື ແບບໂດຍກົງ ຫລື ຜ່ານສັນຍາ:

- ປະຕິເສດໃຫ້ການບໍລິການ, ການຊ່ວຍເຫລືອ, ຫລື ຜົນປະໂຫຍດໂຄງການ;
- ໃຫ້ການບໍລິການ, ການຊ່ວຍເຫລືອ, ຫລື ຜົນປະໂຫຍດທີ່ແຕກຕ່າງໆ ຫລື ໃຫ້ບໍລິການສິ່ງເຫລົ່ານີ້ໃນປະຕິກິລິຍາທີ່ຕ່າງຈາກເວລາເຮັດໃຫ້ຜູ້ອື່ນ; ຫລື,
- ແບ່ງແຍກ ຫລື ປະຕິບັດແບບຈໍາແນກບຸກຄົນ ໃນບັນຫາໃດກໍ່ຕາມທີ່ກ່ຽວກັບການໄດ້ຮັບບໍລິການ, ຄວາມຊ່ວຍເຫລືອ, ຫລື ຜົນປະໂຫຍດ.

ຂໍ້ຫ້າມເຫລົ່ານີ້ແມ່ນຍັງນຳໃຊ້ກັບ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ເອງ ໃນການປະຕິບັດວຽກງານໂຄງການພາກລັດ.

***ຖ້າຂ້ອຍຢາກເຮັດໃບຮ້ອງທຸກກ່ຽວກັບສິດພົນລະເຮືອນຈະເຮັດແນວໃດ?*** ຫ້ອງການລັດຖະບານແຕ່ລະແຫ່ງທີ່ໃຫ້ການຊ່ວຍເຫລືອທາງດ້ານການເງິນ ແມ່ນມີໜ້າທີ່ຮັບຜິດຊອບສຳຫລັບການກວດສອບໃບຮ້ອງທຸກວ່າດ້ວຍການຈຳແນກໃນການນຳໃຊ້ກອງທຶນນີ້. ຖ້າທ່ານເຊື່ອວ່າ ທ່ານ ຫລື ຜູ້ອື່ນ ຜູ້ທີ່ໄດ້ຮັບການປົກປ້ອງຈາກກົດໝາຍສິດທິພົນລະເຮືອນ ຖືກຈຳແນກໃນການຮັບການຊ່ວຍເຫລືອໄພພິບັດ, ທ່ານອາດຈະຕິດຕໍ່ມາ ໜຶ່ງໃນເຈົ້າໜ້າທີ່ຮັບຜິດຊອບດ້ານສິດທິສະເໝີພາບ (Equal Rights Officers - ERO), ຜູ້ທີ່ມີໜ້າທີ່ຮັບປະກັນສິດທິເທົ່າທຽມໃນການໄດ້ຮັບ ທຸກໆໂຄງການຊ່ວຍເຫລືອໄພພິບັດ FEMA. ERO ຈະພະຍາຍາມແກ້ໄຂບັນຫາຂອງທ່ານ. ທ່ານອາດຈະຕິດຕໍ່ ERO ໂດຍໂທມາ 1-800-621-3362 (FEMA) (1-800-621-FEMA) ຫລື TTY 1-800-462-7585

ຖ້າບັນຫາບໍ່ສາມາດແກ້ໄຂໄດ້, ທ່ານອາດຈະຂຽນໃບຮ້ອງທຸກເຖິງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ໃບຮ້ອງທຸກທີ່ຂຽນ ແລະ ເຊັນ ຕ້ອງສົ່ງໄປຫ້ອງດ້ານສິດທິເທົ່າທຽມ (Office of Equal Rights), ໂດຍທົ່ວໄປ ພາຍໃນ 180 ມື້ຫລັງຈາກທີ່ໄດ້ຮັບການຈຳແນກ. ໃບຮ້ອງ ທຸກຕ້ອງມີ:

- ຊື່ຂອງທ່ານ, ທີ່ຢູ່ ແລະ ເລກໂທລະສັບ. ໃບຮ້ອງທຸກຂອງທ່ານຕ້ອງໄດ້ເຊັນ. ຖ້າທ່ານຂຽນແທນຜູ້ອື່ນ, ໃຫ້ຂຽນຊື່ຂອງທ່ານ, ທີ່ຢູ່ ແລະ ເລກໂທລະສັບ ແລະ ຄວາມສຳພັນລະຫວ່າງທ່ານ ແລະ ຜູ້ກ່ຽວ (ຕົວຢ່າງ: ໝູ່ເພື່ອນ, ທະນາຍ, ພໍ່ແມ່, ອື່ນໆ.)
- ຊື່ ແລະ ທີ່ຢູ່ຂອງຫ້ອງການ, ສະຖາບັນ ຫລື ພະແນກ ທີ່ທ່ານເຊື່ອວ່າຈຳແນກທ່ານ.
- ແນວໃດ, ສາເຫດໃດ, ແລະ ເມື່ອໃດທີ່ທ່ານເຊື່ອວ່າຕົວເອງຖືກຫັກຫລັງຊັງບຽງ. ລວມມີ ຂໍ້ມູນເບື້ອງຫລັງເທົ່າທີ່ຈະບອກຫລາຍໃດກ່ຽວກັບການປະພຶດຈຳແນກທີ່ໄດ້ຮັບ. ລວມເຖິງ ຊື່ຂອງບຸກຄົນດັ່ງກ່າວ ຜູ້ທີ່ທ່ານກ່າວວ່າເລືອກປະຕິບັດຕໍ່ທ່ານ, ຖ້າທ່ານຮູ້.
- ຊື່ຂອງ ຜູ້ໃດກໍ່ຕາມ, ຖ້າຮູ້, ທີ່ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ສາມາດຕິດຕໍ່ຫາຂໍ້ມູນເພີ່ມເຕີມເພື່ອສະໜັບສະໜູນ ຫລື ອະທິບາຍການກ່າວຫາຂອງທ່ານກ່ຽວກັບການຈຳແນກໃນການດຳເນີນວຽກຂອງໂຄງການຂອງລັດຖະບານ.

***ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຈະເຮັດແດ່ກັບໃບຮ້ອງທຸກຂອງຂ້ອຍ?*** ເມື່ອຂຽນໃບຮ້ອງທຸກແລ້ວ, ຈະໄດ້ມີການກວດຄືນໂດຍ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ເພື່ອຢັ້ງຢືນວ່າຈະມີສິດອຳນາດທາງກົດໝາຍວ່າຈະສືບສວນ ບັນຫາດັ່ງກ່າວທີ່ທ່ານຍົກຂຶ້ນມາ. ຖ້າໃບຮ້ອງທຸກຂອງທ່ານຖືກຮັບຮອງ, ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຈະສອບສວນ ແລະ ພະຍາຍາມແກ້ບັນຫາການລະເມີດໃດໆກໍ່ຕາມທີ່ພົບເຫັນ. ຖ້າການເຈລະຈາທີ່ຈະແກ້ໄຂການລະເມີດບໍ່ເປັນຜົນ, ຂັ້ນຕອນການດຳເນີນຄະດີຈະໄດ້ເອົາມານຳໃຊ້.

***ຈະເປັນແນວໃດຖ້າຂ້ອຍຈະຖືກແກ້ແຄ້ນຍ້ອນປົກປ້ອງສິດຂອງຂ້ອຍ ແລະ ຂຽນໃບຮ້ອງທຸກ?*** ທ່ານຕ້ອງເຂົ້າໃຈວ່າ ຜູ້ຮັບ ແລະ ຫ້ອງການຝ່າຍລັດຖືກຫ້າມບໍ່ໃຫ້ມີການແກ້ແຄ້ນທ່ານ ຫລື ຜູ້ໃດກໍ່ຕາມ ຍ້ອນວ່າເຂົາ ຫລື ນາງ ເຮັດຄັດກັບນະໂຍບາຍ ແລະ ການປະຕິບັດ, ຫລື ເກັບເງິນເພີ່ມ, ໃຫ້ຄໍາປະຕິຍານ, ຫລື ເຂົ້າມີສ່ວນຮ່ວມໃນວຽກຮ້ອງທຸກ ພາຍໃຕ້ ກົດຫມາຍສິດທິພົນລະເຮືອນ. ຖ້າທ່ານເຊື່ອວ່າທ່ານໄດ້ຮັບການແກ້ແຄ້ນ, ທ່ານຄວນຕິດຕໍ່ ຫ້ອງການວ່າດ້ວຍສິດທິເທົ່າທຽມ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໂດຍທັນທີ.

# ອະທິບາຍເຫດຜົນທີ່ບໍ່ໄດ້ຮັບສິດ

1. **ຄຳຕັດສິນທຳອິດ**

**I69B - ບໍ່ມີສິດ - ລາຍເຊັນທີ່ບໍ່ຈຳເປັນຕ້ອງມີ:** ອີງໃສ່ບົດບັນທຶກຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ບໍ່ຈຳເປັນຕ້ອງມີຟອມ ບັນທຶກ ແລະ ແລະ ຂໍ້ຕົກລົງ (90-69B) ທີ່ມີລາຍເຊັນຂອງຊຸດສະມັກນີ້. ຟອມນີ້ມີຄວາມຈຳເປັນກ່ອນທີ່ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຈະໃຫ້ຄວາມຊ່ວຍເຫລືອໄດ້.

**IAW: ການບໍ່ມີສິດໄດ້ຮັບສິດຜົນປະໂຫຍດຕ່າງໆ ທີ່ຢູ່ທີ່ຄືກັນ:** ອີງຕາມການບັນທຶກຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ໃນຍາມທີ່ເກີດມີມະຫັນຕະໄພ, ຜູ້ຍື່ນເອກະສານ ທີ່ເຄີຍອາໄສຢູ່ທີ່ຢູ່ດຽວກັນກັບບຸກ ຄົນໃດໜຶ່ງທີ່ໄດ້ຍື່ນເອກະສານໄປຍັງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ສຳລັບການຂໍຄວາມຊ່ວຍເຫຼືອໃນການປົວແປງເຮືອນຊານແລ້ວ. ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ສາມາດສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ຍື່ນຂໍຄວາມຊ່ວຍເຫຼືອ 1 ສະບັບຕໍ່ໜຶ່ງຫຼັງເຮືອນເທົ່ານັ້ນ.

**IDUPA: ການບໍ່ມີສິດໄດ້ຮັບຜົນປະໂຫຍດຕ່າງໆ: ການລົງທະບຽນຊ້ຳຊ້ອນ:** ອີງຕາມການບັນທຶກຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຜູ້ຍື່ນຄຳຮ້ອງແມ່ນມີຄຳຮ້ອງຂໍການຊ່ວຍເຫຼືອທີ່ລົງທະບຽນຢູ່ໃນລະບົບໄວ້ແລ້ວສຳລັບມະຫັນຕະໄພນັ້ນ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ສາມາດພິຈາລະນາໄດ້ພຽງ 1 ຄຳຮ້ອງຕໍ່ 1 ຜູ້ສະໝັກເທົ່ານັ້ນ.

**IID: ການບໍ່ມີສິດຮັບຜົນປະໂຫຍດຕ່າງໆ ຄວາມເສຍຫາຍທີ່ບໍ່ພຽງພໍ:** ອີງຕາມການສັງເກດການຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ແມ່ນໄດ້ຖືກຄິດໄລ່ວ່າມະຫັນຕະໄພດັ່ງກ່າວແມ່ນບໍ່ໄດ້ສົ່ງຜົນໃຫ້ແກ່ເຮືອນຂອງຜູ້ຍື່ນຄຳຮ້ອງເສຍຫາຍຈົນເຖິງຂັ້ນທີ່ບໍ່ສາມາດອາໄສຢູ່ໄດ້ໂດຍປອດໄພ. ການຕີລາຄາດັ່ງກ່າວນີ້ ແມ່ນໄດ້ອີງຕາມຄວາມເສຍຫາຍທີ່ເກີດຂຶ້ນໃສ່ເຮືອນເຮືອນເນື່ອງຈາກມະຫັນຕະໄພພຽງ ຢ່າງດຽວເທົ່ານັ້ນ.

**IIDV: ການບໍ່ມີສິດຮັບຜົນປະໂຫຍດຕ່າງໆ - ການບົ່ງໂຕຜູ້ຍື່ນຄຳຮ້ອງຜິດພາດ:** ກ່ອນຈະມີການພິຈາລະນາຄຳຮ້ອງຂໍຄວາມຊ່ວຍເຫຼືອຈາກມະຫັນຕະໄພໄດ້ນັ້ນ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຕ້ອງໄດ້ບົ່ງຂໍ້ມູນທີ່ໄດ້ຖືກຈັດຕຽມໄວ້ໃນໃບສະເໜີ. ໃນຂະນະນີ້ ພວກເຮົາບໍ່ສາມາດບົ່ງວ່າຊື່ຂອງຜູ້ຮ້ອງຂໍ ແລະ ນຳສະເໜີບັດປະກັນສັງຄົມຖືກກັນເພື່ອທີ່ຈະເອົາມາບອກວ່າຜູ້ຮ້ອງຂໍແມ່ນໃຜໄດ້.

**IMI: ການບໍ່ມີສິດຮັບຜົນປະໂຫຍດຕ່າງ - ການສັງເກດການຕີລາຄາທີ່ຜິດພາດ:** ອີງຕາມການບັນທຶກຂອງພວກເຮົາ, ຜູ້ຮ້ອງຂໍແມ່ນບໍ່ມີການນັດພົບກັບຜູ້ສັງເກດຕີລາຄາຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ເພື່ອທີ່ຈະຖືກພິຈາລະນາເປັນເຮືອນທີ່ຕ້ອງການຄວາມຊ່ວຍເຫຼືອຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຜູ້ຍື່ນຄຳຮ້ອງ (ຫຼື ສະມາຊິກທີ່ອາໄສຢູ່ໃນເຮືອນທີ່ມີອາຍຸເກີນ 18 ປີ) ຕ້ອງໄດ້ມາພົບກັບຜູ້ສັງເກດຕີລາຄາ, ເພື່ອທີ່ຈະຕີລາຄາຄວາມເສຍຫາຍທີ່ເກີດຂຶ້ນຈາກມະຫັນຕະໄພ ຕໍ່ກັບເຮືອນຫຼັງດັ່ງກ່າວໄດ້. ໃນກໍລະນີນີ້, ຜູ້ຍື່ນຄຳຮ້ອງຈະບໍ່ມີສິດໄດ້ຮັບຜົນປະໂຫຍດທີ່ຈະໄດ້ຮັບການຊ່ວຍເຫຼືອໃນການປົວແປງເຮືອນເຮືອນຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

**INCI: ການບໍ່ມີສິດຮັບຜົນປະໂຫຍດຕ່າງໆ - ບໍ່ມີການຕິດຕໍ່ໃນການສັງເກດຕີລາຄາ:** ຜູ້ສັງເກດຕີລາຄາຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ບໍ່ສາມາດຕິດຕໍ່ພົວພັນກັບຜູ້ຍື່ນໃບຄຳຮ້ອງເພື່ອເຮັດການນັດໝາຍ. ເພື່ອ

ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຈະສາມາດພິຈາລະນາໃຫ້ການຊ່ວຍເຫຼືອທີ່ກ່ຽວກັບເຮືອນຊານໄດ້ ຜູ້ຮ້ອງຂໍ (ຫຼື ສະມາຊິກທີ່ອາໄສຢູ່ໃນເຮືອນທີ່ມີອາຍຸເກີນ 18ປີ) ຕ້ອງໄດ້ມາພົບກັບຜູ້ສັງເກດຕີລາຄາ ເພື່ອທີ່ຈະຕີລາຄາ ຄວາມເສຍຫາຍຂອງເຮືອນທີ່ເກີດຈາກມະຫັນຕະໄພໄດ້. ໃນກໍລະນີນີ້, ຜູ້ຮ້ອງຂໍບໍ່ມີສິດໄດ້ຮັບຜົນປະໂຫຍດຈາກການ ພິຈາລະນາໃນການໃຫ້ຄວາມຊ່ວຍເຫຼືອຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

**INFI: ການບໍ່ມີສິດຮັບຜົນປະໂຫຍດຕ່າງ - ປະກັນໄພ/ອຸທົກກະໄພ**: ອີງຕາມການບັນທຶກຂອງພວກເຮົາ, ເຮືອນທີ່ຜູ້ ຍື່ນໃບສະເໜີອາໄສຢູ່ໃນຂະນະທີ່ເກີດມະຫັນຕະໄພນັ້ນ ແມ່ນເປັນເຮືອນທີ່ມີປະກັນອຸທົກກະໄພ. ໃນກໍລະນີນີ້, ຜູ້ຮ້ອງຂໍ ບໍ່ມີສິດໄດ້ຮັບສິດຜົນປະໂຫຍດໃດໆໃນການຂໍເອົາການຊ່ວຍເຫຼືອ ສໍາລັບເຮືອນທີ່ຖືກເສຍຫາຍຈາກເຮືອນທີ່ມີປະກັນອຸທົກ ກະໄພແລ້ວ.

**INI: ການບໍ່ມີສິດຮັບຜົນປະໂຫຍດຕ່າງໆ - ປະກັນໄພ (ໂດຍມີການສັງເກດຕີລາຄາ)**: ອີງຕາມການບັນທຶກຂອງ ພວກເຮົາ, ເຮືອນທີ່ຜູ້ຍື່ນໃບຄໍາຮ້ອງອາໄສຢູ່ໃນຂະນະທີ່ມີປະກັນມະຫັນຕະໄພ. ຄວາມເສຍຫາຍໃດໆທີ່ໄດ້ຖືກບົ່ງໄວ້ ການສັງເກດຕີລາຄາຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຄວນໄດ້ຖືກຮັບຜິດຊອບໂດຍ ປະກັນໄພຂອງຜູ້ຍື່ນຄໍາຮ້ອງນັ້ນ. ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ບໍ່ສາມາດໃຫ້ການຊ່ວຍ ເຫຼືອເຊິ່ງໄດ້ມາຈາກບ່ອນອື່ນແລ້ວ, ລວມທັງປະກັນໄພ. ສະນັ້ນຜູ້ຮ້ອງຂໍບໍ່ມີສິດໄດ້ຮັບສິດ ຜົນປະໂຫຍດໃນການ ຊ່ວຍເຫຼືອສ້ອມແປງ ແລະ ການປ່ຽນແທນເຮືອນຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໄດ້ ໃນກໍລະນີນີ້. ຜູ້ຮ້ອງຂໍຕ້ອງປະກັນໃບຄໍາຮ້ອງກັບບໍລິສັດປະກັນໄພຂອງພວກເຂົາໄວເທົ່າທີ່ຈະໄວໄດ້ເພາະວ່າ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ອາດຈະຊ່ວຍເຫຼືອຄວາມເສຍຫາຍທີ່ປະກັນໄພບໍ່ໄດ້ກວມເອົາ.

**INO: ການຍື່ນອຸທອນ - ການບໍ່ມີສິດຮັບຜົນປະໂຫຍດຕ່າງໆ - ປະກັນໄພທີ່ກວມເອົາຄ່າໃຊ້ຈ່າຍໃນການດໍາລົງ ຊີວິດ**: ອີງຕາມຂໍ້ມູນທີ່ຜູ້ຍື່ນໃບສະເໜີໄດ້ສົ່ງມານັ້ນ ປະກັນໄພທີ່ຜູ້ກ່ຽວມີຕໍ່ກັບເຮືອນຂອງຜູ້ກ່ຽວນັ້ນໄດ້ຈັດຕຽມກອງ ທຶນເພື່ອໃຊ້ໃນການເຊົ່າທີ່ພັກຊົ່ວຄາວ ໃນຂະນະທີ່ກໍາລັງປົວແປງເຮືອນຊານຢູ່. ພວກເຮົາບໍ່ໄດ້ຮັບເອກະສານໃດໆທີ່ ສະແດງວ່າຜູ້ຮ້ອງຂໍໄດ້ໃຊ້ເງິນທີ່ກໍາລັງຖືກຈັດຕຽມໄວ້ໃຫ້ນັ້ນໝົດໄປໃນການເຊົ່າທີ່ພັກອາໄສຊົ່ວຄາວ ຫຼື ບໍລິສັດ ປະກັນໄພມີຄວາມຊັກຊ້າໃນການອະນຸມັດດົນກວ່າ 30 ມື້ ຈາກມື້ທີ່ຜູ້ຮ້ອງຂໍໄດ້ຍື່ນເອກະສານຮຽກຮ້ອງສິດຕ່າງໆ. ດ້ວຍເຫດນີ້, ຄໍາອຸທອນຈາກຜູ້ຮ້ອງຂໍແມ່ນຈະຖືກປະຕິເສດ ແລະ ຜູ້ກ່ຽວຈະບໍ່ສາມາດໄດ້ຮັບຄວາມຊ່ວຍເຫຼືອໃນການ ເຊົ່າທີ່ພັກຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໄດ້.

**INO: ການບໍ່ມີສິດຮັບຜົນປະໂຫຍດຕ່າງໆ - ບໍ່ແມ່ນພົນລະເມືອງທີ່ຖືກຕ້ອງຕາມກົດໝາຍ**: ປະກາດແຈ້ງການ ຫຼື ຮ່າງເອກະສານທີ່ຖືກພິມເຜີຍແຜ່ທີ່ມີລົງລາຍເຊັນແລ້ວ (90-69B) ແມ່ນມີຄວາມຕ້ອງການກ່ອນທີ່ ອົງການ ຄວບຄຸມ ໄພສຸກເສີນລັດຖະບານກາງ (FEMA) ຈະສາມາດພິຈາລະນາໃຫ້ແກ່ຜູ້ຮ້ອງຂໍເພື່ອຮັບເອົາການຊ່ວຍເຫຼືອໃດໆ ທີ່ ຜູ້ກ່ຽວອາດຈະມີສິດໄດ້ຮັບຜົນປະໂຫຍດ. ອີງຕາມການບັນທຶກຂອງພວກເຮົາ ຜູ້ຍື່ນຂໍຄໍາຮ້ອງແມ່ນບໍ່ໄດ້ສະແດງຕົນ ວ່າຕົວເອງເປັນສະມາຊິກຄອບຄົວຂອງຜູ້ທີ່ຖືສັນຊາດອາເມລິກາ, ພົນລະເມືອງຖາວອນທີ່ບໍ່ຖືສັນຊາດອາເມລິກາ, ຫຼື ຊາວຕ່າງຊາດທີ່ມີຄຸນນະວຸດທິ. ດ້ວຍເຫດນີ້, ຜູ້ຮ້ອງຂໍຈຶ່ງບໍ່ໄດ້ຮັບສິດຜົນປະໂຫຍດໃນການຊ່ວຍເຫຼືອຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

**INO: ການບໍ່ມີສິດຮັບຜົນປະໂຫຍດຕ່າງ - ບໍ່ມີການພິສູດໄດ້ວ່າເປັນເຈົ້າຂອງຊັບສິນແທ້**: ບັນທຶກຂອງເຮົາໄດ້ສະ ແດງໃຫ້ເຫັນວ່າຜູ້ຮ້ອງຂໍບໍ່ໄດ້ພິສູດວ່າຜູ້ກ່ຽວເປັນເຈົ້າຂອງບ່ອນໃນຂະນະທີ່ເກີດມະຫັນຕະໄພ. ດ້ວຍເຫດນີ້, ຜູ້ຍື່ນຄໍາ ຮ້ອງບໍ່ມີສິດໄດ້ຮັບຄວາມຊ່ວຍເຫຼືອໃນການປົວແປງ ແລະ ປ່ຽນເຮືອນໄດ້.

**INONV- ຜູ້ບໍ່ມີສິດ- ຜູ້ທີ່ຍັງບໍ່ທັນໄດ້ຮັບການຢັ້ງຢືນ:** ເມື່ອຜູ້ຮ້ອງຂໍຍື່ນເອກະສານຕໍ່ອົງການ ຊ່ວຍເຫຼືອຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຜູ້ກ່ຽວຕ້ອງແຈ້ງຕໍ່ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ວ່າເຮືອນ ທີ່ໄດ້ຮັບຄວາມເສຍຫາຍ ຈາກ ໄພພິບັດເຊິ່ງເປັນສະຖານທີ່ຫຼັກທີ່ຜູ້ກ່ຽວດຳລົງຊີວິດຢູ່ໃນປີນັ້ນ. ໃນຄະນະທີ່ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໄປສຳຫຼວດນັ້ນ, ຜູ້ຮ້ອງຂໍບໍ່ສາມາດຕອບສະໜອງເອກະສານທີ່ຢັ້ງຢືນ ໃຫ້ຮູ້ວ່າເຮືອນທີ່ພວກເຮົາໄດ້ສຳຫຼວດ ແມ່ນສະຖານທີ່ທີ່ຜູ້ກ່ຽວອາໄສຢູ່. ຈົນກ່ວາພວກເຮົາຈະພິສູດ ໄດ້ວ່າຜູ້ຮ້ອງຂໍອາໄສຢູ່ຕາມທີ່ຢູ່ທີ່ສະເໜີຂຶ້ນມາ, ຜູ້ຮ້ອງຂໍບໍ່ມີສິດທີ່ຈະຂໍການຊ່ວຍເຫຼືອເຮືອນ ຊານຈາກອົງການຄວບຄຸມໄພສຸກເສີນລັດຖະບານກາງ.

**INR: ການບໍ່ມີສິດຮັບຜົນປະໂຫຍດ - ບໍ່ມີການຍ້າຍອອກຈາກບ່ອນຢູ່:** ອີງຕາມການບັນທຶກຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຜູ້ຍື່ນຄຳຮ້ອງໄດ້ບອກກັບຜູ້ສັງເກດການຕີລາຄາຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແລ້ວ ວ່າຜູ້ກ່ຽວຈະບໍ່ຍ້າຍອອກຈາກເຮືອນຂອງເຂົາທີ່ຖືກທຳລາຍໃນຂະນະທີ່ມີການການສ້ອມແປງເຮືອນຢູ່ນັ້ນ. ໃນເມື່ອຜູ້ຍື່ນໃບສະເໜີບໍ່ໄດ້ມີແຜນທີ່ຈະຍ້າຍໜີ, ຜູ້ກ່ຽວກໍ່ຈະບໍ່ໄດ້ຮັບສິດໃດໆໃນການຊ່ວຍເຫຼືອຄ່າເຊົ່າເຮືອນຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໃນເວລານັ້ນ.

**INS: ການບໍ່ມີສິດຮັບຜົນປະໂຫຍດ - ປະກັນ (ໂດຍທີ່ບໍ່ມີການສັງເກດຕີລາຄາ)** ອີງຕາມການບັນທຶກຂອງພວກເຮົາ, ເຮືອນທີ່ຜູ້ຍື່ນຄຳຮ້ອງອາໄສຢູ່ໃນເວລາທີ່ເກີດມະຫັນຕະໄພນັ້ນແມ່ນໄດ້ມີປະກັນໄພຄວບຄຸມ. ການເສຍຫາຍໃດໆທີ່ຖືກແຈ້ງໃນຂະນະທີ່ຍື່ນຄຳຮ້ອງຂໍການຊ່ວຍເຫຼືອຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຄວນຖືກຮັບຜິດຊອບໂດຍບໍລິສັດປະກັນໄພຂອງຜູ້ກ່ຽວ. ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ບໍ່ສາມາດສະໜອງການຊ່ວຍເຫຼືອໃດໆທີ່ມີໃຫ້ຈາກບ່ອນອື່ນເຊິ່ງລວມທັງປະກັນໄພ. ສະນັ້ນ ຜູ້ຍື່ນຄຳ ຮ້ອງຈະບໍ່ມີສິດໄດ້ຮັບການຊ່ວຍເຫຼືອໃນການສ້ອມແປງ ຫຼື ທົດແທນເຮືອນຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໃນກໍລະນີນີ້. ຜູ້ສະເໜີຄວນຮ່າງໃບຮ້ອງຂໍສິດຕ່າງໆກັບບໍລິສັດປະກັນໄພທີ່ຕົນເຮັດຢູ່ນຳໄວເທົ່າທີ່ຈະໄວໄດ້ເພື່ອວ່າ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ອາດຈະສາມາດຊ່ວຍເຫຼືອໃນການສູນເສຍຕ່າງໆທີ່ບໍ່ໄດ້ລວມໃນປະກັນໄພ.

**IOVR: ການບໍ່ມີສິດຮັບຜົນປະໂຫຍດ - ເກີນກຳໜົດຂອງແຜນທີ່ວາງໄວ້:** ອີງຕາມການບັນທຶກຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ຈຳນວນການຊ່ວຍເຫຼືອສູງສຸດຂອງທາງການເງິນ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແມ່ນໄດ້ຖືກຕຽມໄວ້ໃຫ້ແກ່ຜູ້ຮ້ອງຂໍເອົາຄວາມຕ້ອງການທາງດ້ານຟື້ນຟູບູລະນະເຮືອນຊານ ແລະ ຈາກການທຳລາຍຂອງມະຫັນຕະໄພ. ດ້ວຍເຫດນີ້ຜູ້ສະເໜີແມ່ນບໍ່ໄດ້ຮັບສິດໃນການຮັບເອົາມູນຄ່າເພີ່ມເຕີມທາງການເງິນຈາກການຊ່ວຍເຫຼືອຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

**ISC: ການບໍ່ມີສິດຮັບຜົນປະໂຫຍດ - ຊຸມຊົນທີ່ມີທ່າອ່ຽງໃນການຖືກມະຫັນຕະໄພ ຢູ່ໃນ SFHA:** ອີງຕາມການບັນທຶກຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ເຮືອນທີ່ຖືກທຳລາຍໂດຍອຸທົກກະໄພ ແມ່ນຕັ້ງຢູ່ໃນຂົງເຂດທີ່ເກີດມີນ້ຳຖ້ວມໄດ້ງ່າຍ ເຊິ່ງຢູ່ໃນຊຸດຊົນທີ່ບໍ່ໄດ້ເຂົ້າຮ່ວມໃນໂຄງການປະກັນໄພນ້ຳຖ້ວມແຫ່ງຊາດ, ເນື່ອງຈາກວ່າເຮືອນທີ່ຖືກອຸທົກກະໄພທຳລາຍແມ່ນຖືກຕັ້ງຢູ່ບ່ອນທີ່ມີຄວາມສ່ຽງເປັນພິເສດໃນການເກີດນ້ຳຖ້ວມ ແລະ ຊຸມຊົນຂອງຜູ້ຍື່ນໃບຄຳຮ້ອງບໍ່ໄດ້ເຂົ້າ ຮ່ວມ ໂຄການປະກັນໄພອຸທົກກະໄພແຫ່ງຊາດ, ອົງການ ຄວບຄຸມໄພ

ສຸກເສີນລັດຖະບານກາງ (FEMA) ແມ່ນບໍ່ໄດ້ຖືກອະນຸຍາດໃຫ້ມອບການຊ່ວຍເຫຼືອທາງດ້ານປົວແປງເຮືອນຊານ ແລະ ປ່ຽນແທນເຮືອນໃຫ້ໃໝ່ໄດ້ໃນກໍລະນີນີ້.

**NCOMP: ບໍ່ມີການຮ້ອງທຸກຕໍ່ກັບຄວາມຕ້ອງການປະກັນໄພ**: ອີງຕາມບັນທຶກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຜູ້ຮ້ອງຂໍມີຄວາມຕ້ອງການທີ່ຈະມີປະກັນຄຸ້ມຄອງອຸທົກກະໄພໄວ້ໃຫ້ແກ່ຊັບສິນຕ່າງໆ. ເນື່ອງຈາກວ່າເຮືອນທີ່ຖືກທຳລາຍຈາກອຸທົກກະໄພ ແລະ ຜູ້ຍື່ນຄຳຮ້ອງບໍ່ມີນະໂຍບາຍປະກັນໄພອຸທົກກະໄພທີ່ມີຜົນບັງຄັບໃຊ້ໄດ້ ທີ່ໄດ້ຮັບການຮັບຮອງຈາກຈາກໂຄງການປະກັນໄພອຸທົກກະໄພແຫ່ງຊາດ, ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ບໍ່ສາມາດຈັດຫາການສ້ອມແປງ ຫຼື ປ່ຽນແທນໃຫ້ໃນກໍລະນີນີ້. ເຖິງຢ່າງໃດກໍ່ຕາມ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ອາດຈະສາມາດມອບການຊ່ວຍເຫຼືອໃນການເຊົ່າເຮືອນຢູ່ ຖ້າຫາກຜູ້ສັງເກດການໄດ້ສຶກສາຕີລາຄາ ວ່າເຮືອນຫຼັງດັ່ງກ່າວບໍ່ປອດໄພ ແລະ ຜູ້ຮ້ອງຂໍຕ້ອງການຍ້າຍບ່ອນຢູ່ໃນຂະນະທີ່ມີການສ້ອມແປງ.

**WVO: ສະຫຼະສິດ - ຜູ້ຍື່ນຄຳຮ້ອງສະໝັກໃຈສະຫຼະສິດ:** ອີງຕາມການບັນທຶກຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ຜູ້ຍື່ນຄຳຮ້ອງສາມາດສະແດງຕົນວ່າຜູ້ກ່ຽວບໍ່ຕ້ອງການຄວາມຊ່ວຍເຫຼືອຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ດ້ວຍເຫດນີ້, ຜູ້ຍື່ນຄຳຮ້ອງຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຕໍ່ກັບການຊ່ວຍເຫຼືອທາງດ້ານມະຫັນຕະໄພຈະຖືກສະຫຼະສິດ.

## 2. ການຕັດສິນໃຈຂອງການຍື່ນອຸທອນ

**A-I69B - ການຍື່ນອຸທອນ - ການບໍ່ມີສິດໃນການຮັບຜົນປະໂຫຍດ - ບໍ່ມີການລົງລາຍເຊັນ (90-69B)** ອີງຕາມຂໍ້ມູນຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA), ບໍ່ມີສັນຍາ ຫຼື ເອກະສານທີ່ພິມເຜີຍແຜ່ໃດໆທີ່ຈະນຳມາປະກອບໃຫ້ແກ່ຜູ້ຮ້ອງຂໍໄດ້. ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ສາມາດຈັດຫາການຊ່ວຍເຫຼືອໄດ້ໃນກໍລະນີທີ່ຮ່າງເອກະສານ 90-69B ໄດ້ຖືກລົງລາຍເຊັນ, ລົງວັນທີ ແລະ ເຂົ້າສູ່ຂັ້ນຕອນເທົ່ານັ້ນ.

**A-IAW - ການຍື່ນອຸທອນ - ການບໍ່ມີສິດໄດ້ຮັບຜົນປະໂຫຍດ. ທີ່ຢູ່ຄືກັນ**: ໃນສະບັບທີ່ແລ້ວ ພວກເຮົາໄດ້ອະທິບາຍເຖິງການບັນທຶກທີ່ສະແດງໃຫ້ເຫັນວ່າໃນຂະນະທີ່ເກີດມີມະຫັນຕະໄພນັ້ນ ຜູ້ຮ້ອງຂໍໄດ້ອາໄສຢູ່ໃນທີ່ດຽວກັນກັບຜູ້ທີ່ຍື່ນຄຳຮ້ອງຂໍການຊ່ວຍເຫຼືອໃນການປົວແປງເຮືອນຊານກັບ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແລ້ວ. ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໄດ້ທົບທວນຄືນຕໍ່ກັບຄຳຮ້ອງດັ່ງກ່າວ ແລະ ເອກະສານປະກອບອື່ນໆທີ່ໄດ້ຕິດຂັດມາ ແລະ ຍັງບໍ່ສາມາດບົ່ງໄດ້ວ່າຜູ້ຮ້ອງຂໍອາໄສຢູ່ທີ່ທີ່ຢູ່ຕ່າງໆກັນກັບຜູ້ທີ່ໄດ້ຍື່ນໄວ້ແລ້ວ. ດ້ວຍເຫດນີ້, ຄຳອຸທອນນີ້ແມ່ນບໍ່ສາມາດຖືກຮັບຮອງໄດ້ ແລະ ຜູ້ຮ້ອງຂໍ ບໍ່ສາມາດໄດ້ຮັບສິດໃນການຮັບເອົາການຊ່ວຍເຫຼືອຕໍ່ກັບການປົວແປງເຮືອນຂອງຜູ້ກ່ຽວຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

**A-IID - ການຍື່ນອຸທອນ - ການບໍ່ໄດ້ຮັບສິດຜົນປະໂຫຍດ - ຄວາມເສຍຫາຍທີ່ບໍ່ພຽງພໍ - ເຈົ້າຂອງ**: ໃນສະບັບແລ້ວນີ້ ພວກເຮົາໄດ້ອະທິບາຍໃຫ້ເຫັນວ່າ ຜູ້ຍື່ນຄຳຮ້ອງບໍ່ສາມາດໄດ້ຮັບສິດໃນການຊ່ວຍເຫຼືອປົວແປງເຮືອນຊານຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໄດ້ເພາະວ່າເມື່ອ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ສັງເກດຕີລາຄາເຮືອນນັ້ນມັນໄດ້ຖືກປະເມີນວ່າເປັນມະຫັນຕະໄພທີ່ບໍ່ໄດ້ສົ່ງຜົນກະທົບໃຫ້ແກ່ເຮືອນຜູ້ທີ່ຍື່ນຄຳຮ້ອງວ່າບໍ່ມີຄວາມປອດໄພທີ່ຈະອາໄສຢູ່ໄດ້. ການປະເມີນຜົນນີ້ແມ່ນຂຶ້ນກັບຜົນເສຍຫາຍຕໍ່ກັບເຮືອນຊານທີ່ມີສ່ວນກ່ຽວຂ້ອງກັບມະຫັນຕະໄພເທົ່ານັ້ນ. ພວກເຮົາໄດ້ອະທິບາຍໃຫ້ເຫັນວ່າເຖິງແມ່ນວ່າມະຫັນຕະໄພອາດຈະກໍ່ໃຫ້ເກີດຄວາມ

ເສຍຫາຍເລັກນ້ອຍບາງຢ່າງ ມັນກໍ່ສົມເຫດສົມຜົນທີ່ຈະຄາດຫວັງວ່າຜູ້ຮ້ອງຂໍ ຫຼື ເຈົ້າຂອງເຮືອນທີ່ພວກເຂົາອາໄສຢູ່ຈະເປັນຜູ້ສ້ອມແປງທັງໝົດ. ພວກເຮົາໄດ້ບິ່ງເອກະສານທີ່ນໍາໄປຢືນຢັນເພື່ອສະແດງວ່າຄວາມເສຍຫາຍຕໍ່ກັບເຮືອນ ດັ່ງກ່າວແມ່ນເນື່ອງມາຈາກມະຫັນຕະໄພ ແລະ ໄດ້ສິ່ງຜົນເຖິງເງື່ອນໄຂຕ່າງໆເຊັ່ນ: ບໍ່ມີຄວາມປອດໄພ ຫຼື ບໍ່ສາມາດອາໄສຢູ່ໄດ້. ພວກເຮົາໄດ້ທວນຄືນຄໍາອຸທອນ ແລະ ຄົ້ນຄວ້າຕີລາຄາວ່າການຕັດສິນໃຈເບື້ອງຕົ້ນແມ່ນຖືກຕ້ອງ. ເຮືອນທີ່ບໍ່ໄດ້ຮັບຜົນກະທົບຈາກການສູນເສຍເນື່ອງຈາກມະຫັນຕະໄພ ທີ່ກໍ່ໃຫ້ເກີດຄວາມບໍ່ປອດໄພ ສໍາລັບຜູ້ຮ້ອງຂໍທີ່ຈະອາໄສຢູ່ພາຍຫຼັງມະຫັນຕະໄພ.

**A–IIDV ການຍື່ນອຸທອນ- ການບໍ່ມີສິດໄດ້ຮັບຜົນປະໂຫຍດ- ການບົ່ງໂຕຜູ້ຍື່ນຄໍາຮ້ອງ ຜິດພາດ**: ໃນສະບັບ ທີ່ແລ້ວ ພວກເຮົາໄດ້ອະທິບາຍໃຫ້ເຫັນວ່າ ພວກເຮົາຕ້ອງການຂໍ້ ມູນເພີ່ມ ເຕີມເພື່ອນໍາມາ ບົ່ງໂຕຜູ້ ຍື່ນຄໍາຮ້ອງກ່ອນທີ່ພວກເຮົາຈະສາມາດຈະພິຈາລະນາ ຄໍາຮ້ອງເພື່ອການຮັບເອົາການຊ່ວຍເຫຼືອທາງດ້ານ ມະຫັນຕະໄພໄດ້ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແມ່ນຖືກຮຽກຮ້ອງ ໃຫ້ບົ່ງລະອຽດຂໍ້ມູນທີ່ຖືກລະບຸລົງໃນໃບຄໍາຮ້ອງ ແລະ ພວກເຮົາບໍ່ສາມາດ ນໍາເອົາຊື່ ແລະ ບັດປະກັນສັງຄົມ ຂອງຜູ້ຮ້ອງຂໍມາບົ່ງ ວ່າຖືກກັບໄດ້ພວກເຮົາໄດ້ລະບຸເອກະສານທີ່ສໍາຄັນໃນການບົ່ງໂຕ ພວກເຮົາໄດ້ທົບທວນຄືນຄໍາອຸທອນ ຂອງ ຜູ້ຮ້ອງຂໍ ແລະ ເອກະສານເພີ່ມເຕີມທີ່ຕິດຄັດມາ ແລະ ກໍ່ຍັງບໍ່ສາມາດບົ່ງລັກສະນະຂອງຜູ້ກ່ຽວໄດ້ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ບໍ່ສາມາດມອບການຊ່ວຍເຫຼືອໃດໆໃຫ້ກັບບຸກຄົນໃດໜຶ່ງໂດຍປາດສະຈາກການບົ່ງຊີ້ຕົວຕົນຢ່າງລະອຽດ ສະນັ້ນ ຄໍາອຸທອນ ນີ້ແມ່ນຈະບໍ່ໄດ້ຮັບ ການອະນຸມັດ ແລະ ພວກເຮົາກໍ່ບໍ່ສາມາດດໍາເນີນການຕໍ່ກັບຄໍາຮ້ອງໃນຂັ້ນຕໍ່ໄປໄດ້ ໃນກໍລະນີ ດັ່ງກ່າວ.

**A-IMI- ການຍື່ນອຸທອນ-ການບໍ່ມີສິດໄດ້ຮັບຜົນປະໂຫຍດ-ການບໍ່ໄດ້ເຂົ້າຮ່ວມໃນການ ສັງເກດຕີລາຄາ**
ໃນສະບັບກ່ອນພວກເຮົາໄດ້ອະທິບາຍ ວ່າເພື່ອທີ່ຈະຖືກພິຈາລະນາ ຮັບເອົາການຊ່ວຍເຫຼືອປົວແປງເຮືອນຊານຈາກອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຜູ້ຍື່ນໃບສະເໜີ (ຫລືສະມາຊິກ ອື່ນໆ ທີ່ອາໄສຢູ່ໃນເຮືອນຫຼັງດັ່ງກ່າວ ທີ່ມີອາຍຸເກີນ 18) ຕ້ອງມີໜ້າ ເຂົ້າໃນ ການສັງ ເກດຕີລາຄາເພື່ອບັນທຶກຄວາມເສຍຫາຍທີ່ຈະເກີດຈາກມະຫັນຕະໄພ ທີ່ມີຕໍ່ ເຮືອນ ຊານ ແລະ ການບັນທຶກ ຂອງພວກເຮົາໄດ້ສະແດງໃຫ້ເຫັນວ່າຜູ້ຮ້ອງຂໍບໍ່ໄດ້ມາຕາມນັດໃນການພົບກັບຜູ້ສັງເກດຕີລາຄາຄື: ຜູ້ຍື່ນໃບສະເໜີ ໄດ້ຕິດຕໍ່ກັບສາຍດ່ວນຮ້ອງທຸກ ແລະ ຜູ້ສັງເກດຕີລາຄາ ອື່ນໆ ຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ເພື່ອໄດ້ຖືກຈັດຕັ້ງມາເກັບກໍາການ ເສຍ ຫາຍຂອງເຮືອນ. ທັງນີ້ຜູ້ທີ່ຍື່ນໃບຄໍາຮ້ອງຂໍ ແມ່ນບໍ່ສາມາດມາຕາມນັດດ້ວຍເຫດ ນັ້ນພວກ ເຂົາຈຶ່ງບໍ່ສາມາດທໍາການ ຊ່ວຍເຫຼືອໃດໆໃຫ້ແກ່ຜູ້ຮ້ອງຂໍ.

**A-INCI ການຍືນອຸທອນ-ການບໍ່ມີສິດໄດ້ຮັບຜົນປະໂຫຍດການສັງເກດຕີລາ ຄາທີ່ບໍ່ ສາມາດມາ ຕິດຕໍ່ພົວພັນໄດ້.**
ໃນສະບັບທີ່ແລ້ວ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໄດ້ອະທິບາຍໄວ້ວ່າ ເພື່ອທີ່ຈະ ໄດ້ຮັບການຊ່ວຍ ເຫຼືອຜູ້ຍື່ນ ຄໍາພິຈາລະນາໃຫ້ການຮ້ອງ (ຫລື ສະມາຊິກຄອບຄົວທີ່ ມີອາຍຸເກີນ 18ປີ) ຕ້ອງມາພົບກັບຜູ້ສັງເກດການຕີລາຄາເພື່ອເກັບກໍາຂໍ້ ມູນທີ່ກ່ຽວຂ້ອງກັບການເສຍຫາຍຈາກມະຫັນຕະໄພທີ່ເກີດຂຶ້ນກັບເຮືອນ ຂອງຜູ້ກ່ຽວ ແລະ ຜູ້ສັງເກດຕີລາຄາຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ບໍ່ສາມາດ ຕິດຕໍ່ຜູ້ຮ້ອງຂໍໄດ້ເພື່ອເຮັດການນັດພົບຜູ້ຮ້ອງຂໍ ຕິດຕໍ່ສາຍດ່ວນຮ້ອງທຸກ ແລະ ຜູ້ສັງເກດການຕີລາຄາອື່ນໆຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ທີ່ຖືກມອບໝາຍໃຫ້ມາເກັບກໍາເອົາຂໍ້ມູນ ທີ່ກ່ຽວຂ້ອງຂອງເຮືອນຜູ້ກ່ຽວຫຼັງຈາກໄດ້ມີການທົດລອງຕິດຕໍ່ຫຼາຍເທື່ອ, ຜູ້ສັງເກດຕີລາຄາ ສະນັ້ນ ພວກເຮົາຈະບໍ່ສາມາດໃຫ້ຊ່ວຍເຫຼືອໃດໆ ແກ່ຜູ້ຍື່ນຄໍາຮ້ອງໄດ້.

---

ສາຍດ່ວນບັນເທົາທຸກດ້ານໄພທໍາມະຊາດຂອງອົງການ ຄວບຄຸມໄພສຸກເສີນລັດຖະບານກາງ: 1-800-621-3362 (FEMA) ແຈ້ງຄວາມເສຍຫາຍ ໂທ-1-800-462-7585

**A-INFI ການຍື່ນອຸທອນການບໍ່ມີສິດໄດ້ຮັບຜົນປະໂຫຍດ-ການບໍ່ສາມາດຊໍາລະປະກັນໄພອຸທົກກະໄພ ຫລື ໜັງສືທີ່ບໍ່ໄດ້ຮັບອະນຸມັດ** ໃນສະບັບກ່ອນ ພວກເຮົາໄດ້ອະທິບາຍວ່າ ຜູ້ຍື່ນຄໍາຮ້ອງບໍ່ສາມາດຮັບສິດ ໃນການຮັບເອົາຄວາມຊ່ວຍເຫຼືອໃນການສ້ອມແປງເຮືອນຊານ ຫລື ທົດແທນບ່ອນຢູ່ໃຫ້ໄດ້ ເພາະວ່າ ຜູ້ສະເໜີທີ່ຮັບປະກັນ ອຸທົກກະໄພ ແລ້ວພວກເຮົາບົ່ງເອກະສານທີ່ສາ ມາດນໍາສົ່ງເພື່ອອຸທອນຕໍ່ການອະນຸມັດ ໄດ້ເຮົາກໍ່ຍັງບໍ່ສາມາດບົ່ງໄດ້ວ່າ ວົງເງິນປະກັນທີ່ຜູ້ກ່ຽວຈະໄດ້ຮັບມີເທົ່າໃດ ດ້ວຍເຫດນີ້ການຍື່ນອຸທອນ ແມ່ນຈະບໍ່ໄດ້ຮັບການອະນຸມັດ ແລະ ຜູ້ຍື່ນຄໍາຮ້ອງຈະບໍ່ສາມາດມີສິດຮັບເອົາການຊ່ວຍເຫຼືອປົວແປງເຮືອນຊານຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

**A-INI, A-INS ການຍື່ນອຸທອນ-ການບໍ່ມີສິດໄດ້ຜົນປະໂຫຍດ-ການບໍ່ສາມາດຊໍາລະປະກັນໄພອຸທົກກະໄພ ຫຼື ໜັງສືທີ່ບໍ່ໄດ້ຮັບອະນຸມັດ**: ຢູ່ໃນສະບັບຜ່ານມາ ພວກເຮົາໄດ້ອະທິບາຍໄວ້ວ່າ ຜູ້ຍື່ນຄໍາຮ້ອງ ບໍ່ສາມາດມີສິດຮັບເອົາການຊ່ວຍເຫຼືອ ໃນການສ້ອມແປງ ແລະ ທົດແທນທີ່ພັກເພາະຜູ້ກ່ຽວ ມີປະກັນໄພ ໃຫ້ແກ່ເຮືອນຂອງຕົນແລ້ວ. ເອກະສານຍັງໄດ້ບົ່ງອີກວ່າ ຜູ້ຍື່ນຄໍາຮ້ອງສາມາດຍື່ນອຸທອນ ເພື່ອການພິຈາລະນາຈາກພວກເຮົາໄດ້ ພວກເຮົາໄດ້ສັງລວມຄືນເອກະສານຕ່າງໆທີ່. ຜູ້ຍື່ນຄໍາຮ້ອງໄດ້ປະກອບມາ ແລະ ພວກເຮົາກໍ່ບໍ່ສາມາດດໍາເນີນການຕາມຄໍາອຸທອນໄດ້ເພາະວ່າພວກເຮົາບໍ່ໄດ້ຮັບເອກະສານທີ່ບົ່ງເຖິງການບໍ່ໄດ້ຮັບຄ່າຊົດເຊີຍຈາກປະກັນໄພ ຫຼື ເອກະສານປະຕິເສດການຈ່າຍປະກັນໄພ. ຖ້າຜູ້ຍື່ນຄໍາຮ້ອງມີຄໍາຖາມໃດໆກ່ຽວຂ້ອງກັບເອກະສານທີ່ຍັງຕ້ອງການພວກເຂົາຄວນຕິດຕໍ່ສາຍດ່ວນຮ້ອງທຸກຂອງອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

**A-INO- ການຍື່ນອຸທອນ - ການບໍ່ມີສິດໄດ້ຮັບສິດຜົນປະໂຫຍດ - ຫຼັງຈາກກໍານົດ 60 ມື້**: ໃນສະບັບທີ່ແລ້ວພວກເຮົາໄດ້ອະທິບາຍວ່າ ເອກະສານອຸທອນທີ່ຈະໄດ້ຮັບການພິຈາລະນາຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ອັນໃດກໍ່ຕາມ ຈະຕ້ອງຖືກສົ່ງມາພາຍໃນ 60ມື້ ຂອງການອອກເອກະສານອະນຸມັດ. ຜູ້ຮ້ອງຂໍບໍ່ໄດ້ຍື່ນຄໍາອຸທອນຈົນເຖິງ 60ມື້ ທີ່ກໍານົດໄວ້. ສະນັ້ນ, ຄໍາອຸທອນທີ່ຈະບໍ່ໄດ້ຮັບການພິຈາລະນາ ຖ້າບໍ່ມີເງື່ອນໄຂໃດໜຶ່ງຕໍ່ໄປນີ້ເປັນອຸປະສັກໃນການຮັບພິຈາລະນາຄໍາອຸທອນຂອງຜູ້ຮ້ອງຂໍ: 1) ການເຈັບປ່ວຍເຂົ້າໂຮງໝໍ, ການລົ້ມປ່ວຍ, ພິການ, ຫຼື ການຕາຍຢ່າງກະທັນຫັນ ຂອງສະມາຊິກຄອບຄົວ, 2) ການເດີນທາງໄປເຮັດວຽກ ຫຼື ເດີນທາງເປັນການສ່ວນບຸກຄົນທີ່ເຮັດໃຫ້ຜູ້ຍື່ນຄໍາຮ້ອງບໍ່ໄດ້ຢູ່ໃນທ້ອງຖິ່ນໃນຊ່ວງເວລາທັງໝົດ ຂອງການຍື່ນຄໍາອຸທອນ. ຖ້າຜູ້ຍື່ນຄໍາຮ້ອງຕ້ອງການໃຫ້ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ພິຈາລະນາຄໍາອຸທອນ, ຜູ້ຍື່ນຄໍາຮ້ອງອາດສົ່ງໜັງສືອະທິບາຍ ຫຼື ເອກະສານ ອື່ນໆທີ່ກ່ຽວຂ້ອງທີ່ສາມາດນໍາມາສະແດງຢ່າງຈະແຈ້ງວ່າເປັນຫຍັງ ຜູ້ຍື່ນຄໍາຮ້ອງບໍ່ສາມາດຍື່ນຄໍາຮ້ອງໃນຊ່ວງເວລາທີ່ກໍານົດໄວ້.

**A-INO- ການຍື່ນອຸທອນ - ການບໍ່ມີສິດໄດ້ຮັບສິດຜົນປະໂຫຍດ - ການຊໍາລະຄ່າປະກັນທີ່ມີການເສຍຫາຍເກີນກວ່າ FEMA. ກໍານົດໄວ້**: ແບບແຜນການສ້ອມແປງເຮືອນທີ່ໄດ້ຮັບຄວາມເສຍຫາຍຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ແມ່ນມີຂໍ້ຈໍາກັດໂດຍມີແຕ່ການສ້ອມແປງທີ່ຈໍາເປັນເທົ່ານັ້ນ ເຊິ່ງຕ່າງຈາກການປະກັນໄພຂອງເອກກະຊົນ. ສະນັ້ນ ກໍ່ເປັນເລື່ອງປົກກະຕິທີ່ການຊໍາລະຄ່າປະກັນໄພຈະເກີນກວ່າ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ສາມາດໃຫ້ການຊ່ວຍເຫຼືອໃນການສ້ອມແປງເນື່ອງຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ບໍ່ສາມາດໃຫ້ການຊ່ວຍເຫຼືອ ທີ່ຊໍ້າກັບປະກັນໄພໄດ້, ເອກະສານຍື່ນອຸທອນຂອງຜູ້ຮ້ອງຂໍຈະບໍ່ໄດ້ຮັບການອະນຸມັດ.

**A- INO- ການຍື່ນອຸທອນ - ການບໍ່ມີສິດໄດ້ຮັບສິດຜົນປະໂຫຍດ - ຜູ້ທີ່ບໍ່ແມ່ນພົນລະເມືອງທີ່ຖືກຕ້ອງຕາມກົດໝາຍ** : ຢູ່ໃນສະບັບກ່ອນ, ພວກເຮົາໄດ້ອະທິບາຍໄວ້ວ່າ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ບໍ່ສາມາດພິຈາລະນາໃນການໃຫ້ການຊ່ວຍເຫຼືອຕໍ່ຜູ້ຮ້ອງຂໍໄດ້ ເພາະພວກເຂົາອາດມີສິດໄດ້ຮັບສິດຕ່າງໆຈົນກະທັ່ງພວກເຂົາໄດ້ສະແດງສັນຍາ ແລະ ຮ່າງເອກະສານທີ່ໄດ້ພິມເຜີຍແຜ່ (90-69B) ເພື່ອບອກວ່າພວກເຂົາ ຫຼື ສະມາຊິກຄອບຄົວຂອງ

ພວກເຂົາແມ່ນເປັນສັນຊາດ ອາເມລິກາ, ພົນລະເມືອງທີ່ອາໄສຢູ່ຖາວອນແຕ່ບໍ່ໄດ້ຖືສັນຊາດ, ຫຼື ຊາວຕ່າງດ້າວທີ່ມີຄຸນນະອຸດທິ. ພວກເຮົາຍັງແນະນຳຕື່ມວ່າ ຜູ້ຍື່ນຄຳຮ້ອງຕ້ອງໄດ້ປະກອບຮ່າງເອກະສານ ແລະ ສະເໜີມາຍັງພວກເຮົາ. ພວກເຮົາໄດ້ຄົ້ນຄວ້າຄືນຕໍ່ກັບການຍື່ນອຸທອນຂອງຜູ້ຂຽນຄຳຮ້ອງ ແລະ ເອກະສານຕ່າງໆທີ່ຕິດຂັດມາ ແລະ ພວກເຮົາຍັງບໍ່ສາມາດຕັດສິນໄດ້ວ່າຜູ້ຍື່ນຄຳຮ້ອງ ຫຼື ສະມາຊິກຂອງເຮືອນນັ້ນແມ່ນສັນຊາດ ອາເມລິກາ, ພົນລະເມືອງຜູ້ທີ່ອາໄສຢູ່ຖາວອນແຕ່ບໍ່ໄດ້ຖືສັນຊາດ, ຫຼື ຊາວຕ່າງດ້າວທີ່ມີຄຸນນະວຸດທິພຽງພໍ. ສະນັ້ນ, ເອກະສານອຸທອນຂອງຜູ້ຮ້ອງຂໍຈະບໍ່ໄດ້ຮັບການອະນຸມັດ ແລະ ພວກເຂົາຈະບໍ່ໄດ້ຮັບການພິຈາລະນາເພື່ອຮັບເອົາການຊ່ວຍເຫຼືອຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

**A-INO- ການຍື່ນອຸທອນ - ການບໍ່ມີສິດໄດ້ຮັບສິດຜົນປະໂຫຍດ - ກຳມະສິດທີ່ບໍ່ມີການພິສູດຮັບຮອງ:** ໃນສະບັບແລ້ວນັ້ນ, ພວກເຮົາໄດ້ອະທິບາຍວ່າຜູ້ຍື່ນສະເໜີບໍ່ໄດ້ມີການຮັບຮອງວ່າຜູ້ກ່ຽວເປັນເຈົ້າຂອງເຮືອນຫຼັງທີ່ເສຍຫາຍໃນເວລາທີ່ເກີດມີມະຫັນຕະໄພ. ພວກເຮົາໄດ້ບົ່ງວ່າເອກະສານທີ່ຜູ້ຮ້ອງຂໍສາມາດຍື່ນໄດ້ແມ່ນຕ້ອງສະແດງເຖິງຄວາມເປັນເຈົ້າຂອງຢ່າງແທ້ຈິງຂອງເຮືອນທີ່ຖືກເສຍຫາຍ. ພວກເຮົາໄດ້ຄົ້ນຄ້ວາຄືນຄຳອຸທອນຂອງຜູ້ສະເໜີ ແລະເອກະສານຕ່າງທີ່ຕິດຂັດມາ, ແຕ່ເຖິງແນວໃດກໍ່ຕາມ ພວກເຮົາກໍ່ຍັງບໍ່ສາມາດບົ່ງໄດ້ວ່າຜູ້ຍື່ນໃບຄຳຮ້ອງແມ່ນເຈົ້າຂອງເຮືອນຢ່າງແທ້ຈິງ. ສະນັ້ນ, ໜັງສືອຸທອນຈະບໍ່ທັນໄດ້ຖືກອະນຸມັດ ແລະ ຜູ້ຍື່ນຄຳຮ້ອງຈະບໍ່ສາມາດໄດ້ຮັບສິດຜົນປະໂຫຍດຕໍ່ກັບການຊ່ວຍເຫຼືອໃນການສ້ອມແປງ ຫຼື ທົດແທນບ່ອນຢູ່ຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

**A-INO- ການຍື່ນອຸທອນ - ການບໍ່ມີສິດໄດ້ຮັບສິດຜົນປະໂຫຍດ - ການບໍ່ ສາມາດຊົດໃຊ້ຄືນຄ່າເຊົ່າທີ່ເກີນຈຳນວນທີ່ໄດ້ຖືກອານຸມັດແລ້ວ:** ກ່ອນໜ້ານີ້ພວກເຮົາໄດ້ອະທິບາຍວ່າ ຈຳນວນຄ່າເຊົ່າລາຍເດືອນທີ່ຈະໄດ້ຮັບຈາກການຊ່ວຍເຫຼືອຂອງອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ແມ່ນອີງຕາມຈຳນວນຂອງຫ້ອງນອນພາຍໃນເຮືອນຂອງຜູ້ຍື່ນຄຳຮ້ອງໃນເວລາທີ່ເກີດມະຫັນຕະໄພ ແລະ ການຊ່ວຍເຫຼືອນີ້ແມ່ນຖືກຈຳກັດຕາມຄ່າເຊົ່າທີ່ຄິດໄລ່ໃຫ້ໂດຍ ອົງການຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ແລະ ກົມພັດທະນາຕົວເມືອງ ແລະ ບ່ອນພັກພາອາໄສຂອງ ອາເມລິກາ (U.S. Department of Housing and Urban Development – HUD). ພວກເຮົາໄດ້ຄົ້ນຄ້ວາຄືນຕໍ່ກັບເອກະສານອຸທອນຂອງຜູ້ສະເໜີ ແລະ ຂໍ້ມູນເພີ່ມເຕີມທີ່ຕິດຂັດມາ. ພວກເຮົາໄດ້ຄິດໄລ່ວ່າອັດຕາຄ່າເຊົ່າປະຈຳເດືອນທີ່ພວກເຮົາໄດ້ຈ່າຍໃຫ້ແກ່ຜູ້ຍື່ນຄຳຮ້ອງແມ່ນເປັນຈຳນວນທີ່ເໝາະສົມ. ສະນັ້ນ, ຄຳອຸທອນຈຶ່ງບໍ່ຖືກພິຈາລະນາ ແລະ ພວກເຮົາກໍ່ບໍ່ສາມາດຈ່າຍຄ່າເຊົ່າລາຍເດືອນທີ່ເກີນກວ່າກຳນົດໄວ້ໃຫ້ທ່ານໄດ້.

**A-INONV - ການຍື່ນອຸທອນ - ການບໍ່ມີສິດໄດ້ຮັບສິດຜົນປະໂຫຍດ - ການຢູ່ອາໄສທີ່ບໍ່ສາມາດພິສູດໄດ້:** ໃນສະບັບແລ້ວນັ້ນ, ພວກເຮົາໄດ້ອະທິບາຍວ່າ ພວກເຮົາ ບໍ່ສາມາດພິສູດໄດ້ວ່າເຮືອນຫຼັງທີ່ຜູ້ຍື່ນໃບສະເໜີລາຍງານວ່າມີການເສຍຫາຍຈາກ ມະຫັນຕະໄພແມ່ນເປັນເຮືອນທີ່ຜູ້ກ່ຽວໄດ້ພັກອາໄສຢູ່. ພວກເຮົາໄດ້ຄົ້ນຄວ້າຄືນຕໍ່ກັບຄຳອຸທອນຂອງຜູ້ຮ້ອງຂໍ ແລະ ເອກະສານເພີ່ມເຕີມທີ່ຕິດຂັດມາ ແລະ ພວກ ເຮົາກໍ່ຍັງ ບໍ່ສາມາດພິສູດໄດ້ວ່າເຮືອນທີ່ຜູ້ຮ້ອງຂໍລາຍງານມານັ້ນແມ່ນ ບ່ອນທີ່ຜູ້ກ່ຽວໄດ້ອາໄສຢູ່. ດ້ວຍເຫດນັ້ນ, ຄຳອຸທອນຂອງຜູ້ຮ້ອງຂໍແມ່ນຈະບໍ່ໄດ້ຮັບການອະນຸມັດ ແລະ ພວກເຂົາກໍ່ບໍ່ມີສິດຮັບເອົາການຊ່ວຍເຫຼືອປົວແປງເຮືອນຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ໄດ້.

**A-IOVR - ການຍື່ນອຸທອນ - ວົງເງິນເກີນກວ່າແຜນທີ່ວາງໄວ້:** ໃນສະບັບທີ່ແລ້ວນີ້, ພວກເຮົາໄດ້ອະທິບາຍວ່າຜູ້ຮ້ອງຂໍບໍ່ສາມາດໄດ້ຮັບສິດຜົນປະໂຫຍດເພີ່ມເຕີມໃນການຊ່ວຍເຫຼືອຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ເພາະວ່າວົງເງິນສູງສຸດຂອງການຊ່ວຍເຫຼືອ ຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ແມ່ນໄດ້ຖືກອະນຸມັດໃຫ້ແກ່ຄວາມຕ້ອງການໃນການປຸ່ງແປງເຮືອນຂອງຜູ້ກ່ຽວແລ້ວ. ພວກເຮົາໄດ້ຄົ້ນຄວ້າສັງລວມຄືນຕໍ່ກັບຄຳອຸທອນ ແລະ ເອກະສານເພີ່ມເຕີມທີ່ຕິດຂັດມາ. ບັນທຶກຂອງພວກເຮົາກໍ່ຍັງສະແດງໃຫ້ເຫັນວ່າຜູ້ຍື່ນຄຳຮ້ອງ ໄດ້ຮັບເອົາການຊ່ວຍເຫຼືອທີ່ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ໄດ້ກຳນົດໄວ້ໃຫ້ຢ່າງສຸດແລ້ວ.

ສະນັ້ນ, ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ບໍ່ສາມາດສະໜອງການຊ່ວຍເຫຼືອເພີ່ມເຕີມໃຫ້ແກ່ຜູ້ຍື່ນໃບສະເໜີໄດ້.

**A-ISC- ການຍື່ນອຸທອນ - ການບໍ່ມີສິດໄດ້ຮັບສິດຜົນປະໂຫຍດ - ຊຸມຊົນທີ່ໄດ້ຖືກອະນຸຍາດໃຫ້ຢູ່ໃນ SFHA**: ໃນສະບັບທີ່ແລ້ວນີ້, ພວກເຮົາໄດ້ອະທິບາຍໃຫ້ແກ່ຜູ້ຍື່ນເອກະສານ ວ່າຈະບໍ່ໄດ້ຮັບສິດໃນການຮັບເອົາການຊ່ວຍເຫຼືອໃນການປົວແປງ ຫຼື ທົດແທນບ່ອນຢູ່ ເພາະວ່າເຮືອນຫຼັງດັ່ງກ່າວແມ່ນຖືກຕັ້ງຢູ່ໃນເຂດທີ່ມັກມີນ້ຳຖ້ວມຢູ່ໃນຊຸມຊົນນັ້ນ, ເຊິ່ງໃນຂະນະນັ້ນບໍ່ໄດ້ເຂົ້າຮ່ວມໃນໂຄງການປະກັນໄພອຸທົກກະໄພແຫ່ງຊາດ (NFIP). ເອກະສານຍັງໄດ້ເວົ້າເພີ່ມເຕີມກ່ຽວກັບໜັງສືທີ່ຜູ້ຮ້ອງຂໍສາມາດສົ່ງມາຮ້ອງຂໍໃຫ້ພວກເຮົາພິຈາລະນາ. ພວກເຮົາໄດ້ຄົ້ນຄ້ວາຄືນຕໍ່ກັບຄຳອຸທອນ ແລະ ເອກະສານເພີ່ມເຕີມທີ່ໄດ້ຂັດຕິດມາ. ຂໍ້ມູນພວກເຮົາຍັງໄດ້ສະແດງໃຫ້ເຫັນວ່າເຮືອນຂອງຜູ້ຮ້ອງຂໍແມ່ນຕັ້ງຢູ່ບ່ອນທີ່ສ່ຽງຕໍ່ນ້ຳຖ້ວມ ແລະ ຜົນເສຍຫາຍທີ່ໄດ້ເກີດຂຶ້ນຕໍ່ກັບເຮືອນແມ່ນເກີດມາຈາກອຸທົກກະໄພ.ສະນັ້ນ, ຄຳອຸທອນນີ້ແມ່ນຈະບໍ່ໄດ້ຮັບການພິຈາລະນາ ແລະ ຜູ້ຮ້ອງຂໍກໍ່ບໍ່ມີສິດໄດ້ຮັບເອົາການຊ່ວຍເຫຼືອ ເພື່ອປົວແປງເຮືອນຊານຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA).

**A-NCOMP - ການຍື່ນອຸທອນ - ບໍ່ມີການຮ້ອງຂໍຕໍ່ກັບຄວາມຕ້ອງການໃນການຮັບເອົາປະກັນໄພອຸທົກກະໄພ**: ໃນສະບັບແລ້ວນີ້, ພວກເຮົາໄດ້ອະທິບາຍໃຫ້ເຫັນວ່າຜູ້ຍື່ນຄຳຮ້ອງແມ່ນບໍ່ມີສິດໄດ້ຮັບການຊ່ວຍເຫຼືອ ຕໍ່ການປົວແປງ ແລະທົດແທນບ່ອນຢູ່ຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ໄດ້ເພາະວ່າ ພວກເຂົາບໍ່ໄດ້ສືບຕໍ່ເຮັດການຮຽກຮ້ອງເອົາປະກັນອຸທົກກະໄພໃຫ້ແກ່ຊັບສິນຂອງພວກເຂົາ. ເນື່ອງຈາກວ່າພວກເຂົາບໍ່ໄດ້ຮັບເອກະສານ ເພື່ອມາຢັ້ງຢືນວ່າ ເຮືອນຂອງພວກເຂົາບໍ່ໄດ້ມີການເສຍຫາຍຈາກອຸທົກກະໄພ ຫຼື/ແລະ ພວກເຂົາບໍ່ໄດ້ຮັບເອກະສານສະແດງວ່າຜູ້ຍື່ນຄຳຮ້ອງບໍ່ໄດ້ມີນະໂຍບາຍປະກັນໄພອຸທົກກະໄພ ຢ່າງຖືກຕ້ອງຕໍ່ກັບຊັບສິນຂອງພວກເຂົາ ຄຳອຸທອນນັ້ນກໍ່ຈະບໍ່ຖືກພິຈາລະນາ.

# ຕົວຢ່າງຂອງຟອມ ແຈ້ງປະກາດ ແລະ ຟອມປົດປ່ອຍ FEMA 90-69B

| | |
|---|---|
| ກົມຄວາມປອດໄພພົນລະເຮືອນ<br>ອົງການບໍລິຫານພະອະສຸກເສີນແຫ່ງລັດ<br>**ບົດບັນທຶກ ແລະ ຂໍ້ຕົກລົງ** | ***O.M.B. No. 1660-0002***<br>***ໝົດອາຍຸ ພຶດສະພາ 31, 2010*** |

**ບົດບັນທຶກ ແລະ ຂໍ້ຕົກລົງ**

ເພື່ອທີ່ຈະໄດ້ຮັບສິດຜົນປະໂຫຍດໃນການຮັບເອົາການຊ່ວຍເຫຼືອທາງດ້ານມະຫັນຕະໄພຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ສະມາຊິກຄົວເຮືອນຕ້ອງຖືສັນຊາດອາເມລິກາ, ເປັນພົນລະເມືອງຖາວອນທີ່ບໍ່ຖື ສັນ ຊາດອາເມລິກາ ຫຼືຊາວຕ່າງຊາດທີ່ມີຄຸນະວຸດທິຂອງປະເທດອາເມລິກາ. **ກະລຸນາອ່ານຮ່າງເອກະສານນີ້ໃຫ້ລະອຽດ, ເຊັນແລະສົ່ງຄືນໃຫ້ຜູ້ສັງເກດຕີລາຄາ, ແລະຕິດຂັດຮູບຖ່າຍຕິບັດປະຈຸບັນມາພ້ອມ**. ທ່ານສາມາດຕິດຕໍ່ສອບຖາມກັບທະນາຍຄວາມແລະຜູ້ຊ່ຽວຊານທາງການກວດຄົນເຂົາເມືອງ ໃນກໍລະນີທີ່ທ່ານມີຂໍ້ຂ້ອງໃຈ

ຂ້າພະເຈົ້າຂໍປະຕິຍານຕົນຮັບເອົາການລົງໂທດໃນກໍລະນີທີ່ຂ້າພະເຈົ້າໃຫ້ການບໍ່ຖືກຕ້ອງຕາມຄວາມຈິງດັ່ງຕໍ່ໄປນີ້:

- ☐ ຂ້າພະເຈົ້າແມ່ນຖືສັນຊາດຫຼື ເປັນພົນລະເມືອງຖາວອນຂອງປະເທດອາເມລິກາ
- ☐ ຂ້າພະເຈົ້າແມ່ນຊາວຕ່າງດ້າວທີ່ມີຄຸນນະວຸດທິຂອງປະອາເມລິກາ
- ☐ ຊຽນຊື່ເຕັມ ແລະ ອາຍຸຂອງເດັກນ້ອຍຜູ້ຕິດຕາມ: ຂ້າພະເຈົ້າແມ່ນພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກນ້ອຍຜູ້ທີ່ອາໄສຢູ່ຮ່ວມຊາຍຄາດຽວກັບຂ້າພະເຈົ້າ ແລະ ຖືສັນຊາດ, ເປັນພົນລະເມືອງຖາວອນຂອງປະເທດອາເມລິກາ ຫຼືແມ່ນຊາວຕ່າງດ້າວທີ່ມີຄຸນນະວຸດທິຂອງປະອາເມລິກາ. ຊຽນຊື່ເຕັມ ແລະ ອາຍຸຂອງ ເດັກນ້ອຍຜູ້ຕິດຕາມ: ________________________________

**ໂດຍການລົງຊື່ຂອງຂ້າພະເຈົ້າ ຂ້າພະເຈົ້າຂໍຢັ້ງຢືນວ່າ:**

* ໃບຄຳຮ້ອງໜຶ່ງສະບັບແມ່ນໃຊ້ຍື່ນໃຫ້ສະເພາະໜຶ່ງຄົວຮຽນເທົ່ານັ້ນ

* ທຸກຂໍ້ມູນທີ່ຂ້າພະເຈົ້າໄດ້ໃຫ້ໄປຢູ່ໃນໃບສະເໜີຂໍເອົາການຊ່ວຍເຫຼືອທີ່ກ່ຽວຂ້ອງກັບມະຫັນຕະໄພຂອງ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແມ່ນຖືກຕ້ອງຕາມຄວາມຈິງທຸກປະການ

* ຂ້າພະເຈົ້າຈະສົ່ງເງິນຊ່ວຍເຫຼືອຈາກມະຫັນຕະໄພຄັ້ງນີ້ ທີ່ໄດ້ຮັບມາຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຫຼືລັດຖະບານຖ້າຫາກຂ້າພະເຈົ້າໄດ້ຮັບເງິນປະກັນໄພ ຫຼືເງິນຊົດເຊີຍໃດໆທີ່ໄດ້ຮັບຈາກການສູນເສຍ, ຫຼືໃນກໍລະນີທີ່ຂ້າພະເຈົ້າບໍ່ໄດ້ໃຊ້ເງິນຊ່ວຍເຫຼືອຕາມທີ່ມີຈຸດປະສົງທີ່ຈະໃຊ້ໃນເບື້ອງຕົ້ນ

**ຂ້າພະເຈົ້າຮັບຮູ້ວ່າ**, ໃນກໍລະນີທີ່ຂ້າພະເຈົ້າຈົງໃຈໃຫ້ຄຳໃຫ້ການທີ່ບໍ່ເປັນຄວາມຈິງ ຫຼືປົກປິດຂໍ້ມູນໃດໆເພື່ອທີ່ຈະຮັບເອົາເງິນຊ່ວຍເຫຼືອ, ການກະທຳດັ່ງກ່າວຖືເປັນການຝ່າຝືນກົດໝາຍຂອງລັດ ແລະ ຂົງເຂດປົກຄອງ ເຊິ່ງອາດນຳມາສູ່ການກໍ່ອາດສະຍາກຳ ແລະຄວາມຜິດ ເຊິ່ງຈະມີຄ່າປັບໃໝເຖິງ $250,000.00, ຈຳຄຸກ ຫຼືທັງຈຳ ທັງປັບ (18 U.S.C. 287, 1001, ແລະ 3571).

**ຂ້າພະເຈົ້າຮັບຮູ້ວ່າ** ທຸກຂໍ້ມູນທີ່ຂ້າພະເຈົ້າໃຫ້ໄປໃນການສະເໜີຂໍ ເງິນຊ່ວຍເຫຼືອຈາກມະຫັນຕະໄພຄັ້ງນີ້ ທີ່ໄດ້ຮັບມາຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ອາດຈະຖືກແບ່ງປັນໃຫ້ແກ່ ກົມຄວາມປອດໄພພົນລະເຮືອນ ລວມທັງກົມກວດກາຄົນເຂົ້າເມືອງ ແລະ ກົດໝາຍພາສີຕ່າງໆ

**ຂ້າພະເຈົ້າຂໍມອບອຳນາດໃຫ້ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA)** ກວດສອບຄືນຂໍ້ມູນທີ່ຂ້າພະເຈົ້າໄດ້ໃຫ້ໄວ້ກ່ຽວກັບຊັບສິນ, ທີ່ຢູ່ອາໄສ, ລາຍໄດ້, ອາຊີບ ແລະ ຜູ້ທີ່ຢູ່ໃຕ້ຄວາມປົກຄອງຂອງຂ້າພະເຈົ້າ ເພື່ອໃຊ້ໃນການດຳເນີນການຂໍສິດໃນການຮັບເອົາການຊ່ວຍເຫຼືອຕ່າງໆ; ແລະ

**ຂ້າພະເຈົ້າຂໍອານຸຍາດ**ໃຫ້ຜູ້ເກັບກຳ ຂໍ້ມູນຂອງຂ້າພະເຈົ້າໃນດ້ານປະກັນໄພ, ອາຊີບ, ພາກລັດແລະເອກະຊົນ, ທະນາຄານ ແລະ ຂໍ້ມູນສິນເຊື່ອ ໃຫ້ເປີດເຜີຍຂໍ້ ມູນເຫຼົ່ານີ້ຕໍ່ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແລະ ພາກລັດຕາມການຮ້ອງຂໍ

| ຊື່ແຈ້ງ | ລາຍເຊັນ | ວັນເດືອນປີເກີດ | ວັນທີລົງລາຍເຊັນ |
|---|---|---|---|
| ເລກບັດປະຈຳຕົວຂອງຜູ້ສັງເກດຕີລາຄາ | ໃບສະເໜີຂອງ FEMA ເລກທີ່ | ມະຫັນຕະໄພລົງທະບຽນເລກທີ່ | |

| ທີ່ຢູ່ທີ່ປະສົບໄພ | ເມືອງ | ລັດ | ລະຫັດໄປສະນີ |
|---|---|---|---|

**ເນື້ອໃນກົດໝາຍສ່ວນບຸກຄົນ**

ກົດໝາຍວ່າດ້ວຍ ການບັນເທົາທຸກຈາກມະຫັນຕະໄພ ແລະ ການຊ່ວຍເຫຼືອແບບສຸກເສີນ 42 USC 5121-5206, ຄຳ ສັ່ງເລກທີ່ 12148, ທີ່ໄດ້ປັບປຸງແລ້ວ, ແລະ ຂໍ້ IV ຂອງກົດໝາຍທີ່ວ່າດ້ວຍ ຄວາມຮັບຜິດຊອບສ່ວນບຸກຄົນ ແລະ ໄກ່ເກ່ຍໂອກາດທາງວຽກງານ ປີ 1996, 8 USC 1601, ໄດ້ມີຜົນບັງຄັບໃຊ້ຕໍ່ຂໍ້ມູນດັ່ງກ່າວ. ການນຳ ໃຊ້ຫຼັກຂອງຂໍ້ມູນນີ້ແມ່ນເພື່ອກວດສອບຄວາມເປັນໄປໄດ້ໃນການຮັບເອົາການຊ່ວຍເຫຼືອຈາກມະຫັນຕະໄພຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA). ຂໍ້ມູນດັ່ງກ່າວອາດຖືກເຜີຍແຜ່: ຕາມການຮ້ອງຂໍທີ່ເປັນລາຍລັກອັກສອນ ຕໍ່ພາກລັດແລະພາກປົກຄອງທ້ອງຖິ່ນເພື່ອໃຫ້ການຊ່ວຍເຫຼືອ ນອກຈາກນັ້ນຍັງມີລັດຖະບານທ້ອງຖິ່ນຫຼືອົງການອາສາສະໝັກທີ່ທ່ານໄດ້ຂໍຄວາມຊ່ວຍເຫຼືອນຳ ສະນັ້ນການໃຫ້ການຊ່ວຍເຫືອກໍ່ຈະບໍ່ຊ້ຳ ຊ້ອນກັບອົງການ ແລະ ສະຖາບັນຕ່າງໆເຊິ່ງຈຳເປັນທີ່ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ຕ້ອງຮັບຮູ້ໃນການຊອກຫາໃຫ້ການຊ່ວຍເຫຼືອ, ຕໍ່ກັບລັດ ແລະ ພາກສ່ວນອົງການຈັດຕັ້ງທ້ອງຖິ່ນແມ່ນເພື່ອເປັນການຊຸກຍູ້ການວາງແຜນປ້ອງກັນມະຫັນຕະໄພຕ່າງໆ, ຕໍ່ກັບອົງກອນກົດໝາຍ ແລະ ວິຊາການຕ່າງໆແມ່ນເພື່ອເປັນການຊອກຫາການກະທຳ ທີ່ຜິດກົດໝາຍ, ຕໍ່ກັບລັດ ແລະ ພາກສ່ວນອົງການຈັດຕັ້ງທ້ອງຖິ່ນແມ່ນເພື່ອພວກເຮົາຕ້ອງການຂໍເອົາຂໍ້ມູນທີ່ກ່ຽວຂອງຕໍ່ກັບການຕັດສິນໃຈຂອງອົງການທີ່ພົວພັນກັບເງິນທົດແທນ ແລະ ຜົນຕອບແທນຈາກປະກັນໄພ, ຫຼືອີກຢ່າງໜຶ່ງກໍ່ຄືໃນກໍລະນີອົງກອນຂອງລັດຕ້ອງການຂໍ້ມູນທີ່ມີຈຸດປະສົງທີ່ຄ້າຍຄືກັນຈາກພວກເຮົາ, ຕໍ່ກັບຫ້ອງຫານສະພາເພື່ອທີ່ຈະຕອບຄຳ ຖາມຕ່າງໆຕາມຄຳຮ້ອງຂໍຂອງບຸກຄົນ, ຕໍ່ກັບຫ້ອງການບໍລິຫານແລະງົບປະມານ (DMB) ທີ່ກ່ຽວຂ້ອງກັບນິຕິບັນຍັດບັນເທົາທຸກສ່ວນບຸກຄົນພາຍໃຕ້ເງື່ອນໄຂຂອງ DMB A-19; ແລະຕໍ່ກັບຫ້ອງການບໍລິຫານເກັບກຳ ຂໍ້ມູນແຫ່ງຊາດທີ່ເກັບກຳ ການບໍລິຫານທາງດ້ານສັງເກດຕີລາຄາທີ່ຖືກນຳ ພາພາຍໃຕ້ການອະນຸຍາດຂອງ 44 USC, 2904 ແລະ 2906. ເລກສະຫວັດດີການສັງຄົມຂອງທ່ານແມ່ນຖືກນຳ ໃຊ້ໄດ້ໃນລະຫວ່າງຂັ້ນຕົ້ນຂອງການລົງທະບຽນໃນກົດໝາຍປັບປຸງການເກັບໜີ້ 1996, 31 USC, 3325 (d) ແລະ 7701 (C)(1). ການເພີ່ມເຕີມເລກປະກັນສັງຄົມແລະຂໍ້ມູນຕ່າງໆແມ່ນເປັນຄວາມສະໝັກໃຈ ແຕ່ຖ້າຫາກບໍ່ສາມາດສະໜອງຂໍ້ມູນໄດ້ແມ່ນອາດນຳ ໄປສູ່ການລ່າຊ້າ ຫຼືຕິດຂັດໃນການລົງມັດຕິໃຫ້ການຊ່ວຍເຫຼືອ.

**ໃຈຄວາມສຳ ຄັນຂອງເອກະສານທີ່ສາມາດເປີດເຜີຍໄດ້**

ເນື້ອໃນລາຍງານທີ່ພິມເຜີຍແຜ່ສຳ ລັບຮ່າງເອກະສານນີ້ແມ່ນມີຄວາມຍາວ 2 ນາທີ. ການຕີລາຄາໃຈຄວາມສຳ ຄັນແມ່ນລວມມີ ເວລາໃນການສຳ ພາດ, ເກັບກຳ ຂໍ້ມູນ, ຊຽນ ແລະ ສົ່ງຮ່າງເອກະສານ. ທ່ານບໍ່ຈຳ ເປັນທີ່ຈະຕອບຕາມຂໍ້ມູນເຫຼົ່ານີ້ຖ້າທ່ານບໍ່ມີ O.M.B. ທີ່ສະແດງໃຫ້ເຫັນຢູ່ແຈຟາກຂວາຂອງເອກະສານ. ສົ່ງຄຳ ເຫັນທີ່ກ່ຽວຂ້ອງກັບໃຈຄວາມຫຼັກທີ່ຖືກຕ້ອງແລະຕີລາຄາ. ຊີ້ນຳ ການຫຍໍ້ໃຈຄວາມສຳ ຄັນມາທີ່ ຫ້ອງການບໍລິຫານການເກັບກຳ ຂໍ້ມູນ, ກົມຄວາມປອດໄພພົນລະເຮືອນສະຫະລັດ, ອົງກອນບໍລິຫານເຫດສຸກເສີນແຫ່ງລັດ, ເຮືອນເລກທີ່ 500 ຖະໜົນ C, SW, Washington, DC 20472, ໂຄງການຫຼຸດຜ່ອນເອກະສານ (1660-0002). ໝາຍເຫດ: **ຫ້າມສົ່ງຮ່າງເອກະສານສົມບູນມາຍັງທີ່ຢູ່ນີ້.**

**ຟອມ FEMA 90-69B, ພຶດສະພາ 07** **ແທນໃສ່ໂຕເກົ່າ**

---

ສາຍດ່ວນບັນເທົາທຸກດ້ານໄພທຳມະຊາດຂອງFEMA: 1-800-621- FEMA (3362) ແຈ້ງຄວາມເສຍຫາຍ ໂທ-1-800-462-7585

ຖ້າຫາກທ່ານສົງໄສວ່າມີບຸກຄົນໃດທີ່ກຳ ລັງປອມໃບຄຳ
ຮ້ອງຂໍຄ່າຊົດເຊີຍທີ່ເກີດຈາກຄວາມເສຍຫາຍ, ໃຫ້ແຈ້ງສາຍ
ດ່ວນທີ່ກ່ຽວກັບການສໍ້ໂກງຂອງ ອົງການ ຄວບຄຸມໄພສຸກ
ເສີນລັດຖະບານກາງ (FEMA):

1-800-323-8603

ກະລຸນາຊ່ວຍ ອົງການ ຄວບຄຸມໄພສຸກເສີນລັດຖະບານ
ກາງ (FEMA) ໃຫ້ການຊ່ວຍເຫຼືອທາງດ້ານມະຫັນຕະ
ໄພໃຫ້ແກ່ຜູ້ທີ່ເໝາະສົມທີ່ຈະໄດ້ຮັບເທົ່ານັ້ນ.

ການປອມແປງເອກະສານຄຳ ຮ້ອງແມ່ນການຜ່າຝືນ
ກົດໝາຍຂອງລັດຖະບານ.

ການຊ່ວຍເຫຼືອຈາກ ອົງການ ຄວບຄຸມໄພສຸກເສີນລັດຖະບານກາງ (FEMA) ແມ່ນໄດ້ຈັດສັນໄວ້ໃຫ້ຜູ້ທີ່ປະສົບໄພ ຫຼື ຄົວເຮືອນທີ່ມີເງື່ອນໄຂໄດ້ຮັບສິດຜົນປະໂຫຍດ. ຫ້າມບໍ່ໃຫ້ມີພາກລັດຫຼືອົງການປົກຄອງທ້ອງຖິ່ນ (ຫຼືອົງການຍ່ອຍຂອງພວກເຂົາ) ມີສິດແບ່ງແຍກປິດກັ້ນໄດ້ຮັບສິດໂດຍການຢຽດສີຜິວ, ເຊື້ອຊາດ, ສີຜິວ, ສາດສະໜາ, ເພດ, ອາຍຸ, ຄວາມບໍ່ສົມປະກອບທາງຮ່າງກາຍ